# 占芭 ຈຳປາ




## ຍານອາວະກາດເຊິນໂຈວເປົ້ 7 ໄດ້ລົງສູ່ພາກພື້ນດິນຢ່າງບັນລຸຜົນນັກອາວະກາດກັບຄືນດ້ວຍຄວາມປອດໄພ

## ກອງປະຊຸມຄົບຄະນະຂອງພັກຄອມມູນິດຈີນຄັ້ງທີ3ສະໄໝທີ17ໄດ້ໄຂຂຶ້ນທີ່ປັກກິ່ງ

## ສ ປປ ລາວ ກ້າວເຂົ້າສູ່ສະຕະວັດທີ 21

ລາຄາ: 13000 ກີບ ¥10
ISSN 1673-3266
11/2008
ສະບັບທີ 39


ແສງດາວຂາຍປຶ້ມ
老挝万象向导书屋








ຮ້ານ ແສງດາວ ຂາຍປຶ້ມ
SENGDAO Book-store

# ແຈ້ງການ

**ກ່ຽວກັບການເຄື່ອນໄຫວ "ຈັດງານປະກວດຮ້ອງ ເພງຈີນ"**

ເພື່ອປະສານສົມທົບການຮຽນພາສາຈີນຂອງຜູ້ອ່ານວາ ລະສານ "ຈຳປາ" (ຈີນ) ແລະ ເພື່ອນມິດຊາວລາວຈຳນວນຫລວງ ຫລາຍໃຫ້ໄດ້ຮັບຜົນດີກວ່າເກົ່າ, ສະຖານເອກອັກຄະລັດຖະທູດຈີນ ປະຈຳລາວ ແລະສຳນັກງານວາລະສານ "ຈຳປາ" (ຈີນ) ຮ່ວມ ກັນເປັນເຈົ້າພາບຈັດໃຫ້ມີການເຄື່ອນໄຫວ "ງານປະກວດຮ້ອງ ເພງ ຈີນ" ຂຶ້ນ, ຈຶ່ງຂໍແຈ້ງການມາຍັງທ່ານຜູ້ອ່ານທັງຫລາຍດັ່ງຕໍ່ ໄປນີ້:

1. ເປົ້າໝາຍຂອງຜູ້ເຂົ້າຮ່ວມງານປະກວດ: ຜູ້ອ່ານວາລະສານ "ຈຳປາ" (ຈີນ), ຜູ້ທີ່ພວມຮຽນພາສາຈີນ ຢູ່ລາວ, ນັກຮຽນນັກສຶກສາ, ຊາວລາວຜູ້ມັກຮ້ອງເພງຈີນ, ຈີນ ຕ່າງດ້າວແລະ ຊາວລາວທີ່ມີເຊື້ອສາຍຈີນ.

2. ຫົວໜ່ວຍທີ່ຮັບການຈັດງານປະກວດ: ສະມາຄົມຈີນນະຄອນຫລວງວຽງຈັນ.

3. ເພງທີ່ເຂົ້າຮ່ວມການປະກວດ: ໂດຍເອົາຊື່ເພງໃນ ຄໍລຳ "ຮຽນຮ້ອງເພງຈີນ" ໃນເວັບໄຊ "ຈຳປາ" (ຈີນ) ແລະ ເພງໃນແຜ່ນສຽງທີ່ສຳນັກງານວາລະສານ "ຈຳປາ" ແຈກຢາຍນັ້ນເປັນຫລັກ.

4. ການຈັດຕັ້ງການປະກວດຮອບທຳອິດ ແລະ ຮອບຄັດເລືອກພ້ອມທັງສະຖານທີ່ຂອງການປະກວດໃຫ້ແຕ່ລະພາກສ່ວນ, ແຕ່ລະຫົວໜ່ວຍແລະແຕ່ລະທ້ອງຖິ່ນຮັບຜິດຊອບເອງ, ປະກວດເອົາຜູ້ເຂົ້າຮ່ວມການແຂ່ງຂັນຮ້ອງເພງໃນຮອບຄັດ ເລືອກ 30 ຄົນເພື່ອເຂົ້າຮ່ວມການປະກວດຊີງຊະນະເລີດ.

5. ເວລາປະກວດຊີງຊະນະເລີດ: ກາງເດືອນທັນວາ ປີ2008.

6. ສະຖານທີ່ປະກວດຊີງຊະນະເລີດ: ຫໍວັດທະນະທຳ ແຫ່ງຊາດທີ່ນະຄອນຫລວງວຽງຈັນ ສປປ ລາວ.

7. ມາດຕະຖານຂອງການໃຫ້ຄະແນນ: ອອກສຽງສຳ ນຽງຊັດ, ອອກສຽງໄດ້ມາດຕະຖານ, ອາລົມຈິດທີ່ສະແດງອອກ ສວຍງາມ, ວາດຊົງຢູ່ເທິງເວທີສະຫງ່າ.

8. ງານປະກວດຊີງຊະນະເລີດ ໂດຍແມ່ນສະຖານເອກອັກຄະລັດຖະທູດຈີນປະຈຳລາວ, ສຳນັກງານວາລະສານ "ຈຳປາ" (ຈີນ)ແລະ ຫົວໜ່ວຍຮັບຈັດງານປະກວດຮ່ວມກັນຈັດຕັ້ງຂຶ້ນ.

ຜ່ານການປະກວດຊີງຊະນະເລີດແລ້ວ, ສຸດ ທ້າຍປະກວດອອກຜູ້ໄດ້ລາງວັນ ທີ 1: 5 ຄົນ, ລາງວັນທີ 2: 10 ຄົນ ແລະ ລາງວັນທີ 3: 15 ຄົນ.ເງິນລາງວັນທີ 1: 500 ຢວນ, ລາງວັນທີ 2: 300 ຢວນ, ລາງວັນທີ 3: 200 ຢວນ.ຜູ້ທີ່ເຂົ້າຮ່ວມການປະກວດຊີງຊະນະເລີດທັງໝົດລ້ວນແຕ່ໄດ້ຂອງລະນຶກ 1 ອັນ. ໃນນັ້ນ, ຜູ້ທີ່ໄດ້ລາງວັນທີ 1 ຈະຖືກສຳນັກພິມວາລະສານ "ຈຳປາ" ເຊື້ອເຊີນເດີນທາງໄປທັດສະນະສຶກສາ ແລະ ທ່ຽວຊົມທີ່ຄຸນມິງ ແລະ ແຫ່ງອື່ນໆຂອງຈີນ, ຄ່າໃຊ້ຈ່າຍແມ່ນສຳນັກງານວາລະສານ "ຈຳປາ" (ຈີນ)ເປັນຜູ້ຮັບຜິດຊອບ, ຈຶ່ງແຈ້ງການມາເພື່ອຊາບ.

ໂທລະສັບຫາບທານ: 0086-871-8042591 ຜູ້ຕິດຕໍ່ພົວພັນ: ຊູເອີນເອີນ

00856-21-214661 ຜູ້ຕິດຕໍ່ພົວພັນ: ເພິງເຈີ້ນຮົວ

ວັນທີ 18 ມິຖຸນາ ປີ 2008

ສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ

ສຳນັກງານວາລະສານ "ຈຳປາ" ພາສາລາວ ແຫ່ງປະເທດຈີນ.

关于举办"学唱中文歌曲大赛"活动

## 公　告

为了更好地配合中国·《占芭》杂志读者和广大老挝朋友学习汉语，中国驻老挝大使馆、中国·《占芭》杂志社联合主办"学唱中文歌曲大赛"活动，现公告如下：

1. 参赛对象 ：中国·《占芭》杂志读者，老挝正在学习中文人员，青年学生，老挝中文歌曲爱好者，华人华侨。

2. 承办单位 ：老挝万象中华理事会。

3. 参赛歌曲 ：以中国·《占芭》网站"学唱中文歌曲"栏目中歌曲及杂志社发放的光盘歌曲为主要参赛曲目。

4. 初赛、复赛组织及地点由各系统、各单位、各地区负责，复赛后共选出 30 名选手参加决赛。

5. 决赛时间 ：2008 年 12 月中旬。

6. 决赛地点 ：老挝万象国家文化宫。

7. 评分标准 ：吐字清楚、发音准确，表情优美、台风庄重。

8. 决赛由中国驻老挝大使馆，中国·《占芭》杂志社，及承办单位共同组织。

通过大赛，最后决出一等奖 5 名，二等奖 10 名，三等奖 15 名。一等奖奖金人民币 500 元 ；二等奖奖金人民币 300 元 ；三等奖奖金人民币 200 元。凡参加决赛者均获纪念品一份。其中，一等奖获得者由中国·《占芭》杂志社邀请前往中国昆明等地观光考察，费用由《占芭》杂志社承担。

联系电话 ：0086—0871—8042591　联系人 ：苏雯雯

00856—21— 214661　联系人 ：彭正华

中华人民共和国驻老挝大使馆

中国·老挝文《占芭》杂志社

2008年7月

# ສາລະບານ

11/2008 ສະບັບທີ 39




ຍານອາວະກາດບັນທຸຄົນເຊີນໂຈວເປີ 7ຂອງຈີນ ຍິງຂຶ້ນສູ່ອາວະກາດ

中国神舟七号载人飞船发射升空　CFP 图












ເຈົ້າໜ້າທີ່ຄຸ້ມຄອງໂດຍ
ຫ້ອງການຂ່າວຄະນະລັດຖະບານສ ປຈີນ
ຈັດທຳໂດຍ
ສະມາຄົມແລກປ່ຽນວັດທະນະທຳກັບຕ່າງ
ປະເທດແຂວງຢູນນານສ ປຈີນ
ຮຽບຮຽງພິມຈຳໜ່າຍ
ສຳນັກພິມວາລະສານ 《ຈຳປາ》
ຫົວໜ້າບັນນາທິການ
ໄຊຊຸນແຊງ
ຫົວໜ້າບັນນາທິການບໍລິຫານ
ຢາງຢູນ
ຫົວໜ້າພິມຈຳໜ່າຍ
ຢູຍເຈີງຢູຍ
ຜູ້ຄຸ້ມງານບັນນາທິການ
ຫວາງວັນລີ
ບັນນາທິການປະຈຳ
ຊູເວີນເວີນ
ຜູ້ຄຸ້ມງານຝ່າຍສິລະປະ
ຈູ້ສິນ
ຜູ້ແປພາສາລາວ
ລາວລ້ານຊ້າງ. ລິວເຢີນເຫີ .ວຽງປະເສີດ
ບັນນາທິການອ່ານກວດ ພາສາລາວ
ລິວເຢີນເຫີ
ຜູ້ພິມດີດພາສາລາວ
ປາຍຢຽນ
ຜູ້ຄຸ້ມງານຝ່າຍອິນເຕີເນັດ
ຈາງເຊີຢີ
ບັນນາທິການຝ່າຍອິນເຕີເນັດ
ລີທາວ
ພະນັກງານຝ່າຍປົກຄອງ
ລູຢູຍ

ພິມຈຳໜ່າຍເປີດເຜີຍ:
　ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ:
　ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ:
　ISSN 1673–3266
ລະຫັດວາລະສານປະເທດຈີນ:
　CN53–1200/D
http://www.r ivermk.com
E–mail: ynzhanba@163.com

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

ສະຖານທີ່: ສວນດອກໄມ້ສຶກສາສາຍທາງຕໍ່ຖະ
　　ໜົນຊີຮວາ ນ.ຄ.ຄຸນໝິງ ຂວ.ຢູນນານ
ລະຫັດໄປສະນີ: 650228
ໂທ: 86-871-8042593
ແຟັກ: 86-871-8042591



主　　管：中华人民共和国国务院新闻办公室
主　　办：云南省对外文化交流协会
编辑出版：《占芭》杂志社
总 编 辑：蔡春生
执行总编辑：杨　云
总编室主任：禹正玉
编辑总监：王万里
责任编辑：苏雯雯
美术总监：祝　群
翻　　译：大　伟　刘仁和　汶巴塞
老挝文译审：刘仁和
老挝文录入：白　艳
网络总监：张守义
网络编辑：李　涛
编　　务：陆　蕊

发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D

广告经营许可证号 ：5300004000052

地址：云南省昆明市西华路延长线 教育花园三楼
编辑部电话：86-871-8042593
办公室电话：86-871-8042591
传真：86-871-8042591
邮编：650228

## ສາລະຄະດີພິເສດ 本刊特稿

04.ກອງປະຊຸມຄົບຄະນະຂອງພັກຄອມມູນິດຈີນຄັ້ງທີ3ສະໄໝທີ17 ໄດ້ໄຂຂຶ້ນທີ່ປັກກິ່ງ

12.ຍານອາວະກາດເຊີນໂຈວເປີ້ 7 ໄດ້ລົງສູ່ພາກພື້ນດິນຢ່າງບັນລຸຜົນນັກອາວະກາດກັບຄືນດ້ວຍຄວາມປອດໄພ

20.ສື່ມວນຊົນຕ່າງປະເທດໄດ້ຕີລາຄາການເດີນອາວະກາດຂອງເຊີນໂຈວເປີ້ 7 ຢ່າງຕັ້ງໜ້າ




## ປະຕູເມືອງຈີນ 中国之窗

22.30 ປີຜ່ານມາການຈະເລີນເຕີບໂຕຢ່າງໜ້າຊື່ນຊົມຂອງເສື້ອຜ້າອາພອນຈີນ

28.ການທ່ອງທ່ຽວຕີເບດໄດ້ເລີ່ມບາດກ້າວໃໝ່ທີ່ມີສະຖານະພາບອັນຈີບງາມ

30.ຈີນຈັດຕັ້ງປະຕິບັດ "ດຳລັດຈຳກັດປລາດສະຕິກ" ເພື່ອຫລຸດຜ່ອນ "ມົນລະພິດສີຂາວ"

32.ຈີນຜ່ານການຫັນເປັນແບບຂໍ້ມູນຂ່າວສານຊຸກຍູ້ການບູລະນະກໍ່ສ້າງສັງຄົມກົມກຽວກັນ

34.ກວາງໂຈວກ້າວເຂົ້າສູ່ການນັບເວຖອຍຫຼັງເອຊຽນເກມ.

## ຢູນນານທີ່ມີສະເໜ່ 魅力云南

38.ຖືຄົນເປັນກົກ ຢູນນານປະຕິບັດນະໂຍບາຍທີ່ມີຜົນປະໂຫຍດໃຫ້ປະຊາຊົນຫລາຍລາຍເພື່ອປົວແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ

40.ຢູນນານອອກແຮງກໍ່ສ້າງທາງນ້ຳຂົນສົ່ງອອກໄປຕ່າງແຂວງແລະອອກໄປຊາຍແດນ

41.ເສີມຂະຫຍາຍວັດທະນະທຳຈີນສືບທອດເຜີຍແຜ່ສີລະປະກຳພື້ນເມືອງ

42.ອົງການຄຸ້ມຄອງຄົນເຂົ້າອອກແດນຂອງພະແນກສັນຕິບານແຂວງຢູນນານຊຸກຍູ້ການນຳໃຊ້ມາດຕາການອຳນວຍຄວາມສະດວກແກ່ປະຊາຊົນຢ່າງຕັ້ງໜ້າ



## ຫຼຽວເບິ່ງອາຊຽນ 东盟瞭望

43.ໝາກໄມ້ອາຊຽນຈັບຈອງຕະຫລາດຈີນ ທ່າດ່ານກວາງຊີກາຍເປັນ "ຊ່ອງທາງປະຕູ"

## ເມືອງລາວໃນວັນນີ້ 今日老挝

44.ສ ປປ ລາວ ກ້າວເຂົ້າສູ່ສະຕະວັດທີ 21

## ການທ່ອງທ່ຽວທັດສະນາຈອນ 旅游纵横

48.ສະຫວັນເມືອງຄົນ-ຫັງເຝີງລ້າຍເກີ

52.ເວີຍຊີນ--ແຫຼ່ງທ່ອງທ່ຽວສີແດງ

## ລຽບຊົມວັດທະນະທຳ 文化博览

54.ຮູບປັ້ນຄົນດ້ວຍດິນຂອງຮູ້ຍຊ່ານສີລະປະທີ່ປານິດປະຕິຫານ

## ປະຊາຊາດຈີນ 中华民族

58.ເຜົ່າຊຸຍ-ຊົນເຜົ່າສ່ວນໜ້ອຍຂອງຈີນ

## ບໍລິການເພື່ອທ່ານ 为您服务

60.ການຍ່າງທາງໄກ-ກິລາເພື່ອສຸຂະພາບຈະເລີນໃໝ່

## ຮຽນພາສາຈີນ 学 汉 语

62.ຊົມໃບສີແດງຢູ່ໃນສວນພຶກສາຊາດ

## ນິທານສຸພາສິດ 成语故事

64.ເປີດຕຳລານີຜົນປະໂຫຍດ



ວັນທີ9-12ຕຸລາ,ກອງປະຊຸມຄົບຄະນະຂອງພັກຄອມມູນິດຈີນຄັ້ງທີ3ສະໄໝທີ17ໄດ້ໄຂຂຶ້ນທີ່ປັກກິ່ງ.ກົມການເມືອງສູນກາງພັກເປັນປະທານກອງປະຊຸມຄົບຄະນະນີ້.ທ່ານຮູຈິນທາວ ເລຂາທິການໃຫຍ່ຂອງສູນກາງພັກຄອມມູນິດຈີນໄດ້ກ່າວຄຳປາໄສທີ່ສຳຄັນໃນກອງປະຊຸມດັ່ງກ່າວນີ້.
中国共产党第十七届中央委员会第三次全体会议，于 10 月 9 日至 12 日在北京举行，全会由中央政治局主持。图为中共中央总书记胡锦涛在会上作重要讲话　新华社 图

# ກອງປະຊຸມຄົບຄະນະຂອງພັກຄອມມູນິດຈີນ ຄັ້ງທີ3ສະໄໝທີ17ໄດ້ໄຂຂຶ້ນທີ່ປັກກິ່ງ

## 中共十七届三中全会在北京举行

中国共产党第十七届中央委员会第三次全体会议，于2008年10月9日至12日在北京举行。全会全面分析了形势和任务，特别是经济形势，强调中国总体形势是好的，经济保持较快增长，金融业稳健运行，中国经济发展的基本态势没有改变。全会研究了新形势下推进农村改革发展的若干重大问题，认为在改革开放30周年之际，系统回顾总结中国农村改革发展的光辉历程和宝贵经验，进一步统一全党全社会认识，加快推进社会主义新农村建设，大力推动城乡统筹发展，对于全面贯彻党的十七大精神，深入贯彻落实科学发展观，夺取全面建设小康社会新胜利，开创中国特色社会主义事业新局面，具有重大而深远的意义。

ວັນທີ9ຫາວັນທີ 12 ຕຸລາປີ 2008,ກອງປະຊຸມຄົບຄະນະຂອງພັກຄອມມູນິດຈີນຄັ້ງທີ 3 ສະໄໝທີ 17 ໄດ້ໄຂຂຶ້ນທີ່ປັກກິ່ງ ເນື້ອໃນທີ່ສຳຄັນຂອງກອງປະຊຸມແມ່ນຄົ້ນຄວ້າເລັ່ງລັດບັນຫາປະຕິຮູບແລະພັດທະນາຊົນນະບົດຂອງຈີນ,ກົມການເມືອງສູນກາງພັກເປັນປະທານກອງປະຊຸມ.ທ່ານຮູຈິນທາວເລຂາທິການໃຫຍ່ຂອງສູນກາງພັກໄດ້ກ່າວຄຳປາໄສທີ່ສຳຄັນໃນກອງປະຊຸມດັ່ງກ່າວນີ້.

ກອງປະຊຸມຄົບຄະນະໄດ້ຮັບຟັງແລະອະພິປາຍຄຳລາຍງານວຽກງານຂອງທ່ານຮູຈິນທາວເຊິ່ງໄດ້ຮັບການມອບໝາຍຈາກກົມການເມືອງສູນກາງພັກແລະໄດ້ກວດສອບຮັບຮອງເອົາ《ຂໍ້ຕົກລົງຂອງສູນກາງພັກຄອມມູນິດຈີນກ່ຽວກັບບັນຫາສຳຄັນຕ່າງໆໃນການຊຸກຍູ້ການປະຕິຮູບແລະພັດທະນາຊົນນະບົດ》,ທ່ານຫູລຽງຢີໄດ້ອະທິບາຍກ່ຽວກັບຮ່າງ(ບົດຄົ້ນຄວ້າ)ຂອງຂໍ້ຕົກລົງຕໍ່ກອງປະຊຸມຄົບຄະນະດັ່ງກ່າວນີ້.

ກອງປະຊຸມໄດ້ຢືນຢັນວຽກງານຂອງກົມການເມືອງສູນກາງພັກນັບແຕ່ກອງປະຊຸມຄັ້ງທີ 1 ສະໄໝທີ 17 ເປັນຕົ້ນມາ,ມີຄວາມເຫັນເປັນເອກະພາບກັນວ່າ, ກົມການ ເມືອງສູນກາງພັກໄດ້ເສີມຂະຫຍາຍນ້ຳໃຈຂອງກອງປະຊຸມໃຫຍ່ຄັ້ງທີ 17 ຂອງພັກ ແລະກອງປະຊຸມຄັ້ງທີ 1,ຄັ້ງທີ 2 ສະໄໝທີ 17 ຂອງພັກ.ໄດ້ຊູຄັນທຸງອັນຍິ່ງໃຫຍ່ລັດທິສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃຫ້ສູງຂຶ້ນ,ຖືເອົາທິດສະດີເຕີ້ນສຽວຜີງແລະແນວຄິດ "າມຕົວແທນ" ປັນທິດຊີ້ນຳຜັນຂະຫຍາຍທັດສະນະພັດທະນະວິທະຍາສາດຢ່າງເລິກເຊິ່ງໃຫ້ປະກົດເປັນຈິງ,ປົດປ່ອຍແນວຄິດຢ່າງຕໍ່ເນື່ອງກັນ,ຍຶດໝັ້ນການປະຕິຮູບແລະເປີດປະຕູສູ່ພາຍນອກ,ຊຸກດັນການພັດທະນາວິທະຍາສາດ,ເລັ່ງລັດການປອງດອງກົມກ່ຽວທາງສັງຄົມ,ສາມັກຄີກັນ,ນຳພາທົ່ວພັກແລະທົ່ວປວງຊົນບັນດາເຜົ່າ,ກຳແໜ້ນກາລະໂອກາດໃນການພັດທະນາ,ຕັ້ງໜ້າຮັບມືກັບການປ່ຽນແປງອັນສັບສົນຂອງສະພາບການພາຍໃນປະເທດ ແລະນອກປະເທດ ແລະ ການທ້າທາຍຢ່າງໜັກໜ່ວງຈາກໄພທຳມະຊາດ,ສູ້ຊົນຍາດເອົາໄຊຊະນະຢ່າງໃຫຍ່ຫຼວງໃນການຕໍ່ສູ້ກັບໄພທຳມະຊາດທີ່ເກີດຈາກຫິມະຕົກນ້ຳໜອກກ້າມພາໃຫ້ອຸທະພູມຕ່ຳສຸດເກີດໄພທຳມະຊາດຢູ່ເຂດພາກໃຕ້ສ່ວນໜຶ່ງແລະການຕໍ່ສູ້ກູ້ໄພແຜ່ນດິນໄຫວຂະໜາດໃຫຍ່ເມືອງເວິນຊວນແຂວງເຊສວນຂອງຈີນ,ໄດ້ຈັດງານກິລາໂອລິມປິກປັກກິ່ງແລະງານກິລາໂອລິມປິກຄົນພິການປັກກິ່ງຢ່າງສຳເລັດຜົນ ແລະ ສຳເລັດໜ້າທີການເດີນອາວະກາດຂອງຍານອາວະກາດເຊີນໂຈວເບີ 7 ທີ່ບັນຈຸຄົນຢ່າງເຕັມເມັດເຕັມໜ່ວຍ.ຊຸກຍູ້ການສ້າງສາເສດຖະກິດສັງຄົມນິຍົມ,ການ ເມືອງ,ວັດທະນະທຳ,ສັງຄົມ ແລະ ການກໍ່ສ້າງພັກຢ່າງຮອບດ້ານແລະວຽກງານທຸກປະການກໍ່ໄດ້ຮັບການຄືບໜ້າໃໝ່,ສັງຄົມມີ ຄວາມສາມັກຄີ ແລະ ຄວາມເປັນສະຖຽນລະພາບ ກໍ່ໄດ້ຮັບການປັບປຸງແລະຂະຫຍາຍຕົວ.

ກອງປະຊຸມໄດ້ວິເຄາະສະຖານະການ ແລະ ພາລະໜ້າທີໂດຍສະເພາະແມ່ນສະຖານະການດ້ານເສດຖະກິດ.ເນັ້ນໜັກສະຖານະການລວມຂອງຈີນເປັນຢ່າງດີ.ດ້ານເສດຖະກິດຮັກສາການເພີ່ມຂຶ້ນຢ່າງໄວວາ,ກິດຈະກຳການເງິນການທະນາຄານຮັກສາການດຳເນີນງານຢ່າງແຂງແຮງ,ທ່ວງທ່າຕົ້ນຕໍໃນການພັດທະນາເສດຖະກິດບໍ່ມີການປ່ຽນແປງ.ປະຈຸບັນນີ້,ຈະຕ້ອງກຳແໜ້ນໜ້າທີນ້ຳເບີໜຶ່ງຂອງພັກກຳອຳນາດແມ່ນພັດທະນາປະເທດຊາດ ໃຫ້ວັດທະນາຖາວອນໂດຍຄວາມຕື່ນຕົວແລະໜຽວແໜ້ນ,ຊຸກຍູ້ ການພັດທະນາວິທະຍາສາດ,ຕັດສິນໃຈຢ່າງໝັ້ນໜຽວ,ສັງເກດເບິ່ງຢ່າງທຸ່ນທ່ຽງ,ຄວບຄຸມທຸກດ້ານ,ຕອບຮັບສະພາບຢ່າງມີປະສິດທິຜົນ,ນຳໃຊ້ແນວທາງນະໂຍບາຍເສດຖະກິດມະຫາພາບທີ່ພິກໄຫວຄ່ອງແຄ່ວ,ອອກແຮງຊຸກຍູ້ຄວາມຮຽກຮ້ອງຕ້ອງການພາຍໃນປະເທດ, ໂດຍສະເພາະແມ່ນຄວາມຮຽກຮ້ອງຕ້ອງການດ້ານການຊົມໃຊ້,ຮັກສາໄວ້ເສດຖະກິດ,ການເງິນການທະນາຄານ,ການຕະຫຼາດຫຼັກຊັບ ແລະ ສັງຄົມມີຄວາມສະຖຽນລະພາບ.ເຮັດວຽກການຮັບປະກັນແລະປົວແປງຊີວິດ

ການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ,ຊຸກຍູ້ການພັດທະນາເສດຖະກິດສັງຄົມໂດຍດີໂດຍໄວຢ່າງຕໍ່ເນື່ອງກັນ.

ກອງປະຊຸມໄດ້ຄົ້ນຄວ້າບັນຫາໃຫຍ່ຕ່າງໆທີ່ເລັ່ງລັດການປະຕິຮູບແລະພັດທະນາຊົນນະບົດຢູ່ໃຕ້ສະຖານະການໃໝ່.ເຫັນວ່າ,ເນື່ອງໃນໂອກາດປະຕິຮູບແລະເປີດປະຕູສູ່ພາຍນອກຄອບຮອບ 30 ປີ,ທົບທວນຄືນການຄືບໜ້າສະຫງ່າລາສີໃນການປະຕິຮູບແລະພັດທະນາຊົນນະບົດແລະສະຫລຸບບົດຮຽນອັນປະເສີດຢ່າງເປັນລະບົບ,ລວມຄວາມເຂົ້າໃຈກັນຂອງທົ່ວພັກ ແລະ ທົ່ວສັງຄົມເປັນເອກະພາບກັນຕື່ມອີກ,ເລັ່ງລັດການສ້າງສາຊົນນະບົດໃໝ່ສັງຄົມນິຍົມ,ອອກແຮງຊຸກຍູ້ການຈັດສັນພັດທະນາຕົວເມືອງແລະຊົນນະບົດເປັນເອກະພາບກັນ.ສຳລັບການເສີມຂະຫຍາຍນ້ຳໃຈຂອງກອງປະຊຸມໃຫຍ່ຄົບຄະນະຂອງພັກຄັ້ງທີ 17 ຢ່າງຮອບດ້ານ,ເສີມຂະຫຍາຍທັດສະນະພັດທະນາວິທະຍາສາດຢ່າງເລິກເຊິ່ງ ແລະ ປະກົດເປັນຈິງ,ຍາດເອົາໄຊຊະນະໃໝ່ແຫ່ງການກໍ່ສ້າງສັງຄົມຢູ່ດີກິນດີຢ່າງຮອບດ້ານ,ເປີດສະຖານະພາບໃໝ່ຂອງພາລະກິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໄດ້ມີຄວາມໝາຍສຳຄັນແລະກວ້າງໄກເລິກເຊິ່ງ.

ກອງປະຊຸມໄດ້ຊີ້ອອກວ່າ,ບັນຫາກະສິກຳ,ຊົນນະບົດ ແລະ ຊາວກະສິກອນແມ່ນກ່ຽວພັນເຖິງສະຖານະພາບລວມຂອງພັກແລະການພັດທະນາຂອງພາລະກິດບ້ານເມືອງເຮົາ. ຢູ່ໃນບັນດາໄລຍະປະຫວັດສາດເຮັດການປະຕິວັດ,ການສ້າງສາ ແລະ ປະຕິຮູບນັ້ນ,ພັກຄອມມູນິດຈີນຍຶດຖືຫຼັກສູດຕົ້ນຕໍຂອງລັດທິມາກປະສັນສົມທົບກັບພາກປະຕິບັດຕົວຈິງຂອງຈີນ,ໄດ້ຕັ້ງໜ້າເອົາໃຈໃສ່ແກ້ໄຂບັນຫາກະສິກຳ,ຊົນນະບົດແລະຊາວກະສິກອນຢ່າງສູງຢູ່ຕະຫລອດມາ,ໄດ້ເປີດເສັ້ນທາງໄຊຊະນະແຫ່ງການປະຕິວັດລັດທິປະຊາທິປະໄຕໃໝ່ແລະເສັ້ນທາງແຫ່ງການພັດທະນາພາລະກິດສັງຄົມນິຍົມຢ່າງສຳເລັດ. ປີ 1978,ກອງປະຊຸມຄົບຄະນະຂອງພັກຄັ້ງທີ 3 ສະໄໝທີ 11 ໄດ້ວາງແນວທາງນະໂຍບາຍລັກສະນະປະຫວັດສາດເຊິ່ງຫັນໃຈກາງວຽກງານຂອງພັກ ແລະ ລັດເຖິງການສ້າງສາເສດຖະກິດ,ປະຕິບັດນະໂຍບາຍປະຕິຮູບແລະເປີດປະຕູສູ່ພາຍນອກ.ພັກຄອມມູນິດຈີນກຳໄດ້ສະຖານະພາບລວມແຫ່ງການພັດທະນາພາຍໃນປະເທດ ແລະ ພາຍນອກປະເທດຢ່າງຮອບດ້ານ.ນັບຖືນ້ຳໃຈປະດິດຄິດສ້າງຂອງຊາວກະສິກອນ,ປຸກລະດົມດຳເນີນການປະຕິຮູບຢູ່ຊົນນະບົດກ່ອນກວ່າເພິ່ນແລະແຜ່ຂະຫຍາຍໄປທົ່ວປະເທດຢ່າງເປັນຂະບວນ,ນຳພາປະຊາຊົນຂຽນບົດໃໝ່ທີ່ສະຫງ່າລະສີແຫ່ງການປະຕິຮູບ ແລະ ພັດທະນາ.ປະສົບຜ່ານອັນຍິ່ງໃຫຍ່ແຫ່ງການປະຕິຮູບ ແລະ ພັດທະນາຊົນນະບົດໄດ້ປຸກລະດົມຄວາມມາລະພະຍາຍາມຂອງຊາວກະສິກອນເປັນລ້ານເປັນໂກດຂຶ້ນມາຢ່າງແຂງແຮງ,ໄດ້ປົດປ່ອຍແລະພັດທະນາກຳລັງການຜະລິດໃນສັງຄົມຊົນນະບົດຢ່າງໃຫຍ່ຫລວງ.ປ່ວແປງຊີວິດການເປັນຢູ່ດ້ານວັດຖຸ ແລະ ວັດທະນະທຳຂອງຊາວກະສິກອນໃຫ້ດີຂຶ້ນຢ່າງໃຫຍ່.ສິ່ງທີ່ສຳຄັນກວ່າໝູ່ແມ່ນພາກປະຕິບັດຕົວຈິງອັນຍິ່ງໃຫຍ່ແຫ່ງການປະຕິຮູບແລະພັດທະນາຊົນນະບົດເພື່ອສ້າງຕັ້ງລະບອບເສດຖະກິດຕົ້ນຕໍໃນໄລຍະຕົ້ນສັງຄົມນິຍົມຈີນແລະກົນໄກເສດຖະກິດຕະຫລາດສັງຄົມນິຍົມໃຫ້ສົມບູນຄົບຖ້ວນໄດ້ດຳເນີນການສືບຄົ້ນລັກສະນະປະດິດຄິດສ້າງ,ໄດ້ອຸດທິກຳລັງອັນໃຫຍ່ຫຼວງເພື່ອບັນລຸເຖິງຄວາມຄືບໜ້າທາງປະຫວັດສາດເຊິ່ງແມ່ນຊີວິດການເປັນຢູ່ຂອງປະຊາຊົນແຕ່ບໍ່ພໍກິນອີ່ມເຖິງຢູ່ດີກິນດີທົ່ວໄປ,ຊຸກຍູ້ສັງຄົມນິຍົມເປັນແບບທັນສະໄໝ,ໄດ້ສ້າງພື້ນຖານອັນແໜ້ນແກ່ນເພື່ອເອົາຊະນະອຸປະສັກແລະຄວາມສ່ຽງນາໆປະການແລະຮັກສາໄວ້ສະຖານະການລວມຂອງສັງຄົມມີຄວາມສະຖຽນລະພາບ,ໄດ້ສະສົມບົດຮຽນອັນລ້ຳຄ່າເພື່ອບຸກເບີກເສັ້ນທາງສັງຄົມນິຍົມທີ່ມີສີຊສັນພິເສດຂອງຈີນ ແລະ ກາຍເປັນລະບົບທິດສະດີສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ.ພາກຕົວຈິງໄດ້ຢັ້ງຢືນໃຫ້ເຫັນວ່າ,ມີແຕ່ຍຶດໝັ້ນຖືເອົາການແກ້ໄຂບັນຫາກະສິກຳ,ຊົນນະບົດ ແລະ ຊາວກະສິກອນເປັນຈຸດສຸມເໜືອຫົວຂອງວຽກງານທົ່ວພັກ,ຍຶດຖືກະສິກຳເປັນຖານະພື້ນຖານ,ຍຶດຖືທິດຊີ້ນຳແຫ່ງການປະຕິຮູບເສດຖະກິດຕະຫລາດສັງຄົມນິຍົມ,ຍຶດຖືການເດີນທາງກະສິກຳແບບທັນສະໄໝທີ່ມີສີສັນພິເສດຂອງຈີນ,ຍຶດຖືການຮັບປະກັນສິດຜົນປະໂຫຍດດ້ານວັດຖຸແລະສິດປະຊາທິປະໄຕຂອງຊາວກະສິກອນ,ຈຶ່ງຈະສາມາດປົດປ່ອຍແລະພັດທະນາກຳລັງການຜະລິດສັງຄົມຊົນນະບົດຢ່າງບໍ່ຂາດສາຍໄດ້,ຊຸກຍູ້ການພັດທະນາເສດຖະກິດສັງຄົມຊົນນະບົດຢ່າງຮອບດ້ານ.

ກອງປະຊຸມໄດ້ຊີ້ອອກວ່າ,ສະຖານະການສາກົນໃນປະຈຸບັນນີ້,ສືບຕໍ່ມີການປ່ຽນແປງຢ່າງເລິກເຊິ່ງ.ການປະຕິຮູບ ແລະ ການ




ຜູ້ທີ່ນັ່ງຢູ່ເວທີປະທານມີ:ທ່ານຮູຈິນທາວ,ອູປາງກົວ,ເວີນເຈຍປາວ,ເຈຍຊິນລິນ,ລີຊາງຊູນ,ສີຈິນຜິງ,ລີເຄີຊຽງ,ຫໍກົວຊຽງ,ໂຈວຢົງຄັງ.
胡锦涛、吴邦国、温家宝、贾庆林、李长春、习近平、李克强、贺国强、周永康在主席台上　新华社 图

ພັດທະນາຂອງຈີນໄດ້ກ້າວເຂົ້າສູ່ໄລຍະຫົວລ້ຽວຫົວຕໍ່. ຈະຕ້ອງກຳແໜ້ນແລະນຳໃຊ້ກາລະ ໂອກາດຍຸດທະສາດທີ່ສຳຄັນ ໂດຍດີ, ບັນລຸເປົ້າໝາຍທີ່ຍິ່ງໃຫຍ່ໃນການກໍ່ສ້າງສັງຄົມຢູ່ດີກິນດີຢ່າງຮອບດ້ານໃຫ້ປະກົດເປັນຈິງ, ເລັ່ງລັດກໍ່ສ້າງສັງຄົມນິຍົມເປັນແບບທັນສະໄໝ ໂດຍໄວ, ກໍ່ຈະຕ້ອງເອົາສືບຕໍ່ປົດປ່ອຍແນວຄິດຢ່າງຕື່ນຕົວຍິ່ງຂຶ້ນຜັນຂະຫຍາຍເຖິງການຍຶດຖືການປະຕິຮູບ ແລະເປີດປະຕູສູ່ພາຍນອກ, ຊຸກຍູ້ການພັດທະນາວິທະຍາສາດ ແລະຊຸກດັນສັງຄົມປອງດອງກົມກຽວກັນ, ຊຸກຍູ້ການປະຕິຮູບ ແລະພັດທະນາຊົນນະບົດຢ່າງບໍ່ຫວັ່ນໄຫວຄອນແຄນ. ສືບຕໍ່ປົດປ່ອຍແນວຄິດ, ຈະຕ້ອງປະສົມສົມທົບກັບພາກຕົວຈິງທີ່ຍິ່ງໃຫຍ່ໃນການປະຕິຮູບ ແລະການພັດທະນາຊົນນະບົດ, ສືບຄົ້ນຢ່າງກ້າຫານ, ຊ່າງບຸກບືນກ້າວໜ້າ, ແກ້ບັນຫາທີ່ຫຍຸ້ງຍາກໃນການພັດທະນາຊົນນະບົດດ້ວຍຈິດສຳນຶກໃໝ່ແລະແນວຄວາມຄິດໃໝ່ເພື່ອເປັນການສະໜອງແຫຼ່ງນ້ຳທີ່ບໍ່ບົກແຫ້ງໃຫ້ແກ່ການຊຸກຍູ້ ແລະບັນລຸການປະດິດຄິດສ້າງໃໝ່ທີດສະດີຂອງພັກປະກົດເປັນຈິງ. ຍຶດຖືການປະຕິຮູບແລະເປີດປະຕູສູ່ພາຍນອກ, ຈະຕ້ອງເອົາການປະຕິຮູບຊົນນະບົດເປັນຈຸດສຸມຈະຕ້ອງບຸກທະລຸຢ່າງໃຫຍ່ໃນການປະຕິຮູບຕົວເມືອງແລະຊົນນະບົດເປັນເອກະພາບ, ຕ້ອງອັດຊີດກຳລັງດັນໃໝ່ໃຫ້ແກ່ການພັດທະນາຊົນນະບົດເພື່ອເປັນການເພີ່ມຕື່ມຄວາມເປັນຊີວິດຊີວາອັນໃໝ່ແກ່ການພັດທະນາເສດຖະກິດສັງຄົມທັງປວງ. ການທີ່ຊຸກຍູ້ວິທະຍາສາດມີການພັດທະນາຈະຕ້ອງເພີ່ມທະວີການພັດທະນາກະສິກຳທີ່ເປັນພື້ນຖານເພື່ອຮັບປະກັນສະບຽງອາຫານຂອງລັດມີຄວາມປອດໄພແລະການສະໜອງຜະລິດຕະພັນກະສິກຳຫຼັກຢ່າງມີຜົນສັກສິດ, ຊຸກຍູ້ກະສິກຳເພີ່ມປະລິມານການຜະລິດ, ຊາວກະສິກອນເພີ່ມລາຍຮັບ, ຊົນນະບົດຈະເລີນຮຸ່ງເຮືອງເພື່ອເປັນຄ້ຳຊູຢ່າງແຂງແຮງໃຫ້ແກ່ການພັດທະນາເສດສັງຄົມກົມກຽວກັນຮອບດ້ານຢ່າງຕໍ່ເນື່ອງກັນຊຸ້ຍູ້ສັງຄົມກົມກ່ຽວກັນ, ຈະຕ້ອງກຳແໜ້ນຊົນນະບົດມີຄວາມສະຖຽນນະພາບ, ເຮັດໃຫ້ການຄຸ້ມຄອງສັງຄົມຊົນນະບົດຄົບຖ້ວນສົມບູນ, ຊຸກຍູ້ທາງສັງຄົມທ່ຽງທຳສະເໝີພາບກັນ, ຮັບປະກັນຊາວກະສິກອນຢູ່ເຢັນເປັນສຸກເພື່ອສ້າງພື້ນຖານອັນແໜ້ນແກ່ນເຊິ່ງບັນລຸປະເທດຊາດມີຄວາມສະຫງົບສຸກຕະຫລອດກາລະນານ.

ກອງປະຊຸມເຫັນວ່າ, ຊົນນະບົດຈີນພວມມີການປ່ຽນແປງແບບໃໝ່, ກະສິກຳຈີນມີສ່ວນຮ່ວມໃນການຮ່ວມມືສາກົນ ແລະປະເຊີນໜ້າສະຖານນະພາບໃໝ່, ການຊຸກຍູ້ການປະຕິຮູບ ແລະພັດທະນາຊົນນະບົດໄດ້ມີເງື່ອນໄຂສະດວກດີຫຼາຍ, ກໍ່ໄດ້ປະເຊີນໜ້າຄວາມຫຍຸ້ງຍາກລຳບາກທີ່ບໍ່ໜ້ອຍແລະການທ້າທາຍ, ໂດຍສະເພາະແມ່ນຄວາມຂັດແຍ້ງຂັ້ນເລິກ ໂດດເດັ່ນຂຶ້ນທີ່ເກີດຍ້ອນ 2 ໂຄງສ້າງຂອງຕົວເມືອງ ແລະຊົນນະບົດ, ພື້ນຖານກະສິກຳຍັງຄົງບອບບາງ, ຈຳເປັນຕ້ອງເພີ່ມທະວີຂຶ້ນ; ການພັດທະນາຊົນນະບົດຍັງຄົງຊັກຊ້າຢູ່, ຈຳເປັນຕ້ອງອາໄສການຊ່ວຍຊູອຸດໜູນ. ຊາວກະສິກອນຈະເພີ່ມລາຍຮັບຂຶ້ນຍັງຄົງພົບຄວາມຫຍຸ້ງຍາກຢູ່,

ຈຳເປັນຕ້ອງເລັ່ງລັດໃຫ້ໄວ. ເມື່ອຢູ່ສະຫງົບສຸກຕ້ອງຄິດເຖິງຄວາມວິກິດພາຍຫລັງ, ຕ້ອງພະຍາຍາມເປັນເທົ່າ, ປັບປຸງ ແລະພັດທະນາສະຖານະການທີ່ດີຂອງຊົນນະບົດຢ່າງບໍ່ຢຸດຢັ້ງ.

ກອງປະຊຸມເຫັນວ່າ, ປະເທດຈີນເວົ້າລວມແລ້ວໄດ້ກ້າວເຂົ້າສູ່ໄລຍະພັດທະນາເຊິ່ງເອົາອຸດສາຫະກຳຊຸກຍູ້ກະສິກຳ, ເອົາຕົວເມືອງຊຸກຈູງຊົນນະບົດ, ໄດ້ເຂົ້າສູ່ໄລຍະຫົວລ້ຽວຫົວຕໍ່ໃນການເລັ່ງລັດການດັດສ້າງກະສິກຳທີ່ເປັນມູນເຊື້ອ, ເດີນໄປຕາມເສັ້ນທາງແບທັນສະໄໝຂອງກະສິກຳທີ່ມີສີສັນພິເສດຂອງຈີນ, ກ້າວເຂົ້າສູ່ໄລຍະທີ່ສຳຄັນໃນການອອກແຮງທັບມ້າງ 2 ໂຄງສ້າງຂອງຕົວເມືອງແລະຊົນນະບົດກາຍເປັນສະຖານະພາບແບບໃໝ່ໃນການພັດທະນາເສດຖະກິດສັງຄົມຂອງຕົວເມືອງ ແລະ ຊົນນະບົດເປັນອັນໜຶ່ງອັນດຽວກັນ. ຈະຕ້ອງກຳແໜ້ນສະພາບການບ້ານເມືອງພື້ນຖານຂອງຈີນເຊິ່ງຢູ່ໄລຍະຕົ້ນສັງຄົມນິຍົມຂອງຈີນ, ໄປຕາມຄວາມມຸ່ງຫວັງຂອງຊາວກະສິກອນເປັນລ້ານເປັນໂກດມີຊີວິດການເປັນຢູ່ຢູ່ເຢັນເປັນສຸກ, ກຳໄດ້ກາລະໂອກາດ, ສວຍໂອກາດບຸກບືນຂຶ້ນ, ອອກແຮງບຸກເບີກເສັ້ນທາງອັນກວ້າງຂວາງແບບທັນສະໄໝຂອງກະສິກຳທີ່ສີສີສັນພິເສດຂອງຈີນ. ສູ້ຊົນເປີດສະພາບການແບບໃໝ່ຢັ້ງມໃນການສ້າງສາຊົນນະບົດໃໝ່ສັງຄົມນິຍົມ.

ກອງປະຊຸມເນັ້ນໜັກວ່າ, ຈະຕ້ອງເສີມຂະຫຍາຍນ້ຳໃຈ ຂອງກອງປະຊຸມໃຫຍ່ຂອງພັກຄັ້ງທີ 17 ຢ່າງຮອບດ້ານ, ຊູຄັນທຸງທີ່ຍິ່ງໃຫຍ່ສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃຫ້ສູງຂຶ້ນ, ຖືເອົາທິດສະດີເຕິ້ນສຽວຜິງແລະ ແນວຄິດ "ສາມຕົວແທນ" ເປັນແນວຄິດຊີ້ນຳ, ເສີມຂະຫຍາຍທັດສະນະພັດທະນາວິທະຍາສາດຢ່າງເລິກເຊິ່ງໃຫ້ປະກົດຜົນເປັນຈິງ, ຖືເອົາການສ້າງສາຊົນນະບົດໃໝ່ສັງຄົມນິຍົມເປັນໜ້າທີ່ຍຸດທະສາດ, ເອົາການເດີນໄປເສັ້ນທາງກະສິກຳແບບທັນສະໄໝທີ່ມີສີສັນພິເສດຂອງຈີນເປັນທິດຊີ້ນຳຕົ້ນຕໍ, ເອົາການເລັ່ງລັດການພັດທະນາເສດຖະກິດສັງຄົມຕົວເມືອງແລະຊົນນະບົດກາຍເປັນອັນໜຶ່ງອັນດຽວເປັນຄວາມຮຽກຮ້ອງຕົ້ນຕໍ, ຍຶກໜັ້ນອຸດສາຫະກຳລ້ຽງດູກະສິກຳ, ຕົວເມືອງສະໜັບສະໜູນຊົນນະບົດ, ໃຊ້ທິດທາງຄ່ອງແຄ່ວທີ່ວ່າໃຫ້ຫຼາຍເອົາໜ້ອຍ, ກໍ່ສ້າງລະບອບກົນໄກແບບໃໝ່, ເພີ່ມທະວີການກໍ່ສ້າງໂຄງລ່າງພື້ນຖານກະສິກຳ, ເພີ່ມຕື່ມລາຍຮັບຂອງຊາວກະສິກອນ, ຮັບປະກັນສິດຜົນປະໂຫຍດຂອງຊາວກະສິກອນ, ຊຸກຍູ້ຊົນນະບົດກົມກຽວກັນ, ປຸກລະດົມມາລະພະຍາຍາມຂອງຊາວກະສິກອນອັນໄພສານຢ່າງເຕັມທີ, ເປັນເຈົ້າການປະດິດຄິດສ້າງຊຸກຍູ້ການພັດທະນາເສດຖະກິດສັງຄົມຊົນນະບົດໂດຍດີໂດຍໄວ.

ກອງປະຊຸມຊີ້ອອກວ່າ, ເຖິງປີ 2020, ໜ້າທີ່ເປົ້າໝາຍຕົ້ນຕໍໃນການປະຕິຮູບ ແລະ ພັດທະນາຊົນນະບົດແມ່ນະກົນໄກເສດຖະກິດຊົນນະບົດຄົບຖ້ວນສົມບູນຍິ່ງຂຶ້ນ, ໄດ້ສ້າງຕັ້ງລະບົບກົນໄກໃນການປະຕິຮູບແລະພັດທະນາເສດຖະກິດສັງຄົມຂອງຊົນນະບົດເປັນອັນໜຶ່ງອັນດຽວໂດຍພື້ນຖານການສ້າງສາກະສິກຳແບບທັນສະໄໝໄດ້ຮັບການຂະຫຍາຍຕົວ ຢ່າງເດັ່ນຊັດ, ຄວາມສາມາດການຜະລິດສັງລວມກະສິກຳໄດ້ຮັບການຍົກສູງຂຶ້ນຢ່າງຈະແຈ້ງ, ຄວາມປອດໄພຂອງສະບຽງອາຫານຂອງຊາດ ແລະການສະໜອງຜະລິດຕະພັນກະສິກຳທີ່ສຳຄັນກໍ່ໄດ້ຮັບການຮັບປະກັນຢ່າງມີຜົນສັກສິດ, ລາຍຮັບສຸດທິຂອງຊາວກະສິກອນໄດ້ເພີ່ມຂຶ້ນ 1 ເທົ່າຕົວຕໍ່ຄົນທຽບໃສ່ປີ 2008, ລະດັບການຊົມໃຊ້ໄດ້ເພີ່ມຂຶ້ນຫຼາຍ, ໄດ້ລຶບລ້າງປະກົດການທຸກຍາກສຸດໂດຍພື້ນຖານເພີ່ມທະວີການສ້າງສາອົງການຈັດຕັ້ງພື້ນຖານຊົນນະບົດໃຫ້ຕື່ມອີກກ້າວໜຶ່ງ, ລະບອບປົກຄອງຕົນເອງຂອງປະຊາກອນຊົນນະບົດໄດ້ຄົບຖ້ວນສົມບູນຍິ່ງຂຶ້ນ, ສິດປະຊາທິປະໄຕຂອງຊາວກະສິກອນໄດ້ຮັບປະກັນແທ້ຈິງ; ລະດັບການບໍລິການສາທາລະນະພື້ນຖານໃນຕົວເມືອງແລະຊົນນະບົດມີຄວາມສະເໝີພາບໄດ້ຮັບການຄືບໜ້າຢ່າຈະແຈ້ງ, ວັດທະນະທຳຊົນນະບົດໄດ້ຈະເລີນຮຸ່ງເຮືອງຕື່ມອີກກ້າວໜຶ່ງສິດຜົນປະໂຫຍດວັດທະນະທຳພື້ນຖານຂອງຊາວກະສິກອນໄດ້ຮັບປະຕິບັດຕົວຈິງດີກວ່າເກົ່າ, ຊາວກະສິກອນທຸກຄົນມີໂອກາດໄດ້ຮັບການສຶກສາອັນດີເລີດ, ລະບອບການຮັບປະກັນຊີວິດການເປັນຢູ່ພື້ນຖານແລະການປິ່ນປົວສາທາລະນະສຸກພື້ນຖານຂອງຊົນນະບົດໄດ້ຄົບຖ້ວນສົມບູນຍິ່ງຂຶ້ນ, ລະບົບການຄຸ້ມຄອງສັງຄົມຊົນນະບົດໄດ້ຄົບຖ້ວນສົມບູນຕື່ມອີກ້າວໜຶ່ງລະບົບການຜະລິດກະສິກຳແບບປະຢັດຊັບພະຍາກອນ, ແບບສະພາບແວດລ້ອມສັນຖະວະໄມຕີໄດ້ເປັນຮູບເປັນຮ່າງຂຶ້ນໂດຍພື້ນຖານ, ເຮືອນພັກແລະສະພາບແວດລ້ອມນິເວດວິທະຍາຂອງຊົນນະບົດໄດ້ຮັບການປັວແປງດີຂຶ້ນຢ່າງເດັ່ນຊັດ, ຄວາມສາມາດພັດທະນາຍືນຍົງໄດ້ເພີ່ມຂຶ້ນເລື້ອຍໆ.

ກອງປະຊຸມເນັ້ນໜັກວ່າ, ຈະບັນລຸໜ້າທີ່ເປົ້າໝາຍດັ່ງກ່າວນີ້ໃຫ້ປາກົດເປັນຈິງ, ຈະຕ້ອງປະຕິບັດຫຼັກການສຳຄັນດັ່ງລຸ່ມນີ້ະຈຳຕ້ອງປັບປຸງແລະເພີ່ມທະວີຖານະພື້ນຖານກະສິກຳໃຫ້ໝັ້ນຄົງ, ຕ້ອງຖືເອົາການແກ້ໄຂບັນຫາກິນເຂົ້າຂອງປະຊາກອນພັນກວ່າລ້ານຄົນໃຫ້ດີເປັນວຽກບ້ານການເມືອງເໜືອທົ່ວໃນການປົກຄອງບ້ານເມືອງມີຄວາມສະຫງົບສຸກ; ຈະຕ້ອງຮັບປະກັນສິດຜົນປະໂຫຍດຂອງຊາວກະສິກອນຢ່າງແທ້ຈິງ, ຖືເອົາການບັນລຸຜົນປະໂຫຍດຕົ້ນຕໍ, ປົກປັກຮັກສາຜົນປະໂຫຍດຕົ້ນຕໍ, ພັດທະນາຜົນປະໂຫຍດຕົ້ນຕໍຂອງຊາວກະສິກອນອັນໄພສານໃຫ້ດີເປັນຈຸດເລີ່ມຕົ້ນແລະຈຸດທີ່ໝາຍໃນວຽກງານທັງໝົດຂອງຊົນນະບົດຢູ່ຕະຫລອດມາ, ຈຳຕ້ອງປົດປ່ອຍແລະພັດທະນາກຳລັງການຜະລິດທາງສັງຄົມຊົນນະບົດຢ່າງບໍ່ຂາດສາຍ, ຖືເອົາການປະຕິຮູບແລະປ່ຽນແປງໃໝ່ເປັນກຳລັງດັນໃນການພັດທະນາຊົນນະບົດແຕ່ກົກສຸດປາຍ, ຈຳຕ້ອງຈັດສັນການພັດທະນາເສດຖະກິດສັງຄົມຕົວເມືອງແລະຊົນນະບົດໃຫ້ເປັນເອກະພາບກັນ, ຖືເອົາການກໍ່ສ້າງສາຍພົວພັນລະຫວ່າງກຳມະກອນຊາວກະສິກອນ, ສາຍພົວພັນຕົວເມືອງຊົນນະບົດແບບໃໝ່ເປັນຍຸດທະສາດທີ່ສຳຄັນເຊິ່ງເລັ່ງລັດການສ້າງສາແບບທັນສະໄໝຢູ່ຕະຫລອດມາ; ຕ້ອງຍຶດໝັ້ນພັກຄຸ້ມຄອງວຽກງານຊົນນະບົດ, ຖືເອົາການເພີ່ມທະວີ ແລະ ປັບແປງການນຳພາຂອງພັກທີ່ມີຕໍ່ວຽກງານຊົນນະບົດເປັນຄໍ້າປະກັນດ້ານການເມືອງເພື່ອເປັນການຊຸກຍູ້ການປະຕິຮູບ ແລະ ພັດທະນາຊົນນະບົດແຕ່ກົກສຸດປາຍ.

ກອງປະຊຸມໄດ້ຈັດສັນວຽກງານເລັ່ງລັດການປະຕິຮູບ ແລະ ການພັດທະນາຊົນນະບົດໃນສະເພາະໜ້າ ແລະ ໄລຍະພາຍຫລັງໄລຍະໜຶ່ງ, ເນັ້ນໃສ່ການຊຸກຍູ້ການປະຕິຮູບ ແລະ ປ່ຽນແປງໃໝ່ຢ່າງແຂງແຮງ, ເພີ່ມທະວີການກໍ່ສ້າງລະບອບຊົນນະບົດ; ອອກແຮງພັດທະນາກະສິກຳແບບທັນສະໄໝ, ຍົກສູງຄວາມສາມາດການຜະລິດສັງລວມຂອງກະສິກຳ; ເລັ່ງລັດການພັດທະນາກິດຈະກຳສາທາລະນະປະໂຫຍດໃນຊົນນະບົດ, ຊຸກຍູ້ສັງຄົມຊົນນະບົດມີຄວາມກ້າວໜ້າຢ່າງຮອບດ້ານ.

ກອງປະຊຸມໄດ້ສະເໜີວ່າ, ບັນລຸເປົ້າໝາຍຍຸດທະສາດໃນການພັດທະນາຊົນນະບົດໃຫ້ປະກົດເປັນຈິງຊຸກຍູ້ກະສິກຳທີ່ມີສີສັນພິເສດຂອງຈີນເປັນແບບທັນສະໄໝ, ຈະຕ້ອງປະຕິບັດຄວາມຮຽກຮ້ອງຕ້ອງການໃນການພັດທະນາຕົວເມືອງແລະຊົນນະບົດເປັນເອກະພາບກັນ, ຕ້ອງກຳແໜ້ນບ້ວງວຽກສຳຄັນໃນການປະຕິຮູບລະບົບຊົນນະບົດມີການທະລຸ, ເປີດກວ້າງເສດຖະກິດຊົນນະບົດໃຫ້ມີຊີວິດຊີວາຕື່ມອີກກ້າວໜຶ່ງ, ເຮັດໃຫ້ສະພາບແວດລ້ອມພາຍນອກໃນການພັກທະນາຊົນນະບົດໃຫ້ດີເລີດ, ເພີ່ມທະວີຮັບປະກັນລະບອບການພັດທະນາຊົນນະບົດ. ເຮັດໃຫ້ລະບອບທຸລະກິດພື້ນຖານຊົນນະບົດໝັ້ນທ່ຽງ ແລະ ຄົບຖ້ວນສົມບູນ, ເຮັດໃຫ້ລະບອບຄຸ້ມຄອງທີ່ດິນໃນຊົນນະບົດຄົບຖ້ວນສົມບູນ ແລະ ເປັນແບບແຜນຢ່າງເຂັ້ມງວດ, ເຮັດໃຫ້ລະບອບສະໜັບສະໜູນ ແລະ ປົກປັກຮັກສາກະສິກຳຄົບຖ້ວນສົມບູນ, ສ້າງຕັ້ງລະບອບການເງິນການທະນາຄານໃນຊົນນະບົດແບບທັນສະໄໝ, ສ້າງຕັ້ງລະບອບຊຸກຍູ້ການພັດທະນາເສດຖະກິດສັງຄົມໃນຕົວເມືອງ ແລະ ຊົນນະບົດໃຫ້ເປັນອັນໜຶ່ງອັນດຽວກັນ, ເຮັດໃຫ້ລະບອບການຄຸ້ມຄອງປະຊາທິປະໄຕຂອງຊົນນະບົດຄົບຖ້ວນສົມບູນກອງປະຊຸມສະເໜີວ່າ, ການພັດທະນາກະສິກຳແບບທັນສະໄໝ, ຈະຕ້ອງປະຕິບັດຕາມຄວາມຮຽກຮ້ອງຕ້ອງການທີ່ມີປະລິມານການຜະລິດສູງ, ຄຸນນະພາບດີ, ປະສິດທິຜົນສູງ, ເປັນນິເວດວິທະຍາແລະມີຄວາມປອດໄພ, ເລັ່ງລັດການຫັນປ່ຽນຮູບການພັດທະນາກະສິກຳ, ຊຸກຍູ້ເຕັກໂນໂລຢີກະສິກຳໃຫ້ກ້າວໜ້າແລະປະດິດຄິດສ້າງໃໝ່, ເພີ່ມທະວີການປະກອບວັດຖຸເຕັກນິກຂອງກະສິກຳ, ເຮັດໃຫ້ລະບົບຜະລິດຕະກຳກະສິກຳຄົບຖ້ວນສົມບູນ, ຍົກສູງອັດຕາການຜະລິດຂອງທີ່ດິນ, ອັດຕານຳໃຊ້ຊັບພະຍາກອນ, ອັດຕາການຜະລິດອອກແຮງງານ, ເພີ່ມທະວີຄວາມສາມາດຕ້ານຄວາມສ່ຽງໄພຂອງກະສິກຳ, ຄວາມສາມາດແກ້ງແຍ້ງສາກົນ, ຄວາມສາມາດພັດທະນາຍືນຍົງ. ຈະຕ້ອງເຂົ້າໃຈເປົ້າໝາຍຢ່າງຈະແຈ້ງ, ວາງແຜນແມ່ບົດອອກມາ, ເພີ່ມທະວີການລົງທຶນເຂົ້າເປັນຈຳນວນຫຼວງຫຼາຍ, ສຸມກຳລັງເຮັດວຽກງານໃຫຍ່ຫຼວງທີ່ກ່ຽວເຖິງສະຖານະພາບລວມແລະມີຜົນສະທ້ອນກວ້າງໄກໃຫ້ດີ. ຕ້ອງຮັບປະກັນສະບຽງອາຫານຊາດມີຄວາມປອດໄພ, ຊຸກຍູ້ການປັບປຸງຍຸດທະສາດຂອງໂຄງປະກອບກະສິກຳ, ເລັ່ງລັດເຕັກນິກກະສິກຳປະດິດຄິດສ້າງໃໝ່, ເພີ່ມທະວີການສ້າງສາໂຄງລ່າງພື້ນຖານກະສິກຳ, ສ້າງຕັ້ງລະບົບບໍລິການແບບສັງຄົມຂອງກະສິກຳແບບໃໝ່, ຊຸກຍູ້ກະສິກຳສາມາດພັດທະນາແບບຍືນຍົງ, ຂະຫຍາຍກະສິກຳເປີດປະຕູສູ່ພາຍ

ນອກ. ຕ້ອງເພີ່ມທະວີກະສິກຳເປັນແບບມາດຖານແລະຄຸນນະພາບ ຜະລິດຕະພັນກະສິກຳມີຄວາມປອດໄພ, ຕິດຕາມຄວບຄຸມທົ່ວທັງໄລຍະຜ່ານຢ່າງເຄັ່ງຄັດ, ປະຕິບັດໜ້າທີ່ຮັບຜິດຊອບຕິດຕາມຄຸ້ມຄອງຄຸນນະພາບມີຄວາມປອດໄພຢ່າງແທ້ຈິງ. ຫ້າມບໍ່ໃຫ້ມີຜະລິດຕະພັນທີ່ບໍ່ຖືກມາດຖານເຂົ້າສູ່ຕະຫລາດ.

ກອງປະຊຸມສະເໜີວ່າ, ການກໍ່ສ້າງຊົນນະບົດແບບໃໝ່ສັງຄົມນິຍົມ, ກາຍເປັນສະຖານະພາບແບບໃໝ່ໃນການພັດທະນາເສດຖະກິດສັງຄົມຕົວເມືອງແລະຊົນນະບົດເປັນອັນໜຶ່ງອັນດຽວ, ຈະຕ້ອງຂະຫຍາຍກວ້າງຂອບເຂດປົກຄຸມຊົນນະບົດທີ່ການເງິນການທະນາຄານສາທາລະນະ, ພັດທະນາກິດຈະກຳສາທາລະນະປະໂຫຍດຂອງຊົນນະບົດ, ເຮັດໃຫ້ຊາວກະສິກອນອັນໄພສານຮ່ຳຮຽນມີຄູສອນ, ອອກແຮງງານມີລາຍໄດ້, ເຈັບເປັນມີໝໍປິ່ນປົວ, ເຖົ້າແລ້ວມີຄົນລ້ຽງ, ທີ່ຢູ່ມີເຮືອນພັກ. ຕ້ອງພັດທະນາວັດທະນະທຳຊົນນະບົດໃຫ້ຈະເລີນ, ອອກແຮງເຮັດກິດຈະການສຶກສາຊົນນະບົດໃຫ້ດີ, ຊຸກຍຸການພັດທະນາກິດຈະການປິ່ນປົວ ແລະ ສາທາລະນະສຸກຊົນນະບົດ, ເຮັດໃຫ້ລະບົບຮັບປະກັນດ້ານສະວະດີການສັງຄົມຂອງຊົນນະບົດໃຫ້ສົມບູນຄົບຖ້ວນ, ເພີ່ມທະວີການກໍ່ສ້າງໂຄງລ່າງພື້ນແລະການກໍ່ສ້າງສະພາບແວດລ້ອມຂອງຊົນນະບົດ, ຊຸກຍູ້ການພັດທະນາຊົນນະບົດອອກຄວາມຄວາມທຸກຍາກ, ເພີ່ມທະວີການສ້າງສາກຳລັງຕ້ານໄພຫລຸດໄພໃນຊົນນະບົດ, ເພີ່ມທະວີການຄຸ້ມຄອງສັງຄົມຂອງຊົນນະບົດ.

ກອງປະຊຸມເນັ້ນໜັກວ່າ, ຊຸກຍູ້ການປະຕິຮູບ ແລະ ພັດທະນາຊົນນະບົດ, ສິ່ງທີ່ສຳຄັນແມ່ນຂຶ້ນກັບພັກ. ຕ້ອງຖືເອົາການສ້າງສາຄວາມສາມາດປົກຄອງປະເທດຂອງພັກແລະການກໍ່ສ້າງຄວາມກ້າວໜ້າເປັນສາຍຫຼັກ, ຊຸກຍູ້ການກໍ່ສ້າງພັກຂອງຊົນນະບົດຢ່າງຮອບດ້ານດ້ວຍນ້ຳໃຈປະຕິຮູບ ແລະ ປະດິດຄິດສ້າງໃໝ່, ຕັ້ງໜ້າເປີດຂະບວນການເຄື່ອນໄຫວຮ່ຳຮຽນທັດສະນະພັດທະນະວິທະຍາສາດຢ່າງເລິກເຊິ່ງ, ເຮັດໃຫ້ກຳລັງປະດິດຄິດສ້າງ, ກຳລັງເຕົ້າໂຮມ, ກຳລັງຕໍ່ສູ້ຂອງການຈັດຕັ້ງພັກເພີ່ມຂຶ້ນ, ຍົກສູງລະດັບການນຳພາວຽກງານຊົນນະບົດຂອງພັກຢ່າງບໍ່ຢຸດຢັ້ງ. ເຮັດໃຫ້ລະບົບກົນໄກນຳພາວຽກງານຊົນນະບົດຂອງພັກໃຫ້ຄົບຖ້ວນສົມບູນ, ເພີ່ມທະວີລະບົບການນຳພາແລະກົນໄກທຳງານຂອງຊົນນະບົດທີ່ພາກສ່ວນທີ່ກ່ຽວຂ້ອງເປັນຜູ້ຮັບຜິດຊອບ ແລະ ການນຳຂອງຄະນະພັກເປັນເອກະພາບກັນ, ພັກລັດພ້ອມກັນຄຸ້ມຄອງ, ການຈັດຕັ້ງຂອງອົງການວຽກງານສັງລວມຂອງຊົນນະບົດເປັນຜູ້ປະສານງານ. ຄະນະພັກແລະອຳນາດການປົກຄອງທຸກຂັ້ນຕ້ອງຍຶດຖືເອົາວຽກງານຊົນນະບົດວາງເຂົ້າສູ່ວາລະການປົກສາວຽກງານທີ່ສຳຄັນ, ຕ້ອງສະແດງແນວຄວາມຄິດຍຸດທະສາດຂອງວຽກງານທີ່ເປັນຈຸດສຸມເໜືອຫົວຂອງວຽກງານທົ່ວພັກອອກມາທາງດ້ານກຳນົດແນວທາງນະໂຍບາຍ, ການຈັດສັນວຽກງານ, ເງິນທຶນລົງເຂົ້າ, ສັບຊ້ອນພະນັກງານ, ເພີ່ມທະວີການສຳຫລວດຄົ້ນຄວ້າທິດສະດີປະຕິຮູບແລະ ພັດທະນາຊົນນະບົດ ແລະ



ບັນຫາພາກປະຕິບັດຕົວຈິງ, ຍຶດຖືທຳງານຕາມສະພາບຕົວຈິງ, ໃຫ້ການຊີ້ນຳຕາມປະເພດແຕກຕ່າງກັນ, ເປີດໜ້າວຽກຢ່າງມີຫົວຄິດປະດິດສ້າງ. ຈະຕ້ອງເພີ່ມທະວີການກໍ່ສ້າງອົງການຈັດຕັ້ງພື້ນຖານຊົນນະບົດ, ຖືເອົາການກໍ່ສ້າງຄະນະນຳພາເປັນຈຸດສຸມ, ເຮັດໃຫ້ການຈັດຕັ້ງພັກຄົບຖ້ວນສົມບູນເປັນຄຳປະກັນ, ການເຄື່ອນໄຫວສາມຂັ້ນເຂົ້າຮ່ວມການປະດິດສ້າງເປັນຕົ້ນເປັນໂຕ, ສ້າງສາອົງການຈັດຕັ້ງພັກກາຍເປັນແກ່ນສານການນຳພາທີ່ເຂັ້ມແຂງໃນການສົ່ງເສີມການພັດທະນາວິທະຍາສາດ, ນຳພາຊາວກະສິກອນໄປສູ່ຄວາມຮັ່ງມີ, ໃກ້ສິດຕິດແທດກັບປະຊາຊົນຢ່າງສະນິດແໜ້ນ, ປົກປັກຮັກສາຊົນນະບົດມີຄວາມສະຖຽນລະພາບ. ເພີ່ມທະວີການກໍ່ສ້າງຖານແຖວພະນັກງານພື້ນຖານຊົນນະບົດ, ເອົາໃຈໃສ່ເປີດກວ້າງແຫຼ່ງທີ່ມາພະນັກງານພື້ນຖານໃນຊົນນະບົດ, ຍົກສູງຄຸນທາດຂອງພະນັກງານ, ລົບລ້າງສິ່ງທີ່ເປັນຫ່ວງໃຍທີ່ຈະຕາມມາຂອງເຂົາເຈົ້າ, ປຸກລະດົມມາລະພະຍາຍາມເຮັດວຽກຂອງເຂົາເຈົ້າຂຶ້ນ, . ຈະປັບປຸງ ແລະ ພັດທະນາໝາກຜົນໃນການເຄື່ອນໄຫວສຶກສາດ້ານຄວາມກ້າວໜ້າໃຫ້ໝັ້ນຄົງ, ເຮັດວຽກງານຂະຫຍາຍສະມາຊິກພັກໃຫ້ດີ, ປັວແປງການຄຸ້ມຄອງການສຶກສາສະມາຊິກພັກໃຫ້ດີຂຶ້ນ, ເພີ່ມທະວີສະຕິສະມາຊິກພັກ, ກໍ່ສ້າງຖານແຖວພະນັກງານຊົນນະບົດທີ່ມີຄຸນທາດສູງຈະຕ້ອງເພີ່ມທະວີການກໍ່ສ້າງແບບແຜນເຮັດວຽກຂອງພັກ ແລະ ກໍ່ສ້າງອຳນາດການປົກຄອງຂາວສະອາດ, ເລັ່ງລັດການກໍ່ສ້າງລະບົບການປາບປາມແລະປ້ອງກັນຄວາມສໍ້ລາດບັງຫຼວງໃນຊົນນະບົດ, ສົ່ງເສີມແບບແຜນຊອກຫາຄວາມເປັນຈິງ, ຊື່ສັດທ່ຽງທຳ, ບາກບັ່ນຕໍ່ສູ້ຢ່າງທໍລະຫົດອົດທົນ, ຖືເອົາການປົກປັກຮັກສາສິດຜົນປະໂຫຍດຂອງຊາວກະສິກອນເປັນຈຸດສຸມ, ປີ່ນອ້ອມແນວທາງນະໂຍບາຍຊົນນະບົດຂອງພັກ, ສຳຫລວດສະພາບການຈະແຈ້ງ, ເພີ່ມທະວີການຕິດຕາມກວດກາ, ດັດແກ້ບັນຫາໂດດເດັ່ນເຊິ່ງມີການເສຍຫາຍສິດຜົນປະໂຫຍດຂອງຊາວກະສິກອນຢ່າງແທ້ຈິງ, ກວດກາແລະແກ້ໄຂຄະດີທີ່ຝ່າຝືນກົດໝາຍ ແລະ ລະບຽບວິໄນທີ່ກ່ຽວເຖິງກະສິກຳຢ່າງເຂັ້ມງວດ, ສະມາຊິກພັກທັງປວງ ແລະ ພະນັກງານທັງປວງຕ້ອງຍຶດຖືການໃຊ້ສິດອຳນາດເພື່ອປະຊາຊົນໂດຍປະຊາຊົນ, ຫາຜົນປະໂຫຍດເພື່ອປະຊາຊົນເອົາໃຈໃສ່ຄວາມເດືອດຮ້ອນຂອງປະຊາຊົນ, ຮັບຟັງສຽງຂອງປວງປະຊາຊົນ, ລວມສູນສະຕິປັນຍາຂອງປວງຊົນ, ເວົ້າແທ້ທຳຈິງສະແຫວງຫາປະສິດທິຜົນແທ້, ເດັດດ່ຽວຄັດຄ້ານລັດທິຮູບແບບ, ລັດທິອາດຍາສິດ, ອອກແຮງປະດິດສ້າງຜົນງານຢ່າງແທ້ຈິງ.

ກອງປະຊຸມຮຽກຮ້ອງບັນດາສະຫາຍທົ່ວພັກຕ້ອງສາມັກຄີຢ່າງແໜ້ນແຟ້ນຢູ່ອ້ອມຂ້າງສູນກາງພັກເຊິ່ງແມ່ນສະຫາຍຮູຈິນທາວເປັນເລຂາທິການໃຫຍ່, ປະຕິຮູບຢ່າງໝັ້ນໃຈ, ເລັ່ງລັດການພັດທະນາ, ບຸກບືນເປີດສະຖານະພາບແບບໃໝ່ຂອງວຽກງານຊົນນະບົດຢູ່ໃນການຄືບໜ້າຊຸກຍູ້ພາລະກິດທີ່ຍິ່ງໃຫຍ່ຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ.



# ຍານອາວະກາດເຊີນໂຈວເປົ້ 7 ໄດ້ລົງສູ່ພາກພື້ນດິນຢ່າງສຳເລັດຜົນນັກອາວະກາດກັບຄືນດ້ວຍຄວາມປອດໄພ

**神七飞船成功着陆　航天员安全返回**

五星红旗飘扬太空，世界目光聚焦中国。北京时间 9 月 28 日 17 时 3 7 分，神舟七号飞船返回舱成功降落在内蒙古中部预定区域。航天员翟志刚、刘伯明、景海鹏安全自主出舱，返回舱状态良好，中国神舟七号载人航天飞行获得圆满成功。

ທຸງຊາດ 5 ດາວໄດ້ປິວສະບັດຢູ່ກາງເວຫາ,ແສງຕາໃນທົ່ວໂລກໄດ້ສຸມເຂົ້າມາທີ່ປະເທດຈີນຢ່າງຈົດຈໍ່ໃນໂມງເວລາປັກກິ່ງ 17 ໂມງ 37 ນາທີຂອງວັນທີ 28 ຍານກັບຄືນຂອງຍານອາວະກາດເຊີນໂຈວເປົ້ 7 ກໍ່ໄດ້ລົງເຂົ້າສູ່ເຂດກຳນົດຂອງພາກກາງມົງໂກນໃນຢ່າງສຳເລັດຜົນ.ນັກອາວະກາດທ່ານຈາຍຈື້ກັງ,ທ່ານລິວປັວມິງ ແລະ ທ່ານຈິງຮາຍເຜີງໄດ້ອອກຈາກຍານດ້ວຍຕົນເອງຢ່າງປອດໄພ.ຍານຢູ່ໃນສະພາບຈົບດີ,ການເດີນອາວະກາດຂອງຍານອາວະກາດທີ່ມີຄົນເຊີນໂຈວເປົ້ 7ໄດ້ບັນລຸຜົນຢ່າງເຕັມສ່ວນ.

ໃນເວລາທີ່ຍານບິນອ້ອມໜ່ວຍໂລກຮອບສຸດທ້າຍ,ບິນຢູ່ນ່ານຟ້າເຂດຂອງມະຫາສະໝຸດອັດລັງຕິກ,ກຳປັ່ນຕິດຕາມອາວະກາດເປົ້3 ໄດ້ລໍຖ້າຢູ່ທີ່ນັ້ນແລ້ວ,ໄດ້ອອກຄຳສັ່ງໃຫ້ຍານອາວະກາດກັບຄືນ.ຍານອາວະກາດກໍໄດ້ກຽມພ້ອມສະພາບກັບຄືນແຜ່ນດິນ.ຍານທີ່ຈະກັບຄືນນັ້ນໄດ້ແຍກສ່ວນອອກຈາກຍານແມ່ທີ່ພວມສືບຕໍ່ກ້າວເດີນຕໍ່ໄປ ແລະ ໄດ້ຕິດຈັກໂມເຕີທີ່ສຳຄັນແລ້ວເລີ່ມອອກຈາກອາວະກາດຕາວຄືນສູ່ໜ່ວຍໂລກ,ລົງສູ່ທົ່ງຫຍ້າອາມູກູລາງຂອງພາກກາງມົງກົນໃນຢ່າງສຳເລັດຜົນ.

ຫຼັງຈາກຍານອາວະກາດໄດ້ກຽມພ້ອມສະພາບຕາວຄືນແລ້ວ,ສູນຕິດຕາມຄວບຄຸມດາວທຽມແຂວງຊີອານກໍໄດ້ຕິດຕາມຄວບຄຸມຍານມາໂດຍຕະຫຼອດໄລຍະ.ໃນບັນຍາກາດລົມເຢັນໄດ້ພັດຜ່ານໄປຕາມທົ່ງຫຍ້າ.ບັນດາພະນັກງານກູ້ຊີບ 300 ກວ່າຄົນ ແລະ ລົດລາງພາຫະນະສະເພາະເປັນຈຳນວນຫຼາຍຄັນກຽມພ້ອມຢູ່ໃນຂອບເຂດສຳຄັນທີ່ຍານຈະລົງສູ່ພື້ນດິນ,ໄດ້ຄ່ອຍໆມິດໆລໍຄອຍຢູ່ບໍລິເວນອ້ອມຂ້າງຈຸດທິດສະດີຂອງຍານທີ່ຈະລົງຈອດ.ຍົນເອເລກົບເຕີຈຳນວນ 6 ລຳທີ່ຖືກແຕ່ງຕັ້ງມາຈາກກອງຊຸທະຫານການບິນຂອງທະຫານບົກ,ກໍໄດ້ບິນລໍຄອຍຢູ່ຂອບເຂດທີ່ກຳນົດ.ພາຍຫຼັງທີ່ໄດ້ຮັບຄຳສັ່ງວ່າຍານອາວະກາດນັ້ນໄດ້ລົງເຖິງພື້ນແຜ່ນດິນແລ້ວ,ທີມງານ ກູ້ຊີບທີ່ຢູ່ໜ້າດິນ ແລະ ຢູ່ອາກາດກໍໄດ້ໄປເຖິງຈຸດທີ່ຍານອາວະກາດລົງສູ່ພື້ນດິນຢ່າງໄວວາ ແລະ ທັນການພ້ອມກັບໄດ້ເປີດບານປະຕູຍານເພື່ອຊອກຄົ້ນນັກອາວະກາດ ແລະເກັບກູ້ຍານຄືນຢ່າງປອດໄພ.

ຫຼັງຈາກພະນັກງານກູ້ຊີບໄດ້ເປີດປະຕູຍານອອກແລ້ວ,ນັກອາວະກາດທ່ານຈາຍຈື້ກັງ,ທ່ານລິວປັວມິງ ແລະ ທ່ານຈິງຮາຍເຜີງກໍໄດ້ຍ່າງອອກຈາກຍານຕາມລຳດັບ.ພ້ອມໄດ້ຍົກມືແກວ່ງສະແດງເຖິງຄວາມເຄົາລົບໃຫ້ແກ່ພະນັກງານກູ້ຊີບ ແລະ ບັນດານັກຂ່າວທີ່ຢືນລໍຄອຍຢູ່ທີ່ສະໜາມ.ຫຼັງຈາກນັ້ນນັກບິນອາວະກາດທັງສາມທ່ານກໍໄດ້ແບ່ງກັນຂຶ້ນຍົນເອເລກົບເຕີສາມລຳ,ບິນຕົງໄປທີ່ນະຄອນຮູເຫີຮາວເທີ.ພວກເພິ່ນຈະໄດ້ຮັບການກວດກາທາງດ້ານວິທະຍາການແພດຢູ່ທີ່ນະຄອນໄຂ່ມຸກທົ່ງຫຍ້າແຫ່ງນີ້,ພ້ອມໆກັບການພັກຜ່ອນຕາມອະທະຍາໃສ.ໃນມື້ວັນທີ 29 ຈະໄດ້ຂຶ້ນຍົນສະເພາະເພື່ອຈະບິນກັບນະຄອນຫຼວງປັກກິ່ງ.

ໃນເວລາ 21 ໂມງ 10 ນາທີຂອງວັນທີ 28 ເດືອນກັນຍາ,ຍານອາວະກາດເຊີນໂຈວເປົ້ 7 ໄດ້ຖືກຍິງຂຶ້ນຈາກສູນຍິງດາວທຽມຂຶ້ນອາວະກາດຈິວຊຽນ.ຂະນະທີ່ຢູ່ໃນໄລຍະການ




ຍານອາວະກາດເຊິນໂຈວເບີ7ໄດ້ຂຶ້ນສູ່ອາວະກາດ
神舟七号飞船升空　新华社 图

ບິນ,ນັກອາວະກາດພາຍໃຕ້ການສົມທົບກັບການຈັດຕັ້ງບັນຊາ ແລະ ລະບົບການຕິດຕາມໄດ້ສຳເລັດການເຄື່ອນໄຫວອອກຈາກຍານ ແລະ ທຳທົດລອງຂອງວິທະຍາສາດທີ່ຢູ່ໃນອາວະກາດຕາມລະບົບ,ຍານອາວະກາດເຊີນໂຈວເປີ້ 7 ໄດ້ປ່ອຍດາວທຽມທີ່ຕິດໄປພ້ອມໆກັບການດຳເນີນການທົດລອງການບິນອ້ອມ.ຕົວເລກຂໍ້ມູນທົດລອງທີ່ໄດ້ມາຈາກດາວທຽມ "ດາວທຽມຕິດລຽນເປີ້ 1 "ກໍໄດ້ຮັບໝາກຜົນເພິ່ງພໍໃຈທີ່ສຳຄັນ.

ໃນໄລຍະທີ່ຍານອາວະກາດໄດ້ເດີນຕາມເສັ້ນໂຄຈອນ, ສູນຄວບຄຸມການບິນອາວະກາດທີ່ນະຄອນຫຼວງປັກກິ່ງ,ສູນຕິດຕາມຄວບຄຸມດາວ ທຽມຊີອານພ້ອມດ້ວຍກຳປັ່ນຕິດຕາມການເດີນອາວະກາດ 5 ລຳກໍໄດ້ສົບທົບປະສານງານກັນຢ່າງໜັກແໜ້ນ ແລະ ກໍໄດ້ຮັບການຮ່ວມມືກັບສະຖາບັນຄົ້ນຄ້ວາວິທະຍາສາດທີ່ກ່ຽວຂ້ອງຢ່າງໃຫຍ່ຫຼວງ,ໄດ້ມີການຕິດຕາມ,ຄິດໄລ່ວັດແທກ ແລະ ຄວບຄຸມຍານອາວະກາດຢ່າງຕໍ່ເນື່ອງ.ທັງນີ້ກໍເພື່ອຮັບປະກັນຍານອາວະກາດເດີນໄດ້ໂດຍປົກກະຕິ.

ຜູ້ຮັບຜິດຊອບໂຄງການເດີນອາວະກາດບັນຈຸຄົນແຫ່ງປະເທດຈີນໄດ້ຊີ້ບອກໃຫ້ເຫັນວ່າ:ການບັນລຸຜົນຢ່າງເຕັມສ່ວນຂອງການເດີນອາກາດເຊີນໂຈວເປີ້ 7 ທີ່ມີຄົນຂຶ້ນໄປພ້ອມ,ຊຶ່ງແມ່ນການຄືບໜ້າອັນໃຫຍ່ອັນໜຶ່ງຂອງການທີ່ມີຄົນໄປພ້ອມກັບຍານອາວະກາດຂອງຈີນ,ພາຍຫຼັງຍານອາວະກາດເຊີນໂຈວເປີ້ 5 ແລະ ເປີ້ 6 ໄດ້ຂຶ້ນສູ່ອາກາດແລ້ວ,ມັນໄດ້ກາຍເປັນຂີດໝາຍອັນຍິ່ງໃຫຍ່ຂອງປະເທດຈີນໄດ້ກາຍເປັນປະເທດອັນດັບທີສາມທີ່ກຳໄດ້ທາງດ້ານເຕັກນິກຂອງການແຍກຕົວອອກຈາກຍານຢ່າງເປັນເອກະລາດ,ຄວາມໄຝ່ຝັນຂອງປະຊາຊາດຈີນທີ່ຢາກເດີນລອຍຕົວບິນອາ



3ນັກອາວະກາດເຊີນໂຈວເປີ 7 ໂບກມືສະແດງຄວາມນັບຖືຕໍ່ຊຸມຊົນທີ່ຕ້ອນຮັບຢູ່ໃນເດີ່ນບິນ
3 名神七航天员在机场向欢迎人群挥手致意　新华社 图



ວັນ26ກັນຍາປີ2008,ນັກຄົ້ນຄ້ວາວິທະຍາສາດຟ້າວເຮັດວຽກທັງ ເປັນລະບຽບຢູ່ໃນສູນຄວບຄຸມອາວະກາດປັກກິ່ງ.
2008 年 9 月 26 日，科研人员在北京航天飞行控制中心紧张有序地工作　新华社 图



ຍານອາວະກາດເຊີນໂຈວເບີ 7 ຕໍ່ເຂົ້າກັນກັບຈະຫຼວດຂົນສົ່ງ F ຊາງເຈີນເບີ 2ໃນໂຮງຈັກໂຮງງານປະກອບຊື່ກົງ
神舟七号飞船与长征二号 F 运载火箭在垂直装配厂房进行对接　新华社 图



ຍານອາວະກາດເຊີນໂຈວເບີ7ຕໍ່ເຂົ້າກັນກັບຈະຫຼວດຂົນສົ່ງF ຊາງເຈີນເບີ 2ໃນໂຮງຈັກໂຮງງານປະກອບຊື່ກົງ
神舟七号飞船与长征二号 F 运载火箭在垂直装配厂房进行对接　新华社 图




ນັກອາວະກາດເຈີຈື້ກັງ,ລິວປ໋ວມິງ,ຈິນໄຮພົງລາຍງານສະພາບການສຸກຂະພາບຂອງຕົນແກ່ພະນັກງານສູນຄວບຄຸມໜ້າດິນໃນເວລາຍານອາວະກາດເຊີນໂຈວເບີ7ບິນອ້ອມໜ່ວຍໂລກ 45ຮອບ
翟志刚（中)、刘伯明（右）和景海鹏在神舟七号载人飞船绕行地球第 45 圈时向地面控制中心工作人员汇报身体状况　新华社 图



ເສື້ອໃນລະເຫີຍນ້ຳເຫື່ອຂອງເຄື່ອງນຸ່ງເດີນລອຍຕົວອາວະກາດນອກຍານໃນຍານອາວະກາດເຊີນໂຈວເບີ7ບັນຈຸຄົນ
神舟七号载人飞船内亮相的舱外航天服内层用于人体散热的紧身液冷服
新华社 图




ແຜນພາຍຮອຍລາງເດີນອາວະກາດບິນອ້ອມໜ່ວຍໂລກຂອງຍານອາວະກາດເຊີນໂຈວເບີ7ບັນຈຸຄົນ.
神舟七号载人飞船在太空飞行的轨迹图　新华社 图



ຍານອາວະກາດເຊິນໂຈວເບີ7ບິນອ້ອມໜ່ວຍໂລກຮອບສຸດທ້າຍ

神七绕行地球最后一圈　新华社 图

ອະກາດນັ້ນ.ບາດນີ້ມັນກໍໄດ້ກາຍເປັນຄວາມຈິງ.ການບັນລຸເປົ້າໝາຍໃນການເດີນອາວະກາດໃນຄັ້ງນີ້ມັນໄດ້ຊີ້ບອກວ່າລະດັບເຕັກນິກລວມຂອງໂຄງການເດີນອາວະກາດບັນຈຸຄົນຂອງປະເທດຈີນໄດ້ຮັບການຍົກສູງຢ່າງຮອບດ້ານ.ເຕັກໂນໂລຢີຂອງຈະຫຼວດໃຊ້ໃນການຂົນສົ່ງ,ລະບົບຍານມີຄວາມປອດໄພ ແລະ ເຊື່ອໝັ້ນໄດ້.ເຕັກນິກໃນການຍິງຍານຂຶ້ນອາວະກາດ,ການຕິດຕາມຄວບຄຸມ ແລະ ການກັບຕ່າວຄືນແມ່ນໄປທາງທີ່ສຸກງອມ.ຜົນງານທີ່ນຳໃຊ້ເຕັກນິກຢູ່ໃນອາວະກາດໄດ້ຢ່າງຈະແຈ້ງ ແລະ ເດັ່ນ




ນັກອາວະກາດລິວປໍວມິງເອົາທຸງຊາດຈີນຍື່ນໃຫ້ເຈີຈື້ກັງທີ່ຢູ່ນອກຍານ.

航天员刘伯明将中国国旗递给出舱的翟志刚　新华社 图





ນັກອາວະກາດເຊີນໂຈວເບີ 7 ອອກຈາກຍານອາວະກາດ.
神七航天员出舱　新华社 图




ແຜນທີ່ຈີນທີ່ເຮັດດ້ວຍໄໝທີ່ຂຶ້ນສູ່ຍານອາວະກາດເຊີນໂຈວ ເບີ 7ໄດ້ສະແດງອອກໜ້າກັບມວນຊົນ
搭乘“ 神七 ”上天的丝绸版《中华人民共和国地图》与观众见面　新华社 图




ນັກອາວະກາດເຈີຈືກັງອອກຈາກຍານອາວະກາດເຊີນໂຈວເບີ 7ເກັບນຽນຄືນວັດສະດຸນ້ຳມັນມື່ນແຂງໃນອາວະກາດ
执行神舟七号载人航天飞行出舱活动任务的航天员翟志刚出舱后，在太空中回收固体润滑材料　新华社 图

ຊັດ,ການຄົ້ນຄ້ວາເຄື່ອງນຸ່ງທີ່ໃຊ້ຢູ່ນອກຍານກໍໄດ້ທະລຸເປົ້າໝາຍຢ່າງໃຫຍ່ຫຼວງ.ນັກອາວະກາດໄດ້ມີຄວາມສາມາດແບບສັງລວມເພື່ອອອກຈາກຍານສຳເລັດໜ້າທີ່ທົດລອງວິທະຍາສາດ.ການສຳເລັດໜ້າທີ່ໃນການບິນຄັ້ງນີ້ຢ່າງບັນລຸຜົນ.ເພື່ອບັນລຸຍຸດທະສາດການພັດທະນາໂຄງການເດີນອາວະກາດບັນຈຸຄົນ"ຍ່າງດ້ວຍສາມບາດກ້າວໃຫ້ເປັນຈິງ,ສ້າງຕັ້ງຫ້ອງທົດລອງທີ່ມີຄົນເບິ່ງແຍງດູແລໄລຍະສັ້ນຢູ່ກາງອາວະກາດ.ເປີດຂະບວນການຄົ້ນຄວ້າປະຍຸກອາວະກາດທີ່ມີຂະໜາດອັນໃດອັນໜຶ່ງ,ພັດທະນາເປັນສະຖານນີອາວະກາດຂອງປະເທດຈີນ,ສ້າງພື້ນຖານໃຫ້




ຈະຫລວດຍານອາວະກາດເຊີນໂຈວເບີ 7ຕົວປະສົມຖືກຍົນສົ່ງໄປເຂດຍິງດາວທຽມ.
神七船箭塔组合体垂直转运至发射区　新华社 图



ໃນພິທີມອບຮັບ,ພະນັກງານເອົາທຸງຊາດຕັກແສ່ວອອກມາຈາກຍານ.
搭载物交接仪式上，工作人员取出出舱航天员曾在太空展示的手绣国旗　新华社 图




ແຫນັ້ນໜາໃນການຄົ້ນຄວ້າວິທະຍາສາດ ແລະ ເຕັກນິກ.

ການເດີນອາວະກາດບັນຈຸຄົນແມ່ນພາລະກິດອັນຍິ່ງໃຫຍ່ໃນການສ້າງຄວາມພູນສຸກໃຫ້ແກ່ມວນມະນຸດ. ໂຄງການເດີນອາວະກາດບັນຈຸຄົນຂອງປະເທດຈີນໄດ້ປະຕິບັດທີ່ເປັນຈິງເປັນຕົ້ນມາ, ໃນເວລາ 16 ປີອັນສັ້ນໆກໍໄດ້ບັນລຸຜົນເລີ່ມຈາກທີ່ບໍ່ມີຄົນກ້າວມາເຖິງໃສ່ໄດ້ສາມຄົນ ແລະ ເປັນບາດກ້າວກະໂດດຂ້າມຢ່າງໃຫຍ່ຈາກພາຍໃນຍານເຖິງການອອກຈາກຍານອາວະກາດ. ຜົນງານດັ່ງກ່າວນີ້ເຮັດໃຫ້ທົ່ວໂລກຈັບຕາມອງ ແລະ ຜົນງານທີ່ໄດ້ມານັ້ນກໍບໍ່ແມ່ນໄດ້ມາຢ່າງງ່າຍດາຍ.

ການເດີນອາວະກາດຂອງເຊີນໂຈວເປີ້ 7 ໄດ້ເດີນອອກເປັນບາດກ້າວນ້ອຍໆທີ່ຢູ່ກາງອາວະກາດ, ແຕ່ປະເທດຈີນແມ່ນກ້າວໜ້າໄປບາດກ້າວໜຶ່ງທີ່ໃຫຍ່, ການຄົ້ນຫາອາວະກາດໂດຍທີ່ບໍ່ມີວັນສິ້ນສຸດ, ການປະຕິຮູບພັດທະນາເປັນໜ້າທີໜັກໜາ ແລະ ກວ້າງໄກ. ຕໍ່ໜ້າອາວະກາດທີ່ບໍ່ມີຂອບແດນ, ປະຊາຊົນຈີນ ແລະ ປະຊາຊົນແຕ່ລະປະເທດໃນໂລກຈະພ້ອມກັນສູ້ຊົນນຳໃຊ້ອາວະກາດດ້ວຍສັນຕິ. ເພື່ອປະກອບສ່ວນອຸທິດກຳລັງໃໝ່ຢ່າງບໍ່ຢຸດຢັ້ງເຂົ້າພາລະກິດອັນສູງສົ່ງແຫ່ງການພັດທະນາ ແລະ ສັນຕິພາບຂອງມວນມະ ນຸດ. ປະຊາຊົນຈີນທີ່ປາຖະໜາມີການພັດທະນາໃນອະນາຄົດນັ້ນ, ຈະເສີມຂະຫຍາຍທັດສະນະພັດທະນາວິທະຍາສາດຢ່າງຕື່ນຕົວຍິ່ງຂຶ້ນ, ເລັ່ງລັດການປະຕິຮູບ ແລະ ເປີດປະຕູສູ່ພາຍນອກຢ່າງໜ່ຽວແໜ້ນ, ຂຽນບົດໃໝ່ເລື້ອຍໆໃນເສັ້ນທາງບັນລຸປະຊາຊາດຈີນຟື້ນຟູຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ໃຫ້ປາກົດເປັນຈິງ.



ວັນທີ28ກັນຍາ, ຍານອາວະກາດເຊີນໂຈວເບີ7ໄດ້ກັບຄືນສູ່ສີຈື່ວາງຈີມົງໂກນໃນຢ່າງສຳເລັດ. ພະນັກງານກູ້ຊີບກຳລັງເກັບມ້ຽນໄວ້ຍານ.
9 月 28 日，神舟七号载人航天飞船返回舱在内蒙古四子王旗成功着陆后，搜救人员在回收返回舱　新华社 图




ຖະໜົນຮົງກົງພວມຖ່າຍທອດສົດສະພາບການຍິງຍານອາວະກາດເຊິນໂຈວເບີ 7
香港街头播放神七发射直播画面　新华社 图




ຄອບຄົວຂອງຈິນໄຮພົງແລະຊາວບ້ານພວມເບິ່ງການຖ່າຍທອດສົດສະພາບການຍານອາວະກາດເຊິນໂຈວເບີ7ບັນຈຸຄົນກັບຄືນສູ່ພື້ນດິນ.
景海鹏的家人和村民们观看神七飞船返回电视直播　新华社 图



ພະນັກງານສູນຄວບຄຸມອາວະກາດກະກຽມພ້ອມເພື່ອໃຫ້ແກ່ການເດີນຂອງຍານອາວະກາດເຊິນໂຈວເບີ7ບັນຈຸຄົນ
北京飞控中心为神七飞行做好准备　新华社 图



ນັກອາວະກາດ3ຄົນຮັບຊໍ່ດອກໄມ້ຂອງເຢົາວະຊົນ
神舟七号 3 名航天员接受少先队员献花　新华社 图




110ທົ່ງຫຍ້າສະເຫຼີມສະຫລອງຍານອາວະກາດເຊິນໂຈວເບີ7ກັບຄືນສູ່ພື້ນດິນຢ່າງສຳເລັດ.
“ 草原 110 ” 庆祝神七成功着陆　新华社 图

# ສື່ມວນຊົນຕ່າງປະເທດໄດ້ຕີລາຄາ ການເດີນຂອງຍານອາວະກາດເຊີນ ໂຈວເປີ້ 7 ຢ່າງຕັ້ງໜ້າ

## 外国媒体积极评价神舟七号飞行圆满成功

中国神舟七号载人飞船返回舱 9 月 28 日成功着陆后，外国媒体在第一时间对此进行了报道和评价，认为中国的航天计划向前迈出了一大步。

ວັນທີ 28 ຫຼັງຈາກຍານອາວະກາດເຊີນ ໂຈວເປີ້ 7 ຂອງຈີນໄດ້ລົງສູ່ແຜ່ນດິນໃຫຍ່ແລ້ວ, ບັນດາສື່ມວນຊົນນາໆຊາດໃນເວລາທີ່ໜຶ່ງກໍໄດ້ອອກຂ່າວ ແລະ ຕີລາຄາໃຫ້ແກ່ເຫດການໃນຄັ້ງນີ້ຮັບຮູ້ວ່າແຜນການອາວະກາດຂອງຈີນໄດ້ກ້າວໄປອີກບາດກ້າວໃຫຍ່.

ເວັບໄຊຂອງບໍລິສັດກະຈາຍສຽງແຫ່ງປະເທດອັງກິດກໍໄດ້ລົງບົດທີ່ມີຫົວຂໍ້ 《ຍານອາວະກາດຂອງຈີນກັບຄືນສູ່ໜ່ວຍໂລກ》 ໄດ້ຊີ້ແຈ້ງວ່າ:ຍານອາວະກາດເຊີນ ໂຈວເປີ້ 7ຂອງຈີນຫຼັງຈາກສຳເລັດໜ້າທີ່ບິນອ້ອມໜ່ວຍ ໂລກແລ້ວ, ມື້ນີ້ໄດ້ກັບຄືນສູ່ໜ່ວຍ ໂລກ. ຍານອາວະກາດພາຍໃຕ້ບັນຍາກາດຮ້ອງ ໂຮຊົມເຊີຍຢ່າງຟົດຟື້ນຢູ່ທີ່ສູນຄວບຄຸມການບິນຂອງນະຄອນຫຼວງປັກກິ່ງໄດ້ລົງສູ່ພື້ນດິນທະເລຊາຍເຂດແດນພາຍໃນມົງ ໂກນໃນ. ເມື່ອນັກອາວະກາດສາມຄົນໄດ້ຍ່າງອອກຈາກຍານເບິ່ງແລ້ວຢູ່ໃນສະພາບດີຫຼາຍ, ໃນຂະບວນການເຂົາເຈົ້າໄດ້ບິນຕາມ ໂຄຈອນຂອງຍານອາວະກາດ. ເຂົາເຈົ້າໄດ້ດຳເນີນການທົດລອງທີ່ມີຄວາມສຳຄັນໃນແຜນການເດີນອາວະກາດຂອງຈີນ ແລະ




ກອງບັນຊາການໃຫຍ່ຍານອາວະກາດເຊີນ ໂຈວເປີ7ບັນຈຸຄົນໄດ້ຈັດສຳພາດຂ່າວທີ່ສູນຍິງດາວທຽມຈິວຊວຽນ
神舟七号载人航天飞行任务总指挥部新闻发布会在酒泉卫星发射中心举行　CFP 图

ໄດ້ບັນລຸຜົນຄັ້ງທຳອິດທີ່ຈີນໄດ້ເດີນລອຍຕົວໃນອາວະກາດ.

ສະຖານີຂ່າວສານຂອງປະເທດຝຣັ່ງ,ຕາມຂ່າວໜູນວຽນນັ້ນໄດ້ອອກຂ່າວເປັນຂ່າວຄັ້ງທຳອິດທີ່ຍານອາວະກາດເຊີນໂຈວເປີ້ 7 ໄດ້ກັບລົງສູ່ແຜ່ນດິນຢ່າງປອດໄພ.ຄິດວ່າການອອກຈາກຍານອາວະກາດຄັ້ງແລກຂອງນັກອາວະກາດຈີນແມ່ນໄດ້ບັນລຸການທະລຸໃນປະຫວັດສາດ.ສະຖານີ TV ຊ່ອງ 2ຂອງຝຣັ່ງເສດກໍໄດ້ອອກຂ່າວວ່າ:ຍານອາວະກາດທີ່ຂັບດ້ວຍຄົນເຊີນໂຈວເປີ້ 7 ກໍໄດ້ຂັບລົງສູ່ແຜ່ນດິນຢ່າງສຳເລັດ,ສະຖານີ TV ແຫ່ງຊາດຂອງຈີນກໍໄດ້ທຳການຖ່າຍທອດສົດຂະບວນການ,ແຜນການອອກເດີນລອຍອາວະກາດຂອງຈີນຈະນຳໃຫ້ປະເທດຈີນກ້າວເຂົ້າສູ່ເປົ້າໝາຍການກໍ່ສ້າງສະຖານີຢູ່ອາວະກາດ ແລະ ສຳຫຼວດດວງເດືອນ.

ສຳນັກຂ່າວສານແຫ່ງປະເທດຊູແອດໄດ້ຊີ້ບອກວ່າ:ເມື່ອຍານທີ່ມີນັກອາວະກາດຈີນກໍເປັນປະເທດຜູ້ທີສາມຖັດຈາກປະເທດອາເມລິກາ ແລະ ໂຊວຽດທີ່ສຳເລັດຜົນທີ່ມະນຸດເດີນລອຍຕາມຊອາວະກາດ,ນັ້ນໄດ້ກາຍເປັນຂີດໝາຍຂອງປະເທດຈີນ ທີ່ເດີນອອກບາດກ້າວໃຫຍ່ໜຶ່ງໃນການກ້າວເຂົ້າສູ່ຖານແຖວປະເທດທີ່ເກັ່ງທາງດ້ານອາວະກາດ.

ສຳນັກງານຂ່າວສານແຫ່ງຊາດຣູມານີໄດ້ອອກຂ່າວຫົວຂໍ້《ເຊີນໂຈວເປີ້ 7 ໄດ້ລົງສູ່ໜ່ວຍໂລກ》ໄດ້ຂຽນວ່າ:ຍານອາວະກາດເຊີນໂຈວເປີ້ 7 ໄດ້ສຳເລັດການເດີນລອຍຢູ່ອາວະກາດຢ່າງມີປະຫວັດການແລ້ວລົງສູ່ໜ່ວຍໂລກ.ການບັນລຸເປົ້າໝາຍຂອງເຊີນໂຈວເປີ້ 7 ຊຶ່ງແມ່ນໝາກຜົນຄັ້ງໃຫຍ່ຫຼັງຈາກປະເທດຈີນໄດ້ເອົາຄົນຂຶ້ນອາວະກາດພາຍຫຼັງປີ 2003 .ທັງເປັນບາດກ້າວໃຫຍ່ໜຶ່ງຂອງແຜນການເດີນອາວະກາດ.

ສຳນັກຂ່າວຄົວໂຕຍີປຸ່ນໄດ້ຊີ້ອອກວ່າ:ໝາກຜົນຂອງປະເທດຈີນທີ່ໄດ້ປະຕິຮູບເປີດປະຕູສູ່ພາຍນອກ 30 ປີ,ເຊີນໂຈວເປີ້ 7 ໄດ້ສະແດງໃຫ້ເຫັນປະເທດຈີນຕໍ່ພາຍໃນ ແລະ ຕ່າງປະເທດເຫັນອີກເທື່ອໜຶ່ງໃນເວັບໄຊ《ຂ່າວສານຕູນາຍ》ຂອງຍີປຸ່ນກໍໄດ້ຂຽນວ່າ:ປະເທດຈີນເປັນປະເທດທີສາມຫຼັງຈາກປະເທດອາເມລິກາ ແລະ ປະເທດໂຊວຽດທີ່ປະສົບຜົນສຳເລັດໃນການເດີນລອຍຢູ່ອາວະກາດ.ປະເທດຈີນໄດ້ມີພາບພົດເປັນ《ຊາດໃຫຍ່ອາວະກາດ》ປະທັບໃຈຕໍ່ຄົນທັງພາຍໃນ ແລະ ຕ່າງປະເທດຢ່າງເລິກເຊິ່ງ.



ຫ້ອງການຂ່າວຈັດງານສຳພາດຂ່າວກ່ຽວກັບສະພາບການເດີນຂອງ ຍານອາວະກາດ ເຊີນໂຈວເປີ7ບັນຈຸຄົນແລະນັກອາວະກາດອອກຈາກຍານ.
国务院新闻办就神七运行、航天员出舱等情况举行新闻发布会 新华社 图

ນອກນັ້ນ《ໜັງສືພິມວໍຊິງຕັນ》ແລະ《ໜັງສືພິມນິວຢອກແທມ》ຂອງອາເມລິກາໃນວັນທີ 28 ກໍໄດ້ອອກຂ່າວຢ່າງລະອຽດກ່ຽວກັບສະພາບນັກອາວະກາດຂອງເຊີນໂຈວເປີ້ 7 ທີ່ໄດ້ເດີນລອຍຢູ່ອາວະກາດ,ຍ້ອງວ່າ:"ການເດີນລອຍຢູ່ກາງອາວະກາດຄັ້ງທຳອິດເປັນສິລາຈາລຶກອີກແຫ່ງໜຶ່ງທີ່ຈີນກ້າວເຂົ້າສູ່ໂຄງການສຳຫຼວດອາວະກາດ." "ເປັນບາດກ້າວທີ່ໜຶ່ງຂອງຈີນທີ່ຈີນນັ້ນກ້າວເຂົ້າສູ່ເປົ້າໝາຍການສ້າງຕັ້ງສະຖານີອາວະກາດ."

ໜັງສືພິມຂ່າວສານ TV ໃຊ້ສາຍຂອງອາເມລິກາໄດ້ຂຽນວ່າ:ການເດີນລອຍອາວະກາດນັ້ນໄດ້ປູທາງໃຫ້ແກ່ຈີນທີ່ສ້າງຕັ້ງສະຖານີອາວະກາດຕໍ່ໄປຊຶ່ງແມ່ນເປົ້າໝາຍຕໍ່ໄປໃນການສຳຫຼວດຄົ້ນຫາອາວະກາດຂອງປະເທດຈີນ,ສະຖານີກະຈາຍສຽງສາທາລະນະທົ່ວປະເທດຂອງອາເມລິກາໄດ້ລາຍງານຂ່າວວ່າ:ການເດີນລອຍອາວະກາດເຊິ່ງມີຄວາມໝາຍສິລາຈາລຶກສະແດງໃຫ້ເຫັນຄວາມກ້າວໜ້າຂອງປະເທດຈີນທາງດ້ານວິທະຍາສາດເຕັກນິກເຕັກໂນໂລຊີ.ການເດີນລອຍອາວະຍະກາດໄດ້ຍົກສູງຄວາມເອກອ້າງທະນົງກຽດຂອງປະຊາຊາດຈີນໂດຍສະເພາະແມ່ນກຸ່ມຊາວໜຸ່ມ ແລະ ໄວລຸ່ນແຮງຍິ່ງຂຶ້ນ.

## 中国服装翩跹起舞 30 年

曾几何时，在几亿中国人的衣柜里，绿、蓝、黑、灰等几种颜色的衣服占据了绝对的“统治地位”。20 世纪 70 年代末 80 年代初，国门打开、观念变更，中国人重新打量自己的穿着，逐渐认同穿着打扮是没有阶级性的。中国人深埋几十年的爱美之心，开始在服饰上得以释放。



ປີ1991,ກະໂປ່ງເຂີນໆທີ່ນິຍົມໃນນະຄອນຕາລຽນ
大连 1991 年流行的超短裙风韵独具　新华社 图



ວັນທີ5 ເມສາປີ2005.ຊາວໜຸ່ມຍິງນຸ່ງເຄື່ອງລະດູຮ້ອນສອງຄົນຍ່າງໃນສະໜາມຫລວງນະຄອນຈີນານແຂວງຊານຕຸງ.
2005 年 4 月 5 日，两名身着夏装的女青年走在山东济南市泉城广场上　新华社 图

# 30 ປີຜ່ານມາການຈະເລີນເຕີບໂຕ

ໃນເມື່ອກ່ອນບໍ່ດົນປານໃດຢູ່ໃນຕູ້ເສື້ອຜ້າຂອງຊາວຈີນຫລາຍຮ້ອຍລ້ານຄົນເສື້ອຜ້າສີຂຽວ, ສີຟ້າ, ສີດຳ, ສີໝົ່ນ ແລະ ສີອື່ນໆໄດ້ຢູ່ "ຖານະການຍຶດຄອງ" ຢ່າງເດັດຂາດ.

ທ້າຍທົດສະວັດຊຸມປີ 70- ຕົ້ນທົດສະວັດຊຸມປີ80ຂອງສະຕະວັດທີ 20, ປະຕູເມືອງຖືກເປີດອອກ, ທັດສະນະຄະຕິຖືກປ່ຽນແປງ, ຊາວຈີນໄດ້ພິນິດວິເຄາະຄືນໃໝ່ຕໍ່ການນຸ່ງຖືຂອງຕົນເອງຢູ່ໃນສາຍຕາທີ່ມີຄວາມສົງໄສຕໍ່ຕົນເອງນັ້ນ, ໄດ້ຄ່ອຍໆມີຄວາມເຫັນເປັນເອກະພາບກັນວ່າ: ການນຸ່ງເຄື່ອງແຕ່ງກາຍນັ້ນມັນບໍ່ມີລັກສະນະຊົນຊັ້ນ. ຈິດໃຈມັກຄວາມສວຍງາມຂອງຊາວຈີນທີ່ຖືກ



ຍີ່ຫໍ້ດັງເສື້ອຜ້າອາພອນຈີນໄດ້ຄັດເລືອກເຂົ້າສູ່ສັບປະດາອາພອນປາລີເປັນເທື່ອທຳອິດ.
中国服装品牌首次入选巴黎时装周　新华社 图

# ປ່າງຫນ້າເຊີ່ນຊົນຂອງເສື້ອຜ້າອາພອນຈີນ

ທັບຖົມຢ່າງເລິກ ແລະ ໜັກໜ່ວງເປັນຫລາຍສິບປີມາແລ້ວນັ້ນ, ເລີ່ມໄດ້ຖືກປົດປ່ອຍກ່ອນເພີ່ນດ້ານການນຸ່ງຖືປະດັບກາຍ.

**ພາຍຫລັງເປີດ "ຜ້າແດງປົກໜ້າ (ເຈົ້າສາວ)"ອອກແລ້ວ**

ໃນລະຫວ່າງ 10 ປີຂອງຕົ້ນສະໄໝທຳອິດແຫ່ງການປະຕິຮູບເປີດປະຕູສູ່ພາຍນອກນັ້ນ,ການກະທຳອັນໃດທີ່ກ່ຽວຂ້ອງກັບການນຸ່ງຖືເກືອບເວົ້າໄດ້ວ່າລ້ວນແຕ່ເກີດຜົນສະທ້ອນປານ "ກ້ອນຫີນກ້ອນດຽວພາໃຫ້ເກີດກະແສຄື່ນຮ້ອຍຊັ້ນ".ມີຄົນເວົ້າວ່າ:ນີ້ແມ່ນຍ້ອນ Pierre Chardin ໄດ້ເປີດ "ຜ້າແດງປົກໜ້າ" ເຄື່ອງນຸ່ງຂອງຈີນ.

ລະດູບານໃໝ່ຂອງປີ1979, Pierre Chardin ນັກ ອອກແບບເຄື່ອງນຸ່ງທັນສະໄໝທີ່ລືຊື່ຂອງຝຣັ່ງໄດ້ຮັບການເຊື້ອເຊີນມາຈັດງານແຟຊັນຄັ້ງໜຶ່ງຢູ່ຫໍວັດທະນະທຳແຫ່ງຊາດທີ່ປັກກິ່ງ. ງານແຟຊັນເຄື່ອງນຸ່ງແບບທັນສະໄໝທີ່ເປັນສັນຍາລັກມິດຕະພາບລະຫວ່າງຈີນກັບຝຣັ່ງຄັ້ງນີ້,ໃນເວລານັ້ນຖືກເອີ້ນວ່າ: "ງານສັງເກດ ແລະ ຄົ້ນຄວ້າຮ່ວມກັນ ແລະ ດ້ານເຄື່ອງນຸ່ງ" ເຈົ້າໜ້າທີ່ທີ່ເຂົ້າຮ່ວມ "ງານສັງເກດ ແລະ ຄົ້ນຄວ້າຮ່ວມກັນ "ຕ້ອງຜ່ານການກວດກາສອບຖາມ,ບ່ອນນັ່ງກໍລ້ວນແຕ່ເຂົ້ານັ່ງຕາມເລກຂອງບ່ອນນັ່ງ,ບໍ່ໜຳຍັງຕ້ອງຈົດຊື່ ແລະ ນາມສະກຸນອີກດ້ວຍ. ເຖິງວ່າທ່ານ Pierre Chardin ໄດ້ພິຈາລະນາຢ່າງເຕັມທີ່ຕໍ່ສະພາບບ້ານເມືອງຂອງຈີນເວລານັ້ນແລ້ວກໍຕາມ,ແຕ່ນາງແບບແຟຊັນຂອງຕ່າງປະເທດກໍຍັງໃຫ້ຜູ້ຊົມຊາວຈີນຢູ່ລຸ່ມເວທີປະສົບກັບການກະທົ່ງກະແທກຢ່າງຮ້າຍແຮງທີ່ບໍ່ເຄີຍມີມາກ່ອນ,ຫລາຍວາດຫລາຍຊົງ ແລະ ຫລາຍສີສັນຂອງເຄື່ອງນຸ່ງຢູ່ເທິງເວທີນັ້ນຍິ່ງກາຍເປັນການສົມທຽບອັນແຈ່ມແຈ້ງທີ່ສຸດກັບ "ສີປະຕິວັດ" ເປັນແຖວຢູ່ລຸ່ມເວທີ.

ການເຂົ້າຮ່ວມ "ງານສັງເກດ ແລະ ຄົ້ນຄວ້າຮ່ວມ" ຄັ້ງນີ້ຍັງຈຳກັດແຕ່ເຈົ້າໜ້າທີ່ ແລະ ນັກວິຊາການຂອງວົງການການຄ້າຕໍ່ຕ່າງປະເທດ ແລະ ວົງການເສື້ອຜ້າຂອງຈີນເທົ່ານັ້ນ.ເດືອນພະຈິກຂອງປີທີ 2,ເມື່ອຄະນະນາງແບບຄະນະທຳອິດຂອງແຜ່ນດິນໃຫຍ່ຈີນປະກົດຕົວຢູ່ຊຽງໄຮກໍເຮັດໃຫ້ທົ່ວທັງປະເທດຈີນເກີດມີທາງສຽງຢ່າງອຶກກະທຶກຄຶກໂຄມ.ກະແສຟອງຂອງທາງສຽງ



ພາບລະຄອນ《ກະໂປງສີແດງທີ່ນິຍົມໃນຖະໜົນຫົນທາງ》.ຮູບເງົານີ້ໄດ້ເລົ່າເລື່ອງຜູ້ອອກແຮງງານຍິງຕົວເດັ່ນກັບກະໂປງສວຍງາມໃນໂຮງງານຕຳແຜ່ນທີ່ຖ່າຍທຳໃນປີ1984
图为《街上流行红裙子》剧照。这部拍摄于 1984 年的电影讲述了纺织厂的女劳模与漂亮裙子之间的故事　新华社 图



ປີ1987,ຊາວໜຸ່ມຊຽງໄຮນິຍົມນຸ່ງເສື້ອແລນແລະໂສ້ງຄາໂບຍ
1987 年，上海年轻人穿着流行的粗线毛衣和牛仔裤　新华社 图



ງານສຳພາດທ່າອ່ຽງເສື້ອຜ້າອາພອນທີ່ນິຍົມຢູ່ຈີນໃນລະດູໃບໄມ້ຫລົ່ນແລະລະດູໜາວປີ2000-ປີ2001
2000 - 2001 秋冬中国服装流行趋势发布会　新华社 图



ລະດູຮ້ອນປີ1994.ນາງສາວເຊິນຕູນຸ່ງກະໂປ່ງຍາວຍ່າງຢູ່ຖະໜົນຫົນທາງ.ເວລານັ້ນ,ເຄື່ອງນຸ່ງຂອງຜູ້ສາວແບບນີ້ເຫັນວ່າມີສີສັນເອກະລາດ,ໃຈກ້າແລະສວຍງາມ.
1994 年夏日，成都的姑娘们身着长裙走在大街上。当年，姑娘们的这种装扮曾被认为具有大胆、奔放、俏皮的特色　新华社 图

ຕິດຕໍ່ໜໍ່ເນື່ອງ,ຮອດທ້າຍປີ 1983,ປະເທດຈີນໄດ້ລົບລ້າງບັດຜ້າທີ່ເຄີຍນຳໃຊ້ສືບຕໍ່ກັນມາຫລາຍສິບປີນັ້ນຢ່າງສິ້ນເຊີງ,ສຽງໂຮ່ຮ້ອງປະຕິຮູບເຄື່ອງນຸ່ງໄດ້ຟົດສະໜັ່ນໄປທົ່ວປະເທດຢ່າງໄວວາ.

ເວລານັ້ນ,ກະແສຄວາມນິຍົມການນຸ່ງຖືເພີ່ມຂຶ້ນໄວກວ່າເພິ່ນນັ້ນແມ່ນເຄື່ອງຊຸດຕາເວັນຕົກຜູ້ຊາຍ.ປີ 1984 ຢູ່ຕູ້ໂຊວຂອງຮ້ານຖ່າຍຮູບແຫ່ງໜຶ່ງຂອງຊຽງໄຮຍັງຕິດປ້າຍຂຽນວ່າ:"ຢູ່ທີ່ນີ້ມີຊຸດຕາເວັນຕົກໃຫ້ເຊົ່າ",ເພື່ອຕອບສະໜອງຕາມຄວາມນິຍົມຊົມຊອບນຸ່ງຊຸດຕາເວັນຕົກມາຖ່າຍຮູບຂອງຄົນທັງຫລາຍ.ໃນປີດຽວກັນນີ້ບັນດາສຸພາບບຸລຸດນິຍົມກັນນຸ່ງຊຸດຕາເວັນຕົກຢ່າງແຜ່ຫລາຍ,ສຸພາບສະຕີທີ່ໜຸ່ມນ້ອຍຊ້ຳພັດຕິດໃຈນຳກະໂປ່ງສີແດງ.ອັນນີ້ມັນມີແຫລ່ງກຳເນີດມາຈາກຮູບເງົາເລື່ອງໜຶ່ງທີ່ມີຊື່ວ່າ:"ຢູ່ບົນຖະໜົນນິຍົມນຸ່ງກະໂປ່ງສີແດງ"ໃນເວລານັ້ນ.ຮູບເງົາດັ່ງກ່າວໄດ້ຖືກຍ້ອງຍໍຢ່າງໃຫຍ່,ຖ້າວ່າເວລານັ້ນຫາກມີຄວາມເວົ້າທີ່ວ່າ:"ສຸກສັນວັນເກີດ"ແລ້ວ,ຜູ້ສາວທີ່ມີກະໂປ່ງແດງ ຜືນໜຶ່ງກໍຈະນອນຢູ່ກະແສຄື່ນ "ສຸກສັນວັນເກີດ" ອັນໜຶ່ງທີ່ນິຍົມຊົມຊອບທີ່ສຸດໃນເວລານັ້ນ.

## ເລື່ອງຜັນແປ ແລະ ພັດທະນາທ່າມກາງຄວາມຂັດແຍ່ງ.

ທ້າຍປີ 1989,ນັກຂ່າວໂປໂລຍຜູ້ໜຶ່ງມາຢ້ຽມຢາມຈີນ,ເມື່ອສຳພັດໂດຍຕົນເອງກັບປັກກິ່ງທີ່ເປັນນະຄອນຫລວງຂອງຈີນແລ້ວ,ທ່ານໄດ້ຂຽນບົດຄວາມໜຶ່ງວ່າ:"ກ່ອນໜ້ານີ້ບໍ່ເທົ່າໃດປີຫລືຫລາຍສິບປີກ່ອນ,ປັກກິ່ງເປັນຕົວເມືອງສີໜົ່ນຕົວເມືອງໜຶ່ງ,ມີບາງຄົນຈີນຕັ້ງຊື່ໃຫ້ປັກກິ່ງວ່າ:"ແມ່ນຊົນນະບົດຂອງໂລກ"ຄົນທັງຫລາຍນຸ່ງເຄື່ອງທັງງ່າຍດາຍທີ່ບໍ່ມີລົດນິຍົມ ແລະ ທັງເປັນແບບໜຶ່ງແບບດຽວກັນ...ມາດຽວນີ້ນຸ່ງເຄື່ອງທັນສະໄໝແລ້ວ,ນາງສາວທີ່ແຕ່ງຕົວແບບເອີລົບເຮັດໃຫ້ຖະໜົນຫົນທາງຂອງປັກກິ່ງຮູ້ສຶກວ່າສວຍງາມເປັນພິເສດຈົນຊົມນຳບໍ່ທັນ".

## "ຂໍແຕ່ແມ່ນເປັນສິ່ງທີ່ເຮົາມັກ,ບໍ່ມີອັນໃດແມ່ນບໍ່ສາມາດເຮັດໄດ້"

ຊຸມປີທົດສະວັດທີ 90 ຂອງສະຕະວັດທີ 20,ເສື້ອຢືດແບບພິມຕົວອັກສອນທີ່ພາກັນເອີ້ນວ່າ:"ເສື້ອວັດທະນະທຳ",ເສື້ອແບບຕົວເຈຍ ແລະ ອື່ນໆຍັງເຄີຍສ້າງກະແສຄື່ນອັນຟົດຟື້ນຂຶ້ນ,ເມື່ອກ້າວ

ເຂົ້າສູ່ສະຕະວັດທີ 21 ເປັນຕົ້ນມາ,ຈຸດນິຍົມແບບເສື້ອທີ່ເຄີຍມີຜົນກະທົບລັກສະນະທົ່ວປະເທດດັ່ງກ່າວກໍເລີຍມີດວງຮຸບຫາຍໄປ.ອັນນີ້ກໍພໍດີເປັນການອະທິບາຍວ່າການສະແຫວງຫາເຄື່ອງນຸ່ງຖືຂອງຊາວຈີນໄດ້ຫັນໄປສູ່ເປັນແບບບຸກຄະລິກຂອງບຸກຄົນ,ຫັນເປັນຫລາຍແບບຫລາຍສີແລ້ວ,ຄົນທັງຫລາຍເລີ່ມບໍ່ໄປຕາມ "ນິຍົມກັນຢ່າງແຜ່ຫລາຍ" ແບບງ່າຍດາຍ ແລະ ຫລັບຫູຫລັບຕາໄປນຳກະແສຄື່ນອີກແລ້ວແຕ່ຫາກແມ່ນໄປເລືອກຊື້ເອົາສິ່ງທີ່ຕົນມັກແລະເໝາະສົມກັບການຕົບແຕ່ງນຸ່ງຖືຂອງຕົນເອງ.

ມີເຄື່ອງນຸ່ງຍີ່ຫໍ້ດັງຈັກຜືນໄວ້ນຸ່ງ, ເວົ້າສຳລັບຄົນຈີນສາມັນໃນປະຈຸບັນແລ້ວ, ມັນບໍ່ໄດ້ເປັນເລື່ອງໜ້າຕື່ນເຕັ້ນແຕ່ປະການໃດແລ້ວ.ຄຽງຄູ່ກັບຄຳເວົ້າທີ່ມີຫົວເລື່ອງ: "ປົກປັກຮັກສາສິ່ງແວດລ້ອມ" ນັບມື້ນັບແຜ່ຫລາຍ,ເສື້ອຜ້າອາພອນທີ່ມີເນື້ອຜ້າທຳມະຊາດ,ສີຂອງຜ້າແລະຮູບແບບໃກ້ກັບທຳມະຊາດນັ້ນ,ນັບມື້ນັບຖືກນິຍົມຊົມຊອບ,ເຄື່ອງນຸ່ງນີເວດວິທະຍາແຕ່ລະແບບແຕ່ລະຊະນິດກໍທະຍອຍກັນປະກົດຢູ່ຫ້າງຮ້ານໃນຕະຫລາດ.ເມື່ອສັງເກດຢ່າງລະອຽດແລ້ວຍັງຈະພົບເຫັນ,ທາງດ້ານຮູບຊົງແລ້ວເສື້ອຜ້າອາພອນແບບລັກສະນະປານກາງໃນຊຸມປີໃກ້ໆມານີ້ສາມາດເວົ້າໄດ້ວ່າເຫັນກັນນຸ່ງສົມຄວນ,ເວົ້າແນວນີ້ກໍບໍ່ໝາຍຄວາມວ່າຈະກັບຄືນໄປສູ່ສະໄໝ "ການນຸ່ງເຄື່ອງບໍ່ແບ່ງຍິງຊາຍນ້ອຍໃຫຍ່" ທີ່ນຸ່ງຄືກັນໝົດ,ແຕ່ຫາກແມ່ນການສົ່ງເສີມສະທ້ອນລັກສະນະຊີ້ຂາດດ້ານເພດທີ່ຕ່າງກັນຕໍ່ການນຸ່ງຖືໄດ້ປະສົບກັບການທ້າທາຍໃໝ່ແລ້ວ.

ເມື່ອ 30 ປີມານີ້,ການວິນິດໄສຄວາມງາມຕໍ່ເຄື່ອງນຸ່ງຂອງຊາວຈີນໄດ້ເກີດມີລັກສະນະພິກປີ້ນດ້ານຮູບແບບ.ພາວະຈິດຂອງການນຸ່ງຖືທີ່ວ່າ: "ຂໍແຕ່ແມ່ນເຮົາມັກ,ບໍ່ມີອັນໃດບໍ່ສາມາດເຮັດໄດ້" ໄດ້ກາຍເປັນໃຈກາງຄວາມສຳນຶກຕໍ່ການນຸ່ງຖືຂອງຊາວຈີນໃນປະຈຸບັນແລ້ວ.

ໃນຕູ້ເສື້ອຜ້າຂອງຊາວຈີນກໍມີຫລາຍສີສັນສັບກັນຂຶ້ນແລ້ວ, ເພື່ອນເພດຍິງສ່ວນໜຶ່ງເລີ່ມມີຄວາມຮູ້ສຶກອຶດອັດໃຈໃນການນ້ຽນມັດຕູ້ເສື້ອຜ້າໃນຍາມປ່ຽນລະດູການ.ສຸພາບສະຕີເຊີ້ນຍ້ອນມີການໂຍກຍ້າຍວຽກງານຈຶ່ງໄດ້ມາຕັ້ງພູມລຳເນົາຢູ່ປັກກິ່ງໃນຊຸມປີທົດສະວັດ 90 ຂອງສະຕະວັດທີ 20,ນາງມີຄວາມຮູ້ສຶກວ່າ: "ເສື້ອຜືນດຽວນຸ່ງຫລາຍລະດູການນັ້ນແມ່ນຫລ້າສະໄໝໄປແລ້ວມາປະ




ເຄື່ອງນຸ່ງຍອດຢ້ຽມອາໄລເກົ່າໄດ້ປະກົດເຫັນຢູ່ປະຕູແດງປັກກິ່ງອີກ.
经典怀旧服饰重现北京大红门 新华社 图

ຈຸບັນແມ່ນສະໄໝ "ລະດູການໜຶ່ງນຸ່ງເສື້ອຫລາຍແບບ! ເຈົ້າລອງເບິ່ງ, ປະຈຸບັນນີ້, ຖ້າໄປຝຶກຫັດຮ່າງກາຍໄດ້ນຸ່ງເຄື່ອງກິລາ, ໄປເຮັດວຽກນຸ່ງເຄື່ອງແບບ, ໄປທ່ອງທ່ຽວຊໍ້ານຸ່ງເຄື່ອງແບບສະບາຍ. ເຄື່ອງນຸ່ງຂອງສາມີເຮົາກໍບໍ່ໜ້ອຍ, ຍັດໄວ້ ຢູ່ໃນຕູ້ຈົນເຕັມ, ເມື່ອປ່ຽນລະດູການເທື່ອໃດກໍພາກັນສົນລະວົນຂຶ້ນ ໄປຕາມໆກັນ" ເວລາຫາກໍມາເຮັດວຽກຢູ່ປັກກິ່ງບໍ່ເທົ່າໃດປີນັ້ນ, ສຸພາບສະຕີເຊີ້ນກັບຄືນເມືອເຮືອນຢູ່ຊິນນະບິດເທື່ອໃດກໍຈະເອົາເສື້ອຜ້າເກົ່າຖືເປັນ "ຂອງດີ" ຕິດຕົວໄປນໍາ, "ດຽວນີ້ຊິນນະບິດກໍພັດທະນາແລ້ວ, ເຄື່ອງນຸ່ງເກົ່າເຂົາກໍບໍ່ເອົາແລ້ວ.

## ພາບໜ້າອັນໃໝ່ຂອງເຄື່ອງນຸ່ງຈີນ

ບໍ່ພຽງແຕ່ເທົ່ານີ້, ການປະຕິຮູບເປີດປະຕູສູ່ພາຍນອກ30ປີມານີ້, ກິດຈະກໍາເຄື່ອງນຸ່ງຂອງຈີນເວົ້າລວມກໍເກີດການປ່ຽນແປງລັກສະນະຍຸກສະໄໝ.

ມາບັດນີ້, ຈີນບໍ່ພຽງແຕ່ເປັນປະເທດ ບໍລິໂພກເຄື່ອງນຸ່ງໃຫຍ່ທີ່ສຸດຂອງທົ່ວໂລກ ແລະ ກໍເປັນປະເທດທີ່ ຜະລິດເຄື່ອງນຸ່ງທີ່ໃຫຍ່ທີ່ສຸດຂອງທົ່ວໂລກ. ແຕ່ຈີນຍັງບໍ່ທັນກາຍເປັນປະເທດມະຫາອໍານາດການຄ້າເຄື່ອງນຸ່ງ. ເຮັດແນວໃດຈຶ່ງມີຫົວຄິດປະດິດສ້າງຂອງການອອກແບບທີ່ດີເລີດ? ເຮັດແນວໃດຈຶ່ງ ສ້າງມູນຄ່າເພີ່ມອັນສູງຂອງການປະດິດຄິດສ້າງເຄື່ອງນຸ່ງອອກມາ, ຈະສ້າງຍີ່ຫໍ້ດັງຂອງຕົນເອງຢູ່ສາກົນແນວໃດ?, ເປັນປະເດັນທີ່ໜ້າສົນໃຈ ແລະເອົາໃຈໃສ່ກວ່າເພິ່ນຂອງວົງການເຄື່ອງນຸ່ງຈີນພາຍໃນ 10 ປີໃກ້ໆນີ້.

ຜ່ານການພັດທະນາເປັນເວລາ 10 ປີ, ຈີນໄດ້ມີນັກອອກແບບ



ໃນປີ1986, ນາງສາວນຸ່ງກະໂປງຫລາຍຄົນລົມກັນໃນທ້ອງຖະໜົນປັກກິ່ງ
这是 1986 年，北京街头几位穿着裙装的姑娘在聊天　新华社 图



ນັກທຸລະກິດຕ່າງປະເທດຢ້ຽມຊົມຜະລິດຕະພັນເຄື່ອງນຸ່ງຈີນໃນງານວາງສະແດງສິນຄ້າກວ້າງໂຈວຄັ້ງທີ102
外商在第 102 届广交会上参观中国服装企业产品　新华社 图

ເຄື່ອງນຸ່ງທີ່ລືຊື່ໃນສາກົນຈໍານວນໜຶ່ງແລ້ວເຊັ່ນ: ທ່ານຈັ່ງຈ້າວຕ່າ, ທ່ານກົ້ວເຟີຍ, ທ່ານລ້ຽງຈື, ທ່ານລໍ້ເຈີ່ນ ແລະ ທ່ານອື່ນໆ. ບຸນວັນຊາດປີ 2006 ທ່ານເສັຍເຟີງນັກອອກແບບຂອງຈີນນໍາເອົາເຄື່ອງນຸ່ງຍີ່ຫໍ້ Jfen ຂອງທ່ານເປັນຍີ່ຫໍ້ດັງຂອງເຄື່ອງນຸ່ງຈີນທີ່ລືຊື່ໃນພິທີເປີດງານສັບປະດາແຟຊັນຢູ່ປາຣີຢ່າງສໍາເລັດຜົນຜູ້ທໍາອິດ, ໄດ້ຮັບການຈັບຕາມອງຈາກຊາວໂລກທີ່ສຸດ. ອັນນີ້ຖືກຖືວ່າເປັນສັນຍາລັກອັນໜຶ່ງຂອງຊ່າງອອກແບບຈີນກ້າວເຂົ້າສູ່ວົງການເຄື່ອງນຸ່ງທັນສະໄໝຂອງສາກົນ. ທ່ານ Dider Grumbach ປະທານກໍາມະບານເຄື່ອງນຸ່ງຝຣັ່ງໄດ້ເວົ້າວ່າ: "ພາຍຫລັງເສດຖະກິດຂອງຈີນໄດ້ຜ່ານການກ້າວກະໂດດແລ້ວມາບັດນີ້ໄດ້ກາຍເປັນຍຸກສະໄໝມີລັກສະນະເປັນສັນຍາລັກຈາກປະເທດໜຶ່ງທີ່ສະໜອງການປຸງແຕ່ງດ້ວຍຕົ້ນທຶນຕໍ່າຂ້າມຜ່ານໄປເປັນປະເທດໃຫຍ່ຂອງເຄື່ອງນຸ່ງທັນສະໄໝຢ່າງແທ້ຈິງແລ້ວ".



ຍີ່ຫໍ້ດັງອາພອນຈີນຖືກເລືອກເຂົ້າສູ່ສັບປະດາອາພອນປາລີເປັນປະຖົມມະເລີກ.
中国服装品牌首次入选巴黎时装周　新华社 图

# ການທ່ອງທ່ຽວຕີເບດໄດ້ເລີ່ມບາດກ້າວໃໝ່ທີ່ມີສະຖານະພາບອັນຈົບງາມ

## 西藏旅游重新起步开局良好

因拉萨“3·14”事件而一度停滞的旅游业已经重新起步，开局良好。西藏旅游热度正随着雪域高原气温的升高而逐渐升温。

ຍ້ອນເຫດການ "14 ມີນາ" ເກີດຂຶ້ນຢູ່ລ່າຊ່າເຮັດໃຫ້ກິດຈະການທ່ອງທ່ຽວໄດ້ຢຸດຊະງັກໄປຊ່ວງເວລາໜຶ່ງນັ້ນເລີ່ມມີບາດກ້າວໃໝ່ແລ້ວ, ສະຖານະພາບໄດ້ສະແດງອອກຢ່າງຈົບງາມ. ລະດັບຄວາມຢາກໄປທ່ອງທ່ຽວຕີເບດກໍພວມຄຽງຄູ່ກັບອຸນຫະພູມຂອງພູພຽງເມືອງຫິມະຄ່ອຍໆອຸ່ນຂຶ້ນກໍນັບມື້ນັບຄຶກຄັກ.

ຫລັງຈາກເກີດເຫດການ "14 ມີນາ" ທີ່ລ່າຊ່າແລ້ວ, ບັນດາສຳນັກງານທ່ອງທ່ຽວຂອງຕີເບດຈາກພິຈາລະນາປັດໃຈດ້ານຄວາມປອດໄພຕໍ່ແຂກທ່ອງທ່ຽວ, ໄດ້ຢຸດເຊົາຮັບຕ້ອນຄະນະທ່ອງທ່ຽວໄປທ່ຽວຕີເບດຊົ່ວຄາວ, ຈຸດທັດທັດຂອງການທ່ອງທ່ຽວທີ່ລືຊື່ສ່ວນໜຶ່ງໃນລ່າຊ່າໄດ້ຖືກປິດຊົ່ວຄາວ, ການທ່ອງທ່ຽວຕີເບດໄດ້ຕົກຢູ່ສະພາບຢຸດຊະງັກໃນໄລຍະໜຶ່ງ. ແຕ່ເດືອນມັງກອນຮອດເດືອນເມສາຕີເບດພຽງແຕ່ໄດ້ຮັບຕ້ອນແຂກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ 130.000 ເທື່ອຄົນເທົ່ານັ້ນ, ສົມທຽບກັບໄລຍະດຽວກັນຂອງປີທີ່ແລ້ວຫລຸດລົງ 33.5%.

ທ່ານອີ້ຢົງກູ້ຍເລຂາຄະນະພັກພະແນກທ່ອງທ່ຽວເຂດປົກຄອງຕົນເອງຕີເບດໄດ້ກ່າວວ່າ: ຄຽງຄູ່ກັບການຜະລິດ ແລະ ການດຳລົງຊີວິດຂອງຕີເບດເຂົ້າສູ່ສະພາບຄວາມເປັນລະບຽບຮຽບຮ້ອຍ, ຟື້ນຟູເປັນປົກກະຕິເທື່ອລະກ້າວ, ສະຖານະພາບຂອງສັງຄົມໄດ້ດີຂຶ້ນຄືນໃໝ່ເປັນລຳດັບ, ຫົວໜ່ວຍບໍລິການການທ່ອງທ່ຽວສ່ວນຫລາຍເຊັ່ນ: ກິດຈະການກິນດື່ມ, ໂຮງແຮມ, ຄົມມະນາຄົມ ແລະ ອື່ນໆໄດ້ເຮັດວຽກກະກຽມຕ້ອນຮັບລະດູການທ່ອງທ່ຽວທີ່



ບັນດານັກທ່ອງທ່ຽວລຽນແຖວຊື້ປີ້ຜ່ານປະຕູທີ່ວັງບຸດາລາ　游客在布达拉宫排队买票　新华社 图

ຟົດຟື້ນເປັນຢ່າງດີ. ທ້າຍເດືອນເມສາບັນດາສຳນັກງານທ່ອງທ່ຽວຂອງຕິເບດໄດ້ຟື້ນຟູຄືນວຽກງານຮັບຕ້ອນຄະນະນັກທ່ອງທ່ຽວພາຍໃນປະເທດຢ່າງຮອບດ້ານ. ປະຈຸບັນ, ການທ່ອງທ່ຽວຂອງຕິເບດໄດ້ເລີ່ມມີບາດກ້າວຄືນໃໝ່ແລ້ວ, ການເປີດສະຖານະພາບຂອງການທ່ອງທ່ຽວມີບາດກ້າວຈີບງາມ.

ຕາມສະຖິຕິ, ແຕ່ວັນທີ 24 ມີນາຄະນະທ່ອງທ່ຽວຄະນະທຳອິດຫລັງເຫດການ "14ມີນາ" ໄດ້ໄປທ່ຽວລ່າຊາຈົນເຖິງປະຈຸບັນ, ລ່າຊາໄດ້ຮັບຕ້ອນຄະນະທ່ອງທ່ຽວທັງໝົດເກີນກວ່າ 100 ຄະນະ, ນັກທ່ອງທ່ຽວພາຍໃນປະເທດປະມານ 120.000ເທື່ອຄົນ, ພຽງແຕ່ໄລຍະເວລາພັກບຸນໄລຍະສັ້ນຂອງ "1 ພຶດສະພາ", ຕິເບດກໍໄດ້ຮັບຕ້ອນແຂກທ່ອງທ່ຽວເປັນຈຳນວນ 89.000ເທື່ອ ຄົນ, ເຮັດໃຫ້ມູນຄ່າລວມຂອງກິດຈະການທ່ອງທ່ຽວບັນລຸເຖິງ 32.72 ລ້ານຢວນປະກົດເປັນຈິງ.

ໃນ "ໄລຍະພັກເຊົາ" ຂອງການທ່ອງທ່ຽວນັ້ນ, ຕິເບດໄດ້ອອກແຮງເພີ່ມທະວີການຝຶກອົບຮົມຕໍ່ຜູ້ປະກອບການທ່ອງທ່ຽວ, ໄດ້ຈັດຕັ້ງການສອບເສັງເອົາການໄດ້ມາດຕະຖານຂອງຜູ້ນຳທ່ຽວ, ເພື່ອເປັນການກະກຽມໃຫ້ແກ່ການພັດທະນາກິດຈະການທ່ອງທ່ຽວໃນກ້າວຕໍ່ໄປ. ພ້ອມກັນນັ້ນ, ໄດ້ເຮັດໃຫ້ການກໍ່ສ້າງໂຄງລ່າງພື້ນຖານການທ່ອງທ່ຽວສືບຕໍ່ຄົບຖ້ວນບໍລິບູນ, ຢູ່ຢີລະເຈີ , ລິນຈີ່, ຊານນ້ານ ແລະ ແຫ່ງອື່ນໆທີ່ເປັນເສັ້ນວົງວຽນຕາເວັນອອກ ແລະ ຕາເວັນຕົກຂອງການທ່ອງທ່ຽວໄດ້ສ້າງຫ້ອງນ້ຳລຽບຕາມສາຍທາງ, ພ້ອມທັງໄດ້ສ້າງຫ້ອງນ້ຳເຄື່ອນທີ່ຫລາຍແຫ່ງອື່ນຢູ່ເຂດທ່ອງທ່ຽວຈອມພູໂຈມູລຸງມາ.

ເພື່ອສ້າງພາບພົດຂອງແຫລ່ງຈຸດປະສົງການທ່ອງທ່ຽວຕິເບດ "ປອດໄພ, ມີສຸຂະພາບ ແລະ ອະລິຍະທຳ "ຄືນໃໝ່, ພະແນກທ່ອງທ່ຽວເຂດປົກຄອງຕົນເອງຕິເບດໄດ້ດຳເນີນການເຄື່ອນໄຫວໂຄສະນາຊຸກຍູ້ການທ່ອງທ່ຽວດ້ວຍການທ່ອງທ່ຽວຄົບວົງຈອນ, ໄດ້ນຳໃຊ້ເວທີໂຄສະນາການທ່ອງທ່ຽວປະເພດຕ່າງໆຢ່າງກວ້າງຂວາງແຂງແຮງເຂົ້າໃສ່ວຽກງານຂອງການໂຄສະນາບັນດາແຫລ່ງທ່ອງທ່ຽວ.

ຫວ່າງແລ້ວນີ້, ນະຄອນລ່າຊາຍັງໄດ້ຈັດກອງປະຊຸມພັດທະນາກິດຈະກຳການຜະລິດທ່ອງທ່ຽວຂື້ນ, ໄດ້ກຳນົດແຈ້ງເປົ້າໝາຍ ແລະ ລະດັບຄາດໝາຍພັດທະນາແຫລ່ງທ່ອງທ່ຽວນະຄອນລ່າຊາຢ່າງຮອບດ້ານ, ໄດ້ວາງແຜນຜັງຂອງການຈັດວາງການພັດທະນາແຫລ່ງທ່ອງທ່ຽວຂອງນະຄອນລ່າຊາໃນບໍ່ເທົ່າໃດປີຂ້າງໜ້າ. ລ່າຊາຊຶ່ງເປັນຕົວເມືອງທ່ອງທ່ຽວສຳຄັນທີ່ສຸດຂອງຕິເບດພວມກ້າວເດີນໄປຕາມທິດທາງ "ຕົວເມືອງທ່ອງທ່ຽວທີ່ດີທີ່ສຸດຂອງຈີນ", ການສ້າງສາເປັນແບບສາກົນຂອງງານທ່ອງທ່ຽວຕົວເມືອງກໍຈະເລັ່ງລັດບາດ ກ້າວອີກຕື່ມ.


ນັກທ່ອງທ່ຽວອັງກິດຈຳນວນໜຶ່ງທ່ຽວຊົມຢູ່ເທິງພູກັງບາລາທີ່ມີລະດັບນ້ຳທະເລສູງ5000 ກວ່າແມັດ
来自英国的游客在海拔 5000 多米的岗巴拉山上游览　新华社 图

ປະຈຸບັນເຂດທິວທັດ ແລະ ຈຸດທິວທັດສ່ວນໃຫຍ່ຂອງຕິເບດລ້ວນແຕ່ໄດ້ເປີດກວ້າງຮັບຕ້ອນແຂກທ່ອງທ່ຽວແລ້ວ, ຈຸດທິວທັດຂອງວັດເຊີລາສີ ແລະ ວັດຕ່ຳຈ້າວສື້ຂອງນະຄອນລ່າຊາ ແລະ ຈຸດທິວທັດອື່ນໆກໍໄດ້ທະຍອຍຟື້ນຟູຕ້ອນຮັບແຂກທ່ອງທ່ຽວ, ຖະໜົນເລືອກຊື້ສິນຄ້າທ່ອງທ່ຽວທີ່ຖະໜົນປ່ຳລັງທີ່ມີສີສັນຊົນເຜົ່າອັນເຂັ້ມຂຸ້ນພິເສດນັ້ນກໍພວມຟື້ນຟູຄືນຄວາມສີວິໄລ ແລະ ຄວາມຄຶກຄື້ນໃນເມື່ອກ່ອນ.

ປະຈຸບັນຕິເບດມີເຂດທິວທັດ ແລະ ຈຸດທິວທັດທ່ອງທ່ຽວສາມາດສະໜອງໃຫ້ແຂກທ່ອງທ່ຽວໄປທັດສະນາຈອນນັ້ນມີ 300 ກວ່າແຫ່ງ. ພ້ອມກັນນັ້ນ, ຕິເບດມີຄວາມສາມາດຮັບຕ້ອນການທ່ອງທ່ຽວຂ້ອນຂ້າງເຕັມເມັດເຕັມໜ່ວຍເພື່ອຕ້ອນຮັບລະດູການທ່ອງທ່ຽວອັນຄຶກຄື້ນຈະມາເຖິງ, ໃນດ້ານການທ່ຽວຊົມ, ພັກເຊົາ, ສັນຈອນ ແລະ ກິນດື່ມນັ້ນສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງແຂກທ່ອງທ່ຽວ.

# ຈີນຈັດຕັ້ງປະຕິບັດ "ດຳລັດຈຳກັດປລາດສະຕິກ" ເພື່ອຫລຸດຜ່ອນ "ມົນລະພິດສີຂາວ"

## 中国实施“限塑令”以减轻“白色污染”

中国6月1日起开始实施“限塑令”，消费者到超市、商场等地购物后，不再能免费领取塑料袋盛装商品，而要花钱购买购物袋，以此减少塑料袋的使用量，减轻“白色污染”。

ເລີ່ມແຕ່ວັນທີ່ 1 ມີຖຸນາເປັນຕົ້ນໄປຈີນໄດ້ເລີ່ມຈັດຕັ້ງປະຕິບັດ "ດຳລັດວ່າດ້ວຍການຈຳກັດປລາດສະຕິກ", ພາຍຫລັງໄປຊື້ເຄື່ອງຂອງຕາມຊຸບເປີມາກເກັດຫລືຮ້ານຄ້າແລ້ວຜູ້ບໍລິໂພກຈະບໍ່ສາມາດໄດ້ຮັບຖົງຢາງປລາດສະຕິກ, ຫາກຕ້ອງໄດ້ເສຍຄ່າຊື້ຖົງຢາງປລາດສະຕິກ, ເພື່ອຫລຸດຜ່ອນປະລິມານນຳໃຊ້ຖົງຢາງປລາດສະຕິກ, ຫລຸດຜ່ອນ "ມົນລະພິດສີຂາວ".

ຊຸມປີທົດສະວັດ 80ສະຕະວັດທີ 20, ຜູ້ປະກອບການຂາຍຍ່ອຍຂອງກວາງຕຸ້ງເລີ່ມສະໜອງຖົງຢາງປລາດສະຕິກໃສ່ສິນຄ້າດ້ວຍການບໍ່ເກັບຄ່າໃຫ້ແກ່ລູກຄ້າ, ຈາກນັ້ນມາໄດ້ແຜ່ຂະຫຍາຍຢ່າງກວ້າງຂວາງໄປສູ່ທົ່ວປະເທດຢ່າງໄວວາ. ເວລານັ້ນ, ຍັງເຄີຍມີສື່ມວນຊົນຍ້ອງຍໍສັນລະເສີນວ່າເປັນ "ວິທີສ້າງຄວາມສະດວກໃຫ້ແກ່ປະຊາຊົນ" ຢ່າງກະຕືລືລົ້ນ, ເພາະວ່ານີ້ກໍແມ່ນເປັນການເປີດໜ້າປະຫວັດສາດຂອງການບໍລິໂພກໃໝ່. ມາຮອດປະຈຸບັນ, ແຕ່ລະວັນຈີນໄດ້ໃຊ້ຖົງຢາງປລາດສະຕິກເກີນກວ່າ 3 ພັນລ້ານຖົງ.




ລູກຄ້າຖືຖົງອະນຸລັກສິ່ງແວດລ້ອມຈ່າຍເງິນຢູ່ທີ່ບ່ອນຮັບເງິນຊຸບເປີມາກເກັດເຂດໃຕ້ນະຄອນຊິນຕາວ.
顾客携带环保袋在青岛市南区一超市收银处结账 新华社 图

ຄຽງຄູ່ກັບກາລະເວລາໄດ້ຜ່ານພົ້ນໄປ, ອັນທີ່ເອີ້ນວ່າ: "ຄວາມສະດວກອັນເລັກໆນ້ອຍໆ" ດັ່ງກ່າວຊ້ຳພັດນັບມື້ນັບເຮັດໃຫ້ ຄົນເຈັບຫົວຍິ້ນຊັກໄຊ້. ຕາມການຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າ: ຖົງຢາງປລາດສະຕິກທີ່ບໍ່ອາດເປື່ອຍລະລາຍໄດ້ນັ້ນຈະເຮັດໃຫ້ມັນເປື່ອຍລະລາຍໄປຕາມທຳມະຊາດຕ້ອງໃຊ້ເວລາ 200 ປີຂຶ້ນໄປ. ເອົາໄປຝັງຊ້ຳພັດກິນເນື້ອທີ່ດິນ, ສົ່ງຜົນສະທ້ອນຕໍ່ພືນລະປູກທີ່ຮັບເອົາທາດບຳລຸງ ແລະ ຮັບເອົານ້ຳ, ຍັງເຮັດໃຫ້ນ້ຳບາດານຖືກເປື້ອນເປິອີກດ້ວຍ. ເອົາໄປເຜົາຖິ້ມຊ້ຳພັດເກີດອາຍເປັນພິດ. ທຳລາຍສຸຂະພາບຂອງຄົນເຮົາ. ຍ້ອນວ່າຖົງຢາງປລາດສະຕິກສ່ວນຫລາຍແມ່ນສີຂາວ, ຊາວຈີນຈຶ່ງເອີ້ນມັນວ່າ: ມັນເປັນ "ມົນລະພິດສີຂາວ".

ເພື່ອຫລຸດຜ່ອນ "ມົນລະພິດສີຂາວ", ຄະນະລັດຖະບານຈີນໄດ້ປະກາດ "ແຈ້ງການວ່າດ້ວຍການຈຳກັດຜະລິດ, ຈຳໜ່າຍ, ນຳໃຊ້ຖົງຢາງປລາດສະຕິກບັນຈຸສິ່ງຂອງ" ໃນເດືອນມັງກອນປີ 2008 ນີ້, ໄດ້ກຳນົດນັບແຕ່ວັນທີ 1 ມີຖຸນາເປັນຕົ້ນໄປຫ້າມຜະລິດ, ຈຳໜ່າຍ ແລະ ນຳໃຊ້ຖົງຢາງປລາດສະຕິກໃສ່ສິ່ງຂອງທີ່ມີຄວາມໜາຕ່ຳກວ່າ 0.025 mm ໃນຂອບເຂດທົ່ວປະເທດແລ້ວຈຶ່ງ

ກຳຈັດຖົງຢາງປລາດສະຕິກໃສ່ສິ່ງຂອງບາງເກີນໄປທີ່ສິ້ນເປືອງງ່າຍໄປເທື່ອລະກ້າວ. ສະຖານທີ່ ຂາຍຍ່ອຍຢູ່ຊຸບເປີມາກເກັດ ແລະ ຮ້ານຂາຍສິນຄ້າອື່ນໆບໍ່ໃຫ້ສະໜອງຖົງຢາງປລາດສະຕິກໃສ່ສິນຄ້າດ້ວຍບໍ່ເກັບຄ່າອີກ, ແຕ່ຫາກແມ່ນປະຕິບັດລະບອບນຳໃຊ້ດ້ວຍການເກັບຄ່າຕືກັນໝົດ.

3 ກະຊວງ ແລະ ຄະນະກຳມະການທຽບເທົ່າຂອງຈີນ ໄດ້ຮ່ວມກັນປະກາດຂໍ້ກຳນົດ "ວ່າດ້ວຍວິທີຄຸ້ມຄອງນຳໃຊ້ດ້ວຍມີຄ່າຕອບແທນຕໍ່ຖົງຢາງປລາດສະຕິກໃສ່ສິ່ງຂອງໃນສະຖານທີ່ສິນຄ້າຂາຍຍ່ອຍ" ແຕ່ເດືອນພຶດສະພາຜ່ານມາ, ໄດ້ກຳນົດຢ່າງລະອຽດຕໍ່ເນື້ອໃນການນຳໃຊ້ດ້ວຍມີຄ່າຕອບແທນ ແລະ ລະດັບລາຄາຂອງ




ສະໜອງຖົງອະນຸລັກສິ່ງແວດລ້ອມໃຫ້ລູກຄ້າເລືອກໃຊ້
提供环保袋，供顾客选用　新华社　图

ຖົງປລາດສະຕິກໃສ່ສິ່ງຂອງ. ຖ້າຫາກມີວິສາຫະກິດໃດຝ່າຝືນຕໍ່ຂໍ້ກຳນົດສະໜອງຖົງປລາດສະຕິໃສ່ສິ່ງຂອງ ໂດຍບໍ່ຄິດໄລ່ລາຄາ, ຈະຖືກປັບໃໝທາງເສດຖະກິດ.

ພ້ອມກັນນັ້ນ, ທັດສະນະຄະຕິຕໍ່ການນຳໃຊ້ຖົງຢາງປລາດ ສະຕິກຂອງຜູ້ບໍລິໂພກຈີນກໍພວມຖືກຄອນແຄນ. ມະຫາວິທະຍາໄລຊ່ານຕົງເພື່ອສົ່ງເສີມຊາວໜຸ່ມປະລະການນຳໃຊ້ຖົງຢາງປລາດສະຕິກໄດ້ດຳເນີນການເຄື່ອນໄຫວຢ່າງເປັນລະບົບດ້ວຍ" ຮັບຊົມສີຂຽວຢ່າງເຕັມທີ່ເບີກບານໃຈຊື້ສິ່ງຂອງ" ແລະຮິບໂຮມການອອກແບບຜະລິດຖົງໃສ່ສິນຄ້າທີ່ສາມາດຮັກສາສິ່ງແວດລ້ອມ. ໄດ້ຮັບການສະໜັບສະໜູນຈາກຊາວໜຸ່ມເປັນຈຳນວນຫລວງຫລາຍ.

ໃນຈິດໃຈຂອງຄົນຈຳນວນຫລາຍນັ້ນ, ກ່ຽວກັບການນຳໃຊ້ຖົງຢາງປລາດສະຕິກດ້ວຍມີຄ່າຕອບແທນຍັງເຮັດໃຫ້ເຂົາເຈົ້າຫວນຄິດຄືນ "ກະຕ່າໃສ່ຜັກ" ໃນຊຸມປີທົດສະວັດ 80 ສະຕະວັດທີ 20, ແມ່ບ້ານຈຳນວນຫລວງຫລາຍທີ່ໄປເລືອກຊື້ຜັກຫມີສີ່ໃບຢູ່ຕາມຕະຫລາດນັ້ນ, ມັກເອົາຫູກະຕ່າຊື້ຜັກຫ້ອຍໄວ້ຢູ່ເທິງບ່າໄປຊື້ຂອງກິນຢູ່ຕະຫລາດ. ຢູ່ຖະໜົນນາອານຊ່ານຂອງນະຄອນຈີ້ນານແມ່ເຖົ້າເຊີນໄດ້ເວົ້າວ່າ:




ປ້າຍປື້ຂຽນວ່າສົ່ງເສີມຊາວເມືອງນຳໃຊ້ຖົງສີຂຽວໃສ່ເຄື່ອງທີ່ໜ້າປະຕູຊຸບເປີມາກເກັດ
超市入口处摆放了提倡市民使用绿色购物袋的宣传板　新华社 图

"ເຮົາໄດ້ກຽມກະຕ່າຊື້ຜັກໄວ້ແຕ່ດົນແລ້ວ, ຄອຍຖ້າມີມື້ໃດມື້ໜຶ່ງໃນພາຍໜ້າຜູ້ຄົນທັງຫລາຍຈະຫວນຄືນມາຊົມໃຊ້ກະຕ່າ ເມື່ອນັ້ນຄວາມຮູ້ສຶກລົດຊາດຂອງການພາຍກະຕ່າ ແລະ ຊື້ຜັກອັນມ່ວນຊື່ນຢູ່ໃນໃຈນີ້ອີກຄັ້ງໃໝ່".

ການນຳໃຊ້ຖົງຢາງປລາດສະຕິກໃສ່ຂອງຂາຍດ້ວຍມີຄ່າຕອບແທນ, ແນ່ນອນຈະເຮັດໃຫ້ຄວາມນຶກຄິດຂອງຜູ້ບໍລິໂພກຂອງຈີນກ່ຽວກັບການປະຫຍັດ, ການປົກປັກຮັກສາສິ່ງແວດລ້ອມຖືກກະທົບກະແທກອີກເທື່ອໜຶ່ງ. ພ້ອມກັນນັ້ນ, ການກີດກັ້ນ "ມົນລະພິດສີຂາວ" ນັ້ນຍັງຕ້ອງຮີບຮ້ອນຊອກຫາຂອງທົດແທນຖົງຢາງປລາດສະຕິກທີ່ເຄີຍໃຊ້ມາເປັນແບບມູນເຊື້ອນັ້ນໃຫ້ໄວເທົ່າທີ່ຈະໄວໄດ້ເຊັ່ນ: ການນຳໃຊ້ຖົງເຈ້ຍ ແລະ ປລາດສະຕິກທີ່ສາມາດເປື່ອຍລະລາຍໄດ້ເປັນຕົ້ນ.

# ຈີນຜ່ານການຫັນເປັນແບບຂໍ້ມູນຂ່າວສານ ຊຸກຍູ້ການບູລະນະກໍ່ສ້າງສັງຄົມກົມກຽວກັນ




ຜູ້ຊີ້ນຳກວດພະຍາດໃນສູນບໍລິການຊຽງໄຮ,ຊ່ວຍຜູ້ມາກວດພະຍາດກວດຜົນການກວດພະຍາດໃນຕູ້ຂໍ້ມູນຂ່າວສານ
上海便民服务中心的导医员（右）帮助就医人员在信息化平台上查询化验单检测结果　新华社 图

## 中国通过信息化促进和谐社会建设

中国将通过大力开发和利用信息资源，深入推行电子政务，强化社会管理和公共服务，促进政府职能转变和行政管理创新，全面提升社会事业各领域信息化水平，促进和谐社会建设。




ໂຄງການຂໍ້ມູນຂ່າວສານລ້ອງແມ່ນ້ຳສູແລແຂວງການຊູໄດ້ໄຂຂຶ້ນແລ້ວ.
甘肃疏勒河流域信息化工程开通　新华社 图

ຈີນຈະອອກແຮງພັດທະນາ ແລະ ນຳໃຊ້ຊັບພະຍາກອນຂໍ້ມູນຂ່າວສານ, ລົງເລິກແຜ່ຜາຍນຳໃຊ້ກິດຈະການບໍລິການດ້ວຍເອເລັກໂຕຣນິກ,ເຮັດໃຫ້ການຄຸ້ມຄອງສັງຄົມ ແລະ ການບໍລິການສາທາລະນະຫັນໄປສູ່ຄວາມເຂັ້ມແຂງ,ຊຸກຍູ້ໃຫ້ລັດຖະບານມີການປ່ຽນແປງທາງພາລະບົດບາດ ແລະ ການລິເລີ່ມໃໝ່ຂອງການ ຄຸ້ມຄອງບໍລິຫານ,ຍົກລະດັບຢ່າງຮອບດ້ານຂອງລະດັບຫັນເປັນຂໍ້ມູນຂ່າວສານໃນບັນດາຂົງເຂດພາລະກິດສັງຄົມ, ຊຸກຍູ້ການບູລະ ນະກໍ່ສ້າງສັງຄົມທີ່ກົມກຽວກັນ.

ຈີນຈະຊຸກຍູ້ກິດຈະການດ້ານລັດຖະການຫັນເປັນແບບເອເລັກໂຕຣນິກຢ່າງໜັກແໜ້ນດ້ວຍອ້ອມວຽນຢູ່ໃນວົງວຽນການຍົກສູງຄວາມສາມາດການປົກຄອງປະເທດ ແລະ ການຄຸ້ມຄອງອຳນາດບໍລິຫານ, ຍຶດໝັ້ນການວາງແຜນຄວບຄຸມປະສານງານ,ຈັດ ຕັ້ງປະຕິບັດແບ່ງເປັນແຕ່ລະບາດກ້າວ.ພ້ອມກັນນັ້ນຍັງຕ້ອງຈັດ ສັນລວມຕົວຕໍ່ຊັບພະຍາກອນເຄືອຂ່າຍດ້ານກິດຈະການບໍລິຫານ, ຈັດສ້າງເຄືອຂ່າຍກິດຈະການບໍລິຫານດ້ວຍເອເລັກໂຕຣນິກທີ່ເປັນເອກະພາບກັນ,ຊຸກດັນພ້ອມກັນຊົມໃຊ້ຂໍ້ມູນຂ່າວສານລະຫວ່າງ ພະແນກ ແລະ ປະສານງານຮ່ວມກັນດ້ານກິດຈະການ. ອອກແຮງ ເພີ່ມທະວີໃສ່ຊັບພະຍາກອນຕົວເລກອ້າງອີງພື້ນຖານ,ການສ້າງຊັບພະຍາກອນຂໍ້ມູນຂ່າວສານດ້ານບໍລິຫານ.ເຮັດໃຫ້ລະບົບກິດ ຈະການຈຸດສຸມຄົບຖ້ວນບໍລິບູນ,ຊຸກຍູ້ການກໍ່ສ້າງລະບົບກິດຈະ ການບໍລິຫານດ້ວຍເອເລັກໂຕຣນິກໃນຂົງເຂດການຈັດສັນເສດຖະກິດ,ການຕິດຕາມກວດກາ ແລະ ຄຸ້ມຄອງຕະຫລາດ,ຄຸ້ມຄອງສັງຄົມ ແລະ ການບໍລິການສາທາລະນະດ້ວຍບາດກ້າວອັນໝັ້ນ ທ່ຽງ, ຍົກສູງປະສິດພິພາບດ້ານການບໍລິຫານ, ຊຸກດັນການລິ ເລີ່ມໃໝ່ຂອງການຄຸ້ມຄອງລັດຖະບານ ແລະ ຮູບແບບລິເລີ່ມໃໝ່ ຂອງການບໍລິການສາທາລະນະ.ເຮັດໃຫ້ປະຕູເຄືອຂ່າຍຂອງລັດຖະບານຄົບຖ້ວນບໍລິບູນຢ່າງບໍ່ຢຸດຢັ້ງ, ຊຸກຍູ້ກິດຈະການບໍລິຫານເປັນ ແບບເປີດເຜີຍ, ເລັ່ງລັດກໍ່ສ້າງລັດຖະບານຫັນເປັນແບບບໍລິການ.

ໃນຂະນະດຽວກັນນັ້ນ,ຈະຊຸກຍູ້ຢ່າງຕັ້ງໜ້າເຮັດໃຫ້ພາລະກິດສັງຄົມຫັນເປັນແບບຂໍ້ມູນຂ່າວສານ. ເລັ່ງລັດບາດກ້າວເຮັດໃຫ້ການສຶກສາ ແລະ ການຄົ້ນຄວ້າວິທະຍາສາດຫັນເປັນແບບຂໍ້ມູນ ຂ່າວສານ, ເຮັດໃຫ້ໂຄງສ້າງພື້ນຖານຂອງເຄືອຂ່າຍວິທະຍາສາດ ຄົ້ນຄວ້າ ແລະ ການສຶກສາໃຫ້ຄົບຖ້ວນບໍລິບູນ, ພັດທະນາການສຶກ ສາທາງໄກແບບທັນສະໄໝ,ຍົກສູງລະດັບການນຳໃຊ້ອຸປະກອນວິທະຍາສາດເຕັກນິກຫັນເປັນແບບເຄືອຂ່າຍ, ຊຸກດັນການຊົມໃຊ້ ຮ່ວມກັນຕໍ່ຊັບພະຍາກອນສຶກສາ ແລະ ວິທະຍາສາດຄົ້ນຄວ້າ. ອອກ ແຮງເພີ່ມທະວີການກໍ່ສ້າງສາທາລະນະສຸກໃຫ້ຫັນເປັນແບບຂໍ້ມູນຂ່າວສານ, ເພີ່ມທະວີຄວາມສາມາດໃນການຄວບຄຸມພະຍາດ ແລະ ຄວາມສາມາດໃນການປິ່ນປົວ ແລະ ຊ່ວຍຊີວິດ, ຊຸກຍູ້ການບໍລິການການປິ່ນປົວຫັນເປັນແບບຂໍ້ມູນຂ່າວສານ, ຊຸກຍູ້ການປິ່ນປົວ, ການຢາ, ການຮັບປະກັນດ້ານການປິ່ນປົວເປັນແບບການເຄື່ອນ ໄຫວຮ່ວມກັນ.ສ້າງລະບົບບໍລິການຂໍ້ມູນຂ່າວສານການຫາວຽກ ເຮັດວຽກທຳດ້ວຍຫລາຍຊັ້ນລະດັບ ແລະ ຫລາຍສະມັດຖະພາບ, ເຮັດໃຫ້ການບໍລິການຊີ້ນຳຢ່າງເຂັ້ມແຂງຕໍ່ບຸກຄົນທີ່ຕົກງານ ແລະ ຜູ້ພິການ ແລະ ອື່ນໆຊຶ່ງເປັນກຸ່ມຄົນທີ່ຫາວຽກເຮັດວຽກທຳຫຍຸ້ງຍາກ. ເຮັດໃຫ້ຊັບພະຍາກອນຂໍ້ມູນຂ່າວສານບໍລິການຕໍ່ສາທາລະນະຂອງຄຸ້ມບ້ານໃຫ້ຈັດສັນລວມຕົວກັນ, ຈັດສ້າງເວທີຂໍ້ມູນຂ່າວສານການບໍລິການສະດວກໃຫ້ແກ່ປະຊາຊົນໂດຍສັງລວມຕໍ່ເຂດຄຸ້ມບ້ານ.

ນອກນັ້ນຍັງຈະເຮັດໃຫ້ລະບົບຂໍ້ມູນຂ່າວສານຄຸ້ມຄອງວິກິດການຕ່າງໆຄົບຖ້ວນບໍລິບູນ, ອອກແຮງເພີ່ມທະວີຕໍ່ການເຕືອນ ໄພຂອງເຫດການສາທາລະນະທີ່ຫລອນເກີດຂື້ນ ແລະ ຄວາມສາມາດຂອງການແກ້ໄຂ, ເພື່ອເປັນການຕິດຕາມຄວບຄຸມແຫລ່ງ ທີ່ມາຂອງຄວາມອັນຕະລາຍສຳຄັນ,ເຫດການທີ່ໄພພິບັດ ແລະ ການຮັບປະກັນສະໜອງຂໍ້ມູນຂ່າວສານຕໍ່ສະພາບໄພພິບັດ ແລະ ສະພາບການລະບາດຂອງພະຍາດ.

文、图/羊 晨

# ກວາງໂຈວກ້າວເຂົ້າສູ່ນັບເວລາຖອຍຫລັງເອຊຽນເກມ

## 广州进入亚运倒计时




ທ່ານຈີນເວີຍຢືຮອງກົມໂຄສະນາຄະນະຈັດຕັ້ງອາຊຽນເກມກວ້າງໂຈວມອບສັດສີລິມຸງຄຸນອາຊຽນເກມກວ້າງໂຈວໃຫ້ເຈົ້າຄອງນະຄອນຫລວງບັງກອກ

广州亚组委宣传部副部长曾伟玉向曼谷市市长赠送广州亚运会吉祥物

ທ່ານເອີອາຍຸ 41 ປີ,ໄດ້ຍົກຍ້າຍໄປຕັ້ງຖິ່ນລຳເນົາຢູ່ຕ່າງປະເທດນີວຊີແລນເປັນເວລາ 5 ປີປາຍແລ້ວ,ໄດ້ຜ່ານຊີວິດລຳບາກຍາກແຄນຢູ່ຕ່າງປະເທດແລ້ວກັບຄືນສູ່ບ້ານເກີດເມືອງນອນ-ກວາງໂຈວ.

ຢູ່ຕໍ່ໜ້ານັກຂ່າວ,ລາວຍົກບົດປາໄສຂອງລາວເອງມີຄວາມໝັ້ນໃຈວ່າ,ຂ້ອຍຈະເຜີຍແຜ່ຊື່ສຽງຂອງກວາງໂຈວໄປຕ່າງປະເທດ.ຕາມທີ່ເດີມທ່ານເອີຕັດສິນໃຈຈະເປັນຜູ້ອາສາສະໝັກຂອງເອຊຽນເກມກວາງໂຈວປີ 2010,ເທື່ອນີ້,ທ່ານເອີຍື່ນມາກ່ອນເວລາ 2 ມື້ຈາກກຸງປາຣີມາກວາງໂຈວ,ເຂົ້າຮ່ວມການປະກວດດາວເດັ່ນພາສາອັງກິດເອຊຽນເກມກວາງໂຈວ.

### ຕະຫລາດຮັບເອົາລູກຄ້າໄດ້ດູດດຶງເອົານັກທຸລະກິດໃຫຍ່ມາຫລາກຫຼາຍ

### 市场招商引来不少巨头

ມີວິສາຫະກິດຫຼາຍໄດ້ເຫັນຕະຫລາດ ເອຊຽນເກມກວາງໂຈວມີກຳລັງບົ່ມຊ້ອນຫລາຍ.ກຸ່ມບໍລິສັດລົດກວາງໂຈວທີ່ໃຫຍ່ກວ່າໝູ່ໃນເຂດໃຕ້ຈີນໄດ້ເຫັນຄັກກາລະໂອກາດຂອງເອຊຽນເກມກວາງໂຈວ,ກາຍເປັນຄູ່ຮ່ວມມືຊັ້ນສູງຜູ້ທີ1ຂອງເອຊຽນເກມກວາງໂຈວ.ທ່ານຈາງຟັງຢຽວປະທານກຸ່ມບໍລິສັດໄດ້ສະແດງວ່າ,ອັນນີ້ແມ່ນຈຸດເລີ່ມຕົ້ນໃໝ່ເພື່ອສະແດງສີສັນທີ່ເປັນເອກະລາດສະເພາະຂອງກຸ່ມບໍລິສັດລົດກວາງໂຈວຕໍ່ທະວີບອາຊີແລະທົ່ວທັງໂລກ. ເອຊຽນເກມໄດ້ອຳນວຍກາລະໂອກາດທີ່ດີເພື່ອຍົກສູງຄຸນຄ່າຍີ່ຫໍ້ດັງຂອງກຸ່ມບໍລິສັດລົດກວາງໂຈວ,ແຜ່ຂະຫຍາຍຜົນສະທ້ອນຂອງປວງປະຊາຊົນໃຫ້ກວ້າງອອກ,ກາຍເປັນນັກທຸລະກິດອຸປະຖຳຂອງເອຊຽນເກມກວາງໂຈວ,ໄດ້ຮັບສິດທິພິເສດໃນກິດຈະການດຽວກັນ,ໄດ້ຍົກສູງພາບພົດຂອງວິສາຫະກິດທີ່ເປັນອຸປະຖຳແລະຍີ່ຫໍ້ດັງຂອງຜະລິດຕະພັນຢ່າງແຂງແຮງ.

ເອເລັກໂຕນິກສາມຊຸມເຊິ່ງເປັນວິສາຫະກິດສຸດຍອດໃນໂລກແລະເປັນຄູ່ຮ່ວມມືຍາວນານຂອງຄະນະມົນຕີເອເຊຍໂອສະຕຣາລີຈະສະໜອງໃຫ້ການອຸປະຖຳແກ່ເອຊຽນເກມກວາງໂຈວໃນຫຼາຍຂົງເຂດ.ກຸ່ມບໍລິສັດປະກັນໄພປະຊາຊົນຈີນເຊິ່ງເປັນຮ່ວມມືປະກັນໄພພາຍໃນປະເທດແຕ່ບໍລິສັດດຽວຂອງງານກິລາໂອລິມປິກປັກກິ່ງໄດ້ກາຍເປັນຄູ່ຮ່ວມມືປະກັນໄພຂອງ ເອຊຽນເກມກວາງໂຈວ.ບໍລິສັດເວັບໄຊຫວາງອີເຊິ່ງເປັນ 1 ໃນ 5 ບໍລິສັດເວັບໄຊປະຕູກາຍເປັນເນື້ອໃນເຊື່ອມຕໍ່ກັນ ແລະ ຜູ້ອຸປະຖຳໃນການບໍລິການເວັບໄຊຂອງເອຊຽນເກມກວາງໂຈວ.ແລະຮັບເໝົາກໍ່ສ້າງເວັບໄຊໃໝ່ WWW. gz2010. cn ຝ່າຍເຈົ້າໜ້າທີ່ຂອງເອຊຽນເກມກວາງໂຈວ.ນອກຈາກນັ້ນ,ບໍລິສັດນ້ຳຫວານຈຽນລີປາວ,ດີຕີຕອນຟັນໂຖ,ຟູນີເຈີກວາງຢືນ,ອາພອນດາໂກດາ,ບີມະວີ,ເຄື່ອງສຽງປູຍຟົງແລະບໍລິສັດວັດທະນະທຳຈີນອີເປັນຕົ້ນທະຍ້ອຍກັນເຊັນສັນຍາໃຫ້ອຸປະຖຳແກ່ເອຊຽນເກມກວາງໂຈວກັບຄະນະຈັດຕັ້ງເອຊຽນເກມ.




ພິທີລິເລີ່ມຮັບສະໝັກຜູ້ອາສາສະໝັກໃນໄລຍະກ່ອນອາຊຽນເກມ
亚运会前期志愿者招募启动仪式

## ພາກສະໜາມຮັບເອົາຜູ້ອາສາສະໝັກມີບັນຍາກາດຟົດຟື້ນ
## 志愿者招聘场面火爆

ວັນທີ 21 ກັນຍາ, ຄະນະຈັດຕັ້ງໄດ້ລິເລີ່ມວຽກງານຮັບສະໝັກຜູ້ອາສາສະໝັກກ່ອນໄລຍະເອຊຽນເກມເປັນທາງການຈາກພາຍໃນແລະຕ່າງປະເທດເປັນຈຳນວນ 1000 ຄົນ. ຜູ້ທີ່ເຂົ້າມາຮັບສະໝັກເປັນຜູ້ອາສາສະໝັກເອຊຽນເກມກວາງໂຈວມີ 1500 ກວ່າຄົນ, ມື້ທຳອິດຜູ້ສະເໜີຕົວເກີນຫຼາຍ 10 ພັນກວ່າຄົນ. ນາງເຊີນເຊເຊຍເຊິ່ງເປັນນາງສາວກວາງໂຈວຜູ້ຊະນະເລີດຍົກນ້ຳໜັກເພດຍິງລຸ້ນ 48 ກິໂລທີ່ເປັນຫຼຽນຄຳປະຖົມມະເລີກຂອງຄະນະຜູ້ແທນຈີນໃນງານກິລາໂອລິມປິກປັກກິ່ງຈະໃນນາມຜູ້ອາສາສະໝັກຮັບຕ້ອນແຂກຕ່າງປະເທດໃນໄລຍະເປີດງານເອຊຽນເກມກວາງໂຈວ. ພີ່ນ້ອງຮ່ວມຊາດຮົງກົງ, ມາເກົາ, ໄຕ້ຫວັນແລະຊາວຈີນຕ່າງດ້າວ, ຊາວຈີນພົ້ນທະເລທີ່ອາໄສຢູ່ຕ່າງປະເທດທີ່ບໍ່ໜ້ອຍລ້ວນແລ້ວແຕ່ສົນໃຈນຳການເຄື່ອນໄຫວຮັບສະໝັກຜູ້ອາສາສະໝັກຂອງ ເອຊຽນເກມກວາງໂຈວ, ພວກເຂົາເຈົ້າສົ່ງໂທລະເລກໃຫ້ຄະນະຈັດຕັ້ງ, ທະຍ້ອຍກັນໃຫ້ການສະໜັບສະໜູນຕໍ່ເອຊຽນເກມກວາງໂຈວ. ກຳມະບານລົດໂອໂຕຊາວຈີນຂອງອາເມລິກາສະເພາະມາຢ້ຽມຢາມຄະນະຈັດຕັ້ງເອຊຽນເກມ, ສະແດງເຖິງຊາວຈີນທີ່ອາໄສຢູ່ຕ່າງປະເທດຈະສະໜັບສະໜູນເອຊຽນເກມກວາງໂຈວຢ່າງແນ່ນອນ.

ຄວາມເປັນການສົນໃຈອັນກວ້າງຂວາງຈາກພາຍໃນ ແລະ ພາຍນອກປະເທດເຮັດໃຫ້ທ່ານຊີຢູຍແຊັ່ງເລຂາທິການປະຈຳການຂອງຄະນະຈັດຕັ້ງເອຊຽນເກມກວາງໂຈວທັງເປັນຮອງເຈົ້າຄອງນະຄອນກວາງໂຈວຮູ້ສຶກປິຕິຍິນດີທີ່ສຸດ, ອັນນີ້ໄດ້ສະແດງເຖິງລະດັບການພັດທະນາຂອງຈີນແລະກຳລັງເຕົ້າໂຮມຢ່າງສູງສົ່ງຂອງປະຊາຊາດຈີນ. ປີນີ້ເປັນປີທີ່ປະຕິຮູບ ແລະ ເປີດປະຕູສູ່ພາຍນອກຂອງຈີນເປັນເວລາຄົບຮອບ 30ປີ; ໃນໄລຍະ 30 ປີທີ່ຜ່ານມານັ້ນ, ມີຫລາຍລຸ້ນຄົນໄດ້ປ່ຽນແປງໂຊກຊະຕາກຳຂອງຕົນຍ້ອນການປະຕິຮູບແລະເປີດປະຕູສູ່ພາຍນອກ, ພ້ອມກັນສະໜຸກສະໜານໝາກຜົນຂອງການປະຕິຮູບ ແລະ ເປີດປະຕູສູ່ພາຍນອກ. ດຽວນີ້, ພວກເຮົາຄວນສະແດງລຸ້ນພວກເຮົາເປັນລຸ້ນທີ່ຊື່ສັດແລະລຸ້ນທີ່ຂອບບຸນແທນຄຸນດ້ວຍພາລະກິດປະຫວັດສາດອັນສູງສົ່ງແລະຄວາມຮັບຜິດຊອບທາງສັງຄົມຢ່າງສູງ ແລະພຶດຕິກຳທີ່ເປັນຜູ້ອາສາສະໝັກ.




ໜັງສືພິມໂຄສະນາອາຊຽນເກມ
亚运会海报

## ໝູ່ຄະນະທາງສັງຄົມອື່ນໆກໍ່ທະຍ້ອຍກັນເຂົ້າຮ່ວມນຳ
## 其他社会团体踊跃参与

ມີສ່ວນຮ່ວມນຳເອຊຽນເກມເປັນການສະແດງທີ່ວິສາຫະກິດໄດ້ຫາພັດທະນາເອົາເອງແລະແບກຫາບພາລະໜ້າທີ່ທາງສັງຄົມ. ການທີ່ກຸ່ມບໍລິສັດລົດກວາງໂຈວມີສ່ວນຮ່ວມເອຊຽນເກມກວາງໂຈວໄດ້ຮັບຍ້ອງຍໍສັນລະເສີນຈາກທ່ານຮວງຮົວຮົວເຈົ້າແຂວງກວາງຕຸງເຊິ່ງເປັນປະທານບໍລິຫານງານຂອງຄະນະຈັດຕັ້ງເອຊຽນເກມກວາງໂຈວ. ທ່ານເຫັນວ່າ, ອັນນີ້ໄດ້ສະແດງເຖິງຄວາມຮັບຜິດຊອບຢ່າງສູງຂອງທ່ານທີ່ໃຫ້ການສະໜັບສະໜູນແກ່ເອຊຽນເກມແລະຕອບບຸນແທນຄຸນຄືນໃຫ້ສັງຄົມ, ຖືໂອກາດຈັດງານເອຊຽນເກມເພື່ອຍົກສູງຈິດສຳນຶກຍຸດທະສາດຂອງຍີ່ຫໍ້ດັງ.

ວັນທີ 17 ກັນຍາ, ຜູ້ແທນເກືອບ 100 ຄົນຂອງກຸ່ມທໍ່ເຫຼັກຈູຈຽງ, ກຸ່ມລີປາຍເປັນຕົ້ນເຊິ່ງເປັນວິສາຫະກິດເອກະຊົນ ແລະ ສະມາຄົມຫ້າງຮ້ານແລະສູນບໍລິການວິສາຫະກິດຂະໜາດກາງ ແລະ ນ້ອຍກໍ່ພາກັນສະແດງວ່າຈະຕ້ອງສະໜັບສະໜູນເອຊຽນເກມກວາງໂຈວດ້ວຍການກະທຳຕົວຈິງ. ສະມາຄົມທະນາຍຄວາມກວາງໂຈວນຳໃຊ້ຮູບການພິເສດ, ເຂົາເຈົ້າສະໜອງການສະໜັບສະໜູນດ້ານກົດໝາຍແກ່ຄະນະຈັດຕັ້ງເອຊຽນເກມໂດຍບໍ່ເສຍຄ່າ. ທີມບໍລິການຊາວໜຸ່ມຜູ້ອາສາສະໝັກການຕ່າງປະເທດກວາງໂຈວເປັນເຈົ້າການຮ້ອງຂໍເປັນຜູ້ອາສາສະໝັກໝູ່ຄະນະຂອງເອຊຽນເກມກວາງໂຈວ.

## ຊາວເມືອງຍາດແຍ່ງເປັນດາວເດັ່ນພາສາອັງກິດ.
## 市民争做“英语之星”

ຢູ່ທີ່ກວາງໂຈວ, ຄົນທັງຫຼາຍພະຍາຍາມຢາກມີສ່ວນຮ່ວມງານເອຊຽນເກມກໍ່ຄືທ່ານເອີພອມຟ້າວຟັ່ງຢູ່. ງານປະກວດດາວເດັ່ນພາສາອັງກິດເອຊຽນເກມກວາງໂຈວເຊິ່ງແມ່ນຄະນະຈັດຕັ້ງເອຊຽນເກມກວາງໂຈວເປັນເຈົ້າພາບນັ້ນ, ໄດ້ດູດດຶ່ງຊາວເມືອງອັນໄພສານພາກັນເຂົ້າຮ່ວມນຳ, ຄະນະຈັດຕັ້ງໃຫ້ຄຳໝັ້ນສັນຍາວ່າ, ຜູ້ທີ່ສາມາດເຂົ້າສູ່ການແຂ່ງຂັນຮອບທີສອງນັ້ນ, ຈະຖືກຮັບສະໝັກເປັນຜູ້ອາສາສະໝັກວິຊາສະເພາະປະເພດພາສາຂອງເອຊຽນເກມກວາງໂຈວຢ່າງເປັນທາງການ, ເລື່ອງນີ້ພາໃຫ້ຄົນທັງຫຼາຍມຸ່ງຫວັງທີ່ສຸດ.

ນັກຂ່າວມອງເຫັນຢູ່ໃນລາຍຊື່ທີ່ເຂົ້າຮ່ວມການແຂ່ງຂັນນັ້ນ, ມີຜູ້ທີ່ມາຈາກກອູຫານ, ຕີເບດແລະປັກກິ່ງ, ແຕ່ກໍ່ມີຄົນຕ່າງປະເທດບໍ່ໜ້ອຍຖືປັສປໍມາສະເໜີຕົວ. ທ່ານ oAiberto ທີ່ມາຈາກອາເມລິກາບໍ່ພຽງແຕ່ຈະເຂົ້າຮ່ວມການປະກວດດາວເດັ່ນພາສາອັງກິດເອຊຽນເກມກວາງໂຈວຍັງຈະຕ້ອງຮັບເຊີນເປັນຜູ້ອາສາສະໝັກເອຊຽນເກມກວາງໂຈວ.

ເອຊຽນເກມກວາງໂຈວເປັນເລື່ອງໃຫຍ່ຂອງຈີນທັງເປັນເລື່ອງໃຫຍ່ຂອງໂລກ. ເຖິງເວລານັ້ນ, ສາມາດບໍລິການເອຊຽນເກມກວາງໂຈວໂດຍຖານະຜູ້ອາສາສະໝັກ, ຂ້ອຍລໍຄອຍທີ່ສຸດ. ເຊື່ອແນ່ວ່າ, ເອຊຽນເກມກວາງໂຈວຈະກາຍເປັນເອຊຽນເກມທີ່ດີເລີດທີ່ສຸດໃນປະຫວັດສາດຄັ້ງໜຶ່ງ.



ພາບໂຄສະນາ-ແຕ້ມແດງ
宣传画——描红



ພາບໂຄສະນາ-ໂຕແບ້ທອນໄຟ
宣传画——圣火之羊



ພາບໂຄສະນາ-ຕົວເມືອງທີ່ເຄື່ອນໜີງ
宣传画——跃动的城市

## ການເຄື່ອນໄຫວໃນຕົວເມືອງກວາງໂຈວກາຍເປັນວຽກງານໃຈກາງໃນສອງປີຂ້າງໜ້າຂອງກວາງໂຈວ.

## 亚运城市行动成广州未来两年中心工作

ວັນທີ 12 ເດືອນ 11, ເອຊຽນເກມກວາງໂຈວເປັນວັນນັບເວລາຖອຍຫລັງຄົບຮອບ 2 ປີ.ອຳນາດການປົກຄອງນະຄອນກວາງໂຈວໄດ້ເອົາໃຈໃສ່ສູງສຸດຕໍ່ ເອຊຽນເກມກວາງໂຈວໃກ້ຈະມາເຖິງ.ວັນທີ 16 ເດືອນ 6 ,ທ່ານຈາງກວາງນິນເຈົ້າຄອງນະຄອນກວາງໂຈວເຊິ່ງເປັນຮອງປະທານຄະນະຈັດຕັ້ງເອຊຽນເກມກວາງໂຈວທັງເປັນເລຂາທິການເປັນປະທານຮຽກປະຊຸມຄະນະປະຈຳຂອງອຳນາດການປົກຄອງນະຄອນກວາງໂຈວ,ສະແດງວ່າ, ເອຊຽນເກມກວາງໂຈວປີ 2010 ແມ່ນງານມະຫາກຳຂອງກວາງໂຈວ,ແລະກໍ່ເປັນງານມະຫາກຳຂອງທົ່ວແຂວງແລະທົ່ວປະເທດ. ການເຄື່ອນໄຫວໃນຕົວເມືອງກວາງໂຈວກາຍເປັນວຽກງານໃຈກາງໃນສອງປີຂ້າງໜ້າຂອງກວາງໂຈວ. ທ່ານຮຽກຮ້ອງທຸກຊັ້ນວັນນະແລະທຸກຂັ້ນທຸກກົມກອງຈະຕ້ອງເອົາແຜນການເຄື່ອນໄຫວໃນຕົວເມືອງກວາງໂຈວຮຽບເຂົ້າສູ່ແຜນການເຮັດວຽກໃນຊີວິດປະຈຳວັນ,ຈັດສັນກຳລັງຄົນ,ກຳລັງຊັບແລະ ກຳລັງທຶນເປັນເອກະພາບກັນ,ຈັດງານເອຊຽນເກມປະຕິບັດຕາມຫຼັກການປະຢັດແລະຕາມຄວາມສາມາດຂອງຕົນ.




ພາບໂຄສະນາ-ເດັກວາສະໜາ
宣传画——福娃

# ຖືຄົນເປັນກົກ ຢູນນານປະຕິບັດນະໂຍບາຍທີ່ມີຜົນປະໂຫຍດໃຫ້ປະຊາຊົນຫລາຍລາຍເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ

## 以人为本 云南多项惠民政策改善民生

近年来，云南省委、省政府坚持以人为本，全面贯彻落实科学发展观，出台了一系列关注民生、改善民生的惠民政策，给全省各族群众带来了实实在在的利益，深受城乡群众的赞扬。

ຫວ່າງມໍ່ໆປີມານີ້, ຄະນະພັກແລະອຳນາດການປົກຄອງແຂວງຢູນນານຖືຄົນເປັນກົກ, ເສີມຂະຫຍາຍທັດສະນະພັດທະນາດ້ວຍວິທະຍາສາດຢ່າງຮອບດ້ານ, ໄດ້ກຳນົດນະໂຍບາຍເອົາໃຈໃສ່ແລະປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເປັນລະບົບໜຶ່ງ, ໄດ້ນຳເອົາຜົນປະໂຫຍດຕົວຈິງໃຫ້ແກ່ປະຊາຊົນທຸກຊົນເຜົ່າໃນທົ່ວແຂວງໄດ້ຮັບຄວາມຍ້ອງຍໍສັນລະເສີນຈາກມວນຊົນອັນກວ້າງໃຫຍ່ໄພສານໃນຕົວເມືອງແລະຊົນນະບົດ.

ເພີ່ມຕື່ມເງິນບຳເໜັດຊົ່ວຄາວໃຫ້ແກ່ຄອບຄົວທີ່ມີລາຍຮັບໜ້ອຍຢ່າງທັນການ, ພະຍາຍາມຫຼຸດຜ່ອນພາລະດ້ານຊີວິດການເປັນຢູ່ຂອງຄອບຄົວທີ່ມີລາຍຮັບໜ້ອຍ. ແຕ່ປາຍປີ 2007ເປັນຕົ້ນໄປ, ແນ່ໃສ່ຄ່າອາຫານເພີ່ມຂຶ້ນສູງຫລາຍ, ແຂວງຢູນນານໄດ້ເພີ່ມຕື່ມເງິນບຳເໜັດຊົ່ວຄາວໃຫ້ແກ່ຄອບຄົວທີ່ມີລາຍຮັບໜ້ອຍຢ່າງທັນການ, ໄດ້ຜ່ອນຄາຍຄວາມກົດດັນ ດ້ານຊີວິດການເປັນຢູ່ຂອງຄອບຄົວທີ່ມີລາຍຮັບໜ້ອຍນັ້ນຢ່າງຫລວງຫລາຍທີ່ເກີດຍ້ອນຄ່າຄອງຊີບເພີ່ມຂຶ້ນ.

ປະຕິບັດການຫລຸດຜ່ອນແລະຍົກເວັ້ນຄ່າຮຽນຂອງການສຶກສາແບບບັງຄັບ ໂຮງຮຽນປະຖົມ ແລະ ໂຮງຮຽນມາທະຍົມຕົ້ນໃນຄຸ້ມບ້ານໃຫ້ປະກົດເປັນຈິງ, ນຳເອົາຜົນປະໂຫຍດຕົວຈິງໃຫ້ປະຊາຊົນ. ແຂວງຢູນນານເລີ່ມແຕ່ລະດູບານໃໝ່ປີ 2008 ເປັນຕົ້ນມາ, ໄດ້ຫລຸດຜ່ອນແລະຍົກເວັ້ນຄ່າຮຽນຂອງການສຶກສາແບບບັງຄັບ ໂຮງຮຽນປະຖົມແລະ ໂຮງຮຽນມາທະຍົມຕົ້ນໃນຄຸ້ມບ້ານຢ່າງຮອບດ້ານ, ເຮັດໃຫ້ຄ່າໃຊ້ຈ່າຍດ້ານການສຶກສາ ຂອງປະຊາຊົນຄຸ້ມບ້ານງວດທີ1, ຫລຸດຜ່ອນສະເລຍທົ່ວຄົນປະມານ16%. ໃນນັ້ນ, ຄ່າຮຽນການສຶກສາແບບບັງຄັບ ທຽບໃສ່ເວລາດຽວກັນປີທີ່ຜ່ານມາຫລຸດລົງ61,1%.

ເລັ່ງລັດຊຸກຍູ້ລະບົບປະກັນໄພດ້ານສັງຄົມໃຫ້ຄົບຖ້ວນບໍລິບູນ, ພະຍາຍາມຍົກສູງອັດຕາທີ່ມີສ່ວນຮ່ວມປະກັນໄພຂອງປະຊາຊົນທີ່ມີລາຍຮັບໜ້ອຍ. ປີ2007, ຄ່າໃຊ້ຈ່າຍປະກັນໄພດ້ານສັງຄົມຂອງຄອບຄົວທີ່ມີລາຍຮັບໜ້ອຍໃນຄຸ້ມບ້ານຕົວເມືອງແຂວງຢູນ



ນານໄດ້ເພີ່ມຂຶ້ນ 67%. ໃນນັ້ນຄ່າໃຊ້ຈ່າຍປະກັນໄພດ້ານສັງຄົມຂອງຄອບຄົວທຸກຍາກໄດ້ເພີ່ມຂຶ້ນ 87,7%, ຊຸກຍູ້ລະດັບປະກັນໄພດ້ານສັງຄົມຂອງຄອບຄົວ ທີ່ມີລາຍຮັບໜ້ອຍນັ້ນຂຶ້ນສູງ, ຫລຸດຜ່ອນຄວາມຫ່ວງໃຍທີ່ຢູ່ລອດແລະການພັດທະນາຂອງເຂົາເຈົ້າ.

ເສີມຂະຫຍາຍແລະປະຕິບັດນະໂຍບາຍຊື້ເຮືອນທີ່ມີລາຄາຖືກຢ່າງຮອບດ້ານປາກົດເປັນຈິງ. ເຮັດໃຫ້ເງື່ອນໄຂເຮືອນພັກຂອງຄອບຄົວທຸກຍາກຈະໄດ້ຮັບການປົວແປງໃຫ້ດີຂຶ້ນ.

ປັບປຸງລະບຽບການປິ່ນປົວພະຍາດແລະຄວບຄຸມລາຄາການຢາເພີ່ມຂຶ້ນສູງ, ຜ່ອນຄາຍຄວາມຂັດແຍ້ງໃນການປິ່ນປົວພະຍາດມີຄວາມຫຍຸ້ງຍາກຂອງປະຊາຊົນ. ແຂວງຢູນນານໄດ້ນຳໃຊ້ມາດຕາການຕົວຈິງຕັ້ງຫລາຍຄັ້ງຫລຸດຜ່ອນລາຄາຢາຂາຍຍ່ອຍໃຍລົງ, ປັບປຸງລະບຽບການປິ່ນປົວພະຍາດ, ເພີ່ມກຳລັງແຮງແກ້ໄຂບັນຫາປິ່ນປົວພະຍາດມີຄວາມຫຍຸ້ງຍາກຂອງປະຊາຊົນໃນຕົວເມືອງຄຸ້ມບ້ານ. ການປິ່ນປົວພະຍາດ, ເພີ່ມກຳລັງແຮງແກ້ໄຂບັນຫາປິ່ນປົວພະຍາດມີຄວາມຫຍຸ້ງຍາກຂອງປະຊາຊົນໃນຕົວເມືອງຄຸ້ມບ້ານ.

ສະສາງມົນລະພິດສະພາບແວດລ້ອມຢ່າງແຂງແຮງ, ສ້າງຈິດສຳນຶກສາຖາປະນາແຂວງດ້ວຍນິເວດວິທະຍາ, ບູລິມະສິດສິ່ງແວດລ້ອມ, ຄວາມເພິ່ງພໍໃຈຂອງປະຊາຊົນຕໍ່ສະພາບແວດລ້ອມນັບວັນນັບເພີ່ມຂຶ້ນສູງ. ແຂວງຢູນນານໄດ້ພະຍາຍາມກໍ່ສ້າງສັງຄົມເປັນແບບມິດຕະພາບດ້ານສະພາບແວດລ້ອມແລະແບບປະຢັດຊັບພະຍາກອນ, ຢູ່ໃນທົ່ວສັງຄົມສ້າງຕັ້ງຈິດສຳນຶກປົກປັກຮັກສາສິ່ງແວດລ້ອມຢ່າງຈັດເຈນ, ເອົາວຽກງານປົກປັກຮັກສາສິ່ງແວດລ້ອມ ເຊື່ອມເຂົ້າສູ່ທຸກໆດ້ານໃນການພັດທະນາເສດຖະກິດສັງຄົມ, ເຮັດໃຫ້ຄວາມເພິ່ງພໍໃຈຂອງປະຊາຊົນທົ່ວສັງຄົມຕໍ່ການສະສາງມົນລະພິດສະພາບແວດລ້ອມຈາກລັດຖະບານເພີ່ມຂຶ້ນແລະເພີ່ມທະວີຄວາມຮັບຮູ້ຈິດສຳນຶກປົກປັກຮັກສາສິ່ງແວດລ້ອມໃຫ້ສູງຂຶ້ນຢ່າງຈັດເຈນ.



禹江宁图

# ຢູນນານອອກແຮງກໍ່ສ້າງທາງນ້ຳ ຂົນສົ່ງອອກໄປຕ່າງແຂວງແລະອອກໄປຊາຍແດນ

## 云南积极建设出省和出境水运通道

近年来，云南大力发展澜沧江——湄公河国际航运，全力开发建设长江黄金水道、右江——珠江水运通道和库湖区旅游航运，全省水运建设呈现出良好发展态势。

ຫວ່າງມໍ່ໆປີມານີ້, ຢູນນານອອກແຮງກໍ່ສ້າງທາງນ້ຳຂົນສົ່ງສາກົນ ແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງ,ອອກແຮງພັດທະນາການຂົນສົ່ງນັກທ່ອງທ່ຽວທາງນ້ຳທອງຄຳແມ່ນ້ຳຢາງຊືກຽງ,ແມ່ນ້ຳຢ່ຽວກຽງ--ທາງນ້ຳຂົນສົ່ງຈູຈຽງ ແລະ ອ່ັງເຂດໜອງອ່າງນ້ຳ,ການກໍ່ສ້າງທາງນ້ຳຂົນສົ່ງຂອງທົ່ວແຂວງປະກົດທ່ວງທ່າພັດທະນາອັນດີເລີດ.

ທີ່ຕັ້ງແຂວງຢູນນານກວມເອົາລະບົບແມ່ນ້ຳໃຫຍ່6ສາຍ, ຊັບພະຍາກອນນ້ຳ ເປັນອັນດັບທີ3ຂອງຈີນ. ລວງຍາວຂອງແມ່ນ້ຳຫຼັກ14000ກວ່າກິໂລແມັດ,ທາງຂົນສົ່ງທີ່ສາມາດພັດທະນານຳໃຊ້ໄດ້ນັ້ນ ມີ8000ກວ່າກິໂລແມັດ,ນອກຈາກນັ້ນ,ຍັງມີໜອງທຳມະຊາດ 40 ກວ່າແຫ່ງແລະອ່າງນ້ຳ 5500 ກວ່າແຫ່ງທີ່ສາມາດພັດທະນາເປັນທາງຂົນສົ່ງໄດ້.

ປີ2007,ໄລຍະທາງສາມາດເດີນເຮືອຂົນສົ່ງໄດ້ຂອງແຂວງຢູນນານເຖິງ2764ກິໂລແມັດ,ປະລິມານຂົນສົ່ງສິນຄ້າແລະຜູ້ໂດຍສານຈາກທາງບົກ ແລະ ທາງນ້ຳໄດ້ເພີ່ມຂຶ້ນຢ່າງໝັ້ນທ່ຽງ,ອັດຕາເພີ່ມຂຶ້ນເປັນອັນດັບທີ 1 ຂອງຮູບການຂົນສົ່ງອື່ນໆ.ສະພາບການຄວາມປອດໄພທາງນ້ຳຂົນສົ່ງໄດ້ຮັກສາໄວ້ສະຖຽນລະພາບຢ່າງຕໍ່ເນື່ອງກັນເປັນເວລາ17ປີ.

ໃນນັ້ນ,ແມ່ນການພັດທະນາການຂົນສົ່ງສາກົນທາງນ້ຳແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງໄວກວ່າໝູ່ໝົດ. ໂດຍຜ່ານການກໍ່ສ້າງເປັນເວລາຫລາຍປີ, ໂຄງລ່າງພື້ນຖານຂອງມັນໄດ້ຮັບການປັບປຸງ ແລະ ຄົບຖ້ວນບໍລິບູນ,ຄວາມສາມາດຂົນສົ່ງນ້ຳໜັກຂອງເຮືອແຕ່ 100 ໂຕນໃນເມື່ອກ່ອນເຖິງ 300ໂຕນໃນປັດຈຸບັນນີ້.ເວລາເດີນເຮືອໂລ່ງຫາກັນໄດ້ແຕ່ 6 ເດືອນໃນເມື່ອກ່ອນຍົກສູງຂຶ້ນເຖິງ 10 ເດືອນຂຶ້ນໄປ.ປະລິມານຂົນສົ່ງໄດ້ຍົກສູງຂຶ້ນເລື້ອຍໆ,ໄດ້ກາຍເປັນສະຖານະພາບແຫ່ງການຂົນສົ່ງທາງນ້ຳທີ່ຟ້າວຟັ່ງລະຫວ່າງຈີນ-ລາວ-ມຽນມາແລະໄທໂດຍເບື້ອງຕົ້ນ.

ນອກຈາກນັ້ນ,ເຮືອບັນທຸກ 1000ໂຕນໃນແມ່ນ້ຳຈິນຊາຈຽງໄດ້ລົງນ້ຳດຳເນີນງານເດີນເຮືອແລ້ວ, ໂຄງລ່າງພື້ນຖານຂອງທ່າເຮືອຟູນີນແມ່ນ້ຳຢ່ຽວຈຽງແລະທ່າເຮືອໃຈກາງໄປ່ແສໄດ້ຮັບການຄືກໜ້າຢ່າງວ່ອງໄວ;ແຂວງຢູນນານຈີນກັບແຂວງລາວກາຍຫວຽດນາມໄດ້ເລັ່ງລັດບາດກ້າວໃນການຮ່ວມມືກັນພັດທະນາການຂົນສົ່ງທາງນ້ຳແມ່ນ້ຳຫົງຮ່າ.


ແມ່ນ້ຳຈິນສະຈຽງ
金沙江 CFP 图

# ເສີມຂະຫຍາຍວັດທະນາທຳຈີນສືບທອດເຜີຍແຜ່ສິລະປະກຳພື້ນເມືອງ




## 弘扬中国文化　传承民间艺术

文、图 / 张守义

弥渡县位于云南省西部，有彝族、白族等十多个少数民族居住，是中国古代通往东南亚、南亚茶马古道的必经之地。源远流长的经济文化交流孕育了弥渡花灯民歌这一奇葩，这一丰富的历史文化资源在今年六月被列为中国第一批国家级非物质文化遗产扩展名录。弥渡县政府历来重视弘扬民族文化，今年专门组织专家编写了弥渡花灯民歌乡土音乐教材，举行了“弥渡花灯民歌进校园”的启动仪式，以更好地传承弥渡花灯民歌艺术。

ບົດຟ້ອນ 《ນ້ຳຫ້ວຍໄຫຼລິດໆ》
歌舞《小河淌水》

ເມື່ອບໍ່ນານມານີ້ອຳນາດການປົກຄອງຂອງເມືອງມີຕູໄດ້ຈັດພິທີລິເລີ່ມເປີດໂຄງການ "ເພງພື້ນເມືອງລິເກຮົວຕຶງມີຕູເຂົ້າສູ່ປະຕູໂຮງຮຽນ "ທີ່ສະໜາມຮົວຕຶງມີຕູ;ເພງພື້ນເມືອງຮົວຕຶງມີຕູຖືເອົາເພງ 《ແຊວໂຮຖັງຊວຍ》 (ນ້ຳຫ້ວຍໄຫຼລິດໆ)ເປັນຍີ່ຫໍ້ດັ່ງທີ່ມາຈາກວັດທະນະທຳເສດຖະກິດໃນທາງບູຮານຊາມ້າຊຶ່ງເປັນປະຫວັດສາດອັນຍາວນານແລະມີຊື່ສຽງໂດ່ງດັງທີ່ເປັນມູນເຊື້ອສືບທອດກັນມາ, ໂດຍສະເພາະແມ່ນຢູ່ທີ່ພິທີປິດສາກລົງຄັ້ງປະຫວັດສາດເມື່ອບໍ່ດົນມານີ້ຄືະງານມະຫາກຳກິລາໂອລິມປິກຄັ້ງທີ 29 ທີ່ປະເທດຈີນ,ເພງພື້ນເມືອງມີຕູ 《ນ້ຳຫ້ວຍໄຫຼລິດໆ》 ຖືກຮ້ອງຂຶ້ນໂດຍນັກຮ້ອງຍິງທີ່ມີຊື່ສຽງໂດ່ງດັງຂອງປະເທດຈີນລວມມີ 7 ທ່ານໄດ້ພ້ອມໆກັນຮ້ອງເພງຢູ່ບົນເວທີປິດງານກິລາຄັ້ງນີ້ຢູ່ທີ່ລາຍການ 《ຄ່ຳຄືນນີ້ດວງເດືອນແຈ້ງ》 ອີກຄັ້ງໜຶ່ງໄດ້ປາກົດຢູ່ຕໍ່ໜ້າຂອງຊາວໂລກ,ເພງ 《ນ້ຳຫ້ວຍໄຫຼລິດໆເຊິ່ງຖືເປັນເພງລາຕີບູລາພາ. ຊາວມີຕູເຊິ່ງເປັນບ້ານເກີດຂອງເພງ 《ນ້ຳຫ້ວຍໄຫຼລິດໆ》 ຮູ້ສຶກພາກພູມໃຈທີ່ສຸດ

ເມືອງມີຕູແມ່ນເມືອງໜຶ່ງທີ່ຕັ້ງຢູ່ພາກຕາເວັນຕົກຂອງແຂວງຢູນນານເຊິ່ງປະກອບມີຫຼາຍຊົນເຜົ່າຄືຊົນເຜົ່າອີ,ຊົນເຜົ່າປາຍ ແລະ ອີກ 10 ກວ່າຊົນເຜົ່າສ່ວນໜ້ອຍຕັ້ງພູລຳເນົາຢູ່ແຫ່ງນີ້,ແຕ່ໃນບູຮານຈີນແມ່ນໄດ້ໃຊ້ເປັນເສັ້ນທາງອອກສູ່ອາຊີອາຄະເນ ແລະ ເສັ້ນທາງຊາມ້າໄປສູ່ພາກພື້ນອາຊີໄຕ້. ໃນການແລກປ່ຽນວັດທະນະທຳແລະເສດຖະກິດທີ່ມາແຕ່ບູຮານນະການນັ້ນມັນໄດ້ຫຼໍ່ລ້ຽງບົດເພງພື້ນເມືອງຮົວຕຶງທີ່ລຶກລ້ຳ. ຊັບສົມບັດອຸດົມສົມບູນທີ່ໄດ້ມາຈາກທາງດ້ານວັດທະນະທຳປະຫວັດສາດນີ້ໄດ້ຖືກບັນທຶກເຂົ້າເປັນຊຸດທີ 1 ທີ່ເປັນມໍລະດົກທາງດ້ານວັດທະນະທຳທີ່ບໍ່ແມ່ນວັດຖຸຂັ້ນຊາດຂອງຈີນ;ເພື່ອເປັນການສົ່ງເສີມມູນເຊື້ອໃນເດືອນ 6 ຂອງປີນີ້ອຳນາດການປົກຄອງເມືອງມີຕູ,ນັບຕັ້ງແຕ່ໃດໆມາກໍໄດ້ເອົາໃຈໃສ່ເສີມຂະຫຍາຍວັດທະນະທຳຂອງຊົນເຜົ່າມາຕະຫຼອດ. ເພື່ອເປັນການສືບທອດເຜີຍແຜ່ສິລະປະກຳຂອງເພງຮົວຕຶງເມືອງມີຕູ,ໃນປີນີ້ກໍໄດ້ຈັດຕັ້ງຊ່ຽວຊານແຕ່ງບົດສອນເພງພື້ນເມືອງຮົວຕຶງຂອງເມືອງມີຕູເພື່ອລະນຶກເຖິງ ແລະ ເປັນຕຳລາສອນ. ພ້ອມໆນີ້ດຽວກັນກັບພິທີເປີດ ແລະ ກໍໄດ້ມີການມອບ-ຮັບປື້ມບົດສອນເພງ.

# ອົງການຄຸ້ມຄອງຄົນເຂົ້າອອກແດນຂອງພະແນກສັນຕິບານແຂວງຢູນນານຊຸກຍູ້ການນຳ ໃຊ້ມາດຕາການອຳນວນຄວາມສະດວກແກ່ປະຊາຊົນຢ່າງຕັ້ງໜ້າ

## 云南省公安出入境管理部门积极推进便民服务措施

文 / 白继越

近年来，中国政府各部门坚持以科学发展观武装头脑，解放思想，实事求是，与时俱进，积极构建和谐社会，加强法制意识，提高服务意识，积极推进便民服务措施，提高工作效率为人民服务。

具体便民措施 :在前往港澳申请方面，内地居民申请赴香港或澳门进行商务活动，可在其工作单位所在地县级公安机关出入境管理机构申请，相关材料的提交也已简化 ;自今年7月1日起，持有效《往来港澳通行证》的昆明市居民再次申请港澳个人游签注的，只需把本人《往来港澳通行证》号码输入设在昆明市公安局出入境接待大厅的自助受理触摸屏，再根据电脑提示选择签注类别，材料齐全手续完备的，可迅速办理 ;公民在申领护照和港澳通行证时，材料齐全手续完备的，将在最短的时间内发放证件。

申请人可以自愿选择出入境证件特快专递服务，即由速递公司直接将证件送达申请人手中 ;申请人在提交申请时还可选择短讯提醒服务，一旦证照制作完毕系统将会发送短消息 ;申请人还可随时通过短信查询当前业务办理状态。这些服务都是免费的。

此外，公民护照遗失、损毁或被盗申请补发的，取消原来登报申明作废及受理补发申请 3 个月后制发证件的规定，可在受理之日起 15 日内发证。

出入境管理部门作为执法机关，紧紧抓住规范化建设这一生命线，大力推进规范执法建设，建立规范执法机制和便民服务措施、考评制度，并把人民群众满意度作为考核重要内容。人民群众满意度高的单位，将作为示范单位，给予荣誉 ;人民群众满意度低的单位，将被责令整改，以便更好地为人民服务。

ຫວ່າງມໍ່ໆປີມານີ້,ທຸກພາກສ່ວນຂອງລັດຖະບານຈີນຍຶດໝັ້ນການປະກອບອາວຸດໃຫ້ແນວຄິດດ້ວຍທັດສະນະພັດທະນາວິທະຍາສາດ,ປົດປ່ອຍແນວຄິດ,ຊອກຫາສັດຈະຈາກຄວາມເປັນຈິງ,ກ້າວໜ້າໄປທັນກັບຍຸກສະໄໝ,ກໍ່ສ້າງສັງຄົມທີ່ກົມກຽວຢ່າງຕັ້ງໜ້າ,ເພີ່ມທະວີຈິດສຳນຶກດ້ານກົດໝາຍ,ຍົກສູງສະຕິການບໍລິການ,ອອກແຮງຊຸກຍູ້ການນຳໃຊ້ມາດຕາການອຳນວຍຄວາມສະດວກໃຫ້ປະຊາຊົນ,ຍົກສູງສາມາດຕະພາບການງານເພື່ອຮັບໃຊ້ປະຊາຊົນ.

ອົງການຄຸ້ມຄອງຄົນເຂົ້າອອກແດນເປັນອົງການປະຕິບັດຕາມກົດໝາຍ,ຈະຕ້ອງກຳແໜ້ນການກໍ່ສ້າງສິ່ງທີ່ເປັນແບບແຜນເຊິ່ງເປັນເສັ້ນຊີວິດອັນຊີເສັ້ນນີ້,ອອກແຮງຊຸກຍູ້ການກໍ່ສ້າງການປະຕິບັດຕາມກົດໝາຍທີ່ເປັນແບບແຜນ,ສ້າງຕັ້ງກົນໄກປະຕິບັດກົດໝາຍທີ່ເປັນແບບແຜນແລະມາດຕາການອຳນວຍຄວາມສະດວກໃຫ້ປະຊາຊົນ ແລະ ລະບອບສອບເສັງ,ຖືເອົາຄວາມເພິ່ງພໍໃຈຂອງປະຊາຊົນເປັນເນື້ອໃນສຳຄັນໃນການສອບເສັງ,ຫົວໜ່ວຍທີ່ມີຄວາມເພິ່ງພໍໃຈຈາກປະຊາຊົນສູງນັ້ນເປັນຫົວໜ່ວຍແບບຢ່າງ,ປະດັບນາມະຍົດໃຫ້,ຫົວໜ່າວຍທີ່ມີຄວາມເພິ່ງພໍໃຈຈາກປະຊາຊົນຕ່ຳນັ້ນ,ຈະຕັກເຕືອນໃຫ້ດັດແປງແກ້ໄຂເພື່ອເປັນການຮັບໃຊ້ປະຊາຊົນຍິ່ງດີກວ່າເກົ່າ.



# ໝາກໄມ້ອາຊຽນຈັບຈອງຕະຫລາດຈີນ ທ່າດ່ານກວາງຊີກາຍເປັນ "ຊ່ອງທາງປະຕູ"

**东盟水果"抢滩"中国市场**

**广西口岸成"门户通道"**

随着中国-东盟自由贸易区"早期收获计划"深入实施，大量东盟国家水果乘关税优惠"东风"抢滩中国市场。作为中国-东盟区域合作前沿的广西成为东盟水果进入中国的"门户通道"。据南宁海关统计，今年上半年广西口岸进口东盟水果超过23万吨，持续居全国首位。



CFP 图

ຄຽງຄູ່ກັບປະຕິບັດ "ແຜນການເກັບກ່ຽວໄລຍະເຊົ້າ" ຢ່າງເລິກເຊິ່ງຂອງເຂດການຄ້າເສລີຈີນ-ອາຊຽນ,ໝາກໄມ້ຂອງປະເທດອາຊຽນເປັນຈຳນວນຫລວງຫລາຍສວຍໂອກາດນະໂຍບາຍບູລິມະສິດພາສີມາຈັບຈອງຕະຫລາດຈີນ.ສຳລັບກວາງຊີເຊິ່ງເປັນແນວໜ້າການຮ່ວມມືລະຫວ່າງຈີນກັບຂົງເຂດອາຊຽນກາຍເປັນ "ຊ່ອງທາງປະຕູ" ຂອງໝາກໄມ້ອາຊຽນເຂົ້າອອກປະເທດຈີນ.ຕາມການສະຖິຕິຂອງດ່ານນານນິງວ່າ,ດ່ານກວາງຊີນຳເຂົ້າໝາກໄມ້ອາຊຽນໃນຕົ້ນປີນີ້ໄດ້ເກີນ 2,3 ແສນໂຕນ, ສືບຕໍ່ເປັນອັນດັບທີໜຶ່ງໃນທົ່ວປະເທດຈີນ.

ຕົ້ນປີ2008,ຍອດປະລິມານນຳເຂົ້າໝາກໄມ້ຂອງທົ່ວປະເທດຈີນປະມານ 8,07 ແສນໂຕນ,ທຽບໃສ່ເວລາດຽວກັນປີກາຍນີ້ ໄດ້ເພີ່ມຂຶ້ນ 36,5%.ໝາກໄມ້ແຖບຮ້ອນເຊັ່ນ: ມາກໂມ,ໝາກມັງກອນໝາກທຸລຽນເປັນຕົ້ນເປັນຈຳນວນຫລວງຫລາຍເຂົ້າສູ່ກະຕ່າໝາກໄມ້ຂອງປະຊາຊົນຈີນ.ໃນໄລຍະນີ້,ດ່ານກວາງຊີເຊິ່ງມີຖານະປະຕູເຂົ້າອອກໝາກໄມ້ຂອງອາຊຽນນັບມື້ນັບໂດດເດັ່ນຂຶ້ນ,ຕາມການສະຖິຕິຕົ້ນປີນີ້,ດ່ານກວາງຊີນຳເຂົ້າໝາກໄມ້ຂອງປະເທດອາຊຽນ 2,32ແສນໂຕນ, ກວມ28,7%ຂອງຍອດຈຳນວນນຳເຂົ້າໝາກໄມ້ອາຊຽນໃນທົ່ວປະເທດທຽບໃສ່ເວລາດຽວກັນຂອງປີທີ່ຜ່ານມາ.

ຫວ່າງມໍ່ໆປີມານີ້,ຄຽງຄູ່ກັບງານນິທັດສະການຈີນ-ອາຊຽນຕັ້ງຂຶ້ນແລະເລັ່ງລັດການສ້າງສາເຂດການຄ້າເສລີຈີນ-ອາຊຽນ,ກວາງຊີເຊິ່ງມີຖານະ "ປ້ອມແນວໜ້າ" ແຫ່ງການຮ່ວມມືລະຫວ່າງຈີນກັບຂົງເຂດອາຊຽນນັບມື້ນັບໂດດເດັ່ນຂຶ້ນ,ເປັນການຊຸກຍູ້ການພັດທະນາດ້ານການຄ້າຂາອອກຂາເຂົ້າຂອງກວາງຊີຕໍ່ອາຊຽນຕື່ມອີກກ້າວໜຶ່ງ.ນອກນັ້ນ,ເຄືອຂ່າຍຄົມນາຄົມທີ່ຄົບຖ້ວນສົມບູນກາຍເປັນສາຍເຫດທີ່ສຳຄັນເຊິ່ງນຳເຂົ້າໝາກໄມ້ອາຊຽນໂດຍຜ່ານຊ່ອງທາງກວາງຊີເຂົ້າສູ່ຈີນ.ຫລັງຈາກທາງດ່ວນນານນິງ-ດ່ານມິດຕະພາບເຊິ່ງເປັນທາງດ່ວນສາຍທີ 1 ຂອງຈີນເຊື່ອມຕໍ່ອາຊຽນສ້າງສຳເລັດແລ້ວ,ຈະຊຸກດັນຈຳນວນມູນຄ່າການຄ້າຂາອອກຂາເຂົ້າຂອງດ່ານຜິນຊຽງໂດຍກົງ.ຕາມການສະຖິຕິ,ຕົ້ນປີ 2008,ດ່ານຜິນຊຽງຂາເຂົ້າໝາກໄມ້ອາຊຽນ 2,26 ແສນໂຕນ,ກວມ 97,4%ຂອງຍອດຈຳນວນຂາເຂົ້າໝາກໄມ້ ອາຊຽນຈາກດ່ານກວາງຊີ,ປັດຈຸບັນນີ້,ໝາກໄມ້ອາຊຽນຂາເຂົ້າໂດຍຜ່ານທ່າກຳປັ່ນຂົນສົ່ງທາງທະເລກວາງຕຸງໄດ້ຫັນໄປທາງບົກເຂົ້າສູ່ປະເທດຈີນ.




ວັນທີ19ກັນຍາປີ2005,ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນຄັ້ງທີ26ທີ່ນະຄອນຫລວງວຽງຈັນສ ປປ ລາວຖ່າຍຮູບລວມເປັນທີ່ລະນຶກ.
2005 年 9 月 19 日，在老挝首都万象举行的第 26 届东盟议会联盟会议开幕式上，与会的各国代表合影　新华社 图

# ສ ປປ ລາວ ກ້າວເຂົ້າສູ່ສະຕະວັດທີ 21

## 迈入 21 世纪的老挝

文 / 张瑞昆

早在跨世纪之年，中国学者就明确指出：“今后的 10-20 年将会是老挝发展较快的时期”，“老挝只会稳定不会动乱，只会发展不会衰退”。走进 21 世纪的老挝，亮点频现。仅以此文祝贺老挝人民民主共和国 33 周年国庆！

ໃນປີທີ່ພວມກ້າວຂ້າມສະຕະວັດໃໝ່,ນັກປາດຂອງຈີນໄດ້ຊີ້ອອກຢ່າງຈະແຈ້ງວ່າ: "ຫລັງຈາກນີ້ 10-20ປີຈະແມ່ນໄລຍະການພັດທະນາທີ່ວ່ອງໄວຂອງ ສປປ ລາວ", "ສປປ ລາວມີແຕ່ຈະໝັ້ນທ່ຽງ,ຈະບໍ່ມີຄວາມວຸ້ນວາຍ;ມີແຕ່ຈະພັດທະນາ,ຈະບໍ່ຖົດຖອຍ".

ສປປ ລາວເມື່ອກ້າວເຂົ້າສູ່ສະຕະວັດທີ 21 ,ໄດ້ມີຈຸດພົ້ນເດັ່ນປະກົດອອກຢ່າງລຽນຕິດຄື:

ປະກາດວ່າໃນປີ 2020 ຈະຫລຸດພົ້ນອອກຈາກກຸ້ມແກວຂອງປະເທດດ້ອຍພັດທະນາ:

ຜູ້ນຳພັກແລະລັດ ສປປ ລາວໄດ້ສະເໜີຢ່າງເປັນທາງການຢູ່ໃນກອງປະຊຸມທີ່ໄຂຂຶ້ນໃນໂອກາດຄົບຮອບ 25 ປີແຫ່ງວັນສ້າງຕັ້ງສາທາລະນະລັດປະຊາທິປະໄຕປະຊາຊົນລາວໃນວັນທີ 2 ທັນວາປີ 2000 ວ່າ,ກອງປະຊຸມໃຫຍ່ຄັ້ງທີ 7 ແລະ ຄັ້ງທີ 8 ຂອງພັກປະຊາຊົນປະຕິວັດລາວໄດ້ດຳເນີນວຽກງານຈັດວາງທາງຍຸດທະສາດທີ່ລ້ວນແຕ່ປິ່ນອ້ອມເປົ້າໝາຍດັ່ງກ່າວ.

**ການນຳຂອງພັກປະຊາຊົນປະຕິວັດລາວແຮ່ງມີຄວາມໝັ້ນຄົງ:**

ພັກແມ່ນແກ່ນນຳຂອງປະເທດຊາດ,ກອງທັບແລະກຳລັງທາງການເມືອງທີ່ຖືກກົດໝາຍລ້ວນແຕ່ຢູ່ພາຍໃຕ້ການນຳພາຂອງພັກ.ໃນວັນທີ 12-14ມີນາ 2001,ກອງປະຊຸມໃຫຍ່ຜູ້



ວັນທີ18ມີນາປີ2006ພະນະທ່ານຄຳໄຕ ສີພັນດອນປະທານຄະນະກຳມະການສູນກາງພັກປະຊາຊົນປະຕິວັດລາວກ່າວຄຳປາໄສໃນພິທີເປີດກອງປະຊຸມຄະນະຜູ້ແທນທົ່ວປະເທດຂອງ ພັກປະຊາຊົນປະຕິວັດລາວຄັ້ງທີ8ທີ່ວຽງຈັນ

2006 年 3 月 18 日，在老挝首都万象，老挝人民革命党中央委员会主席坎代 · 西潘敦在老挝人民革命党第八次代表大会开幕式上发言　新华社 图



ວັນທີ31ມີນາປີ2008, ພິທີເປີດກອງປະຊຸມຜູ້ນຳການຮ່ວມມືເສດຖະກິດ ອະນຸພາກພື້ນແມ່ນ້ຳຂອງຄັ້ງທີ3ທີ່ວຽງຈັນ

2008 年 3 月 31 日，大湄公河次区域经济合作第三次领导人会议在老挝首都万象开幕　新华社 图

ແທນທົ່ວປະເທດຄັ້ງທີ 7 ຂອງພັກປະຊາຊົນປະຕິວັດລາວໄດ້ເປີດຂຶ້ນແລະຖືກຖືວ່າເປັນ "ຈຸດລ້ຽວແຫ່ງການກ້າວເຂົ້າສູ່ສະຕະວັດທີ 21". ວັນທີ 22 ມີນາ 2005, ພັກປະຊາຊົນປະຕິວັດລາວໄດ້ສະເຫລີມສະຫລອງວັນຄົບຮອບ 50 ປີແຫ່ງການສ້າງຕັ້ງພັກຢ່າງຍິ່ງໃຫຍ່. ວັນທີ 18-21 ມີນາ 2006, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ 8 ຂອງພັກປະຊາຊົນປະຕິວັດລາວໄດ້ເປີດຂຶ້ນ, ຄະນະນຳຂອງພັກແລະລັດໄດ້ດຳເນີນການສັບປ່ຽນການນຳລະຫວ່າງຜູ້ເກົ່າແລະຜູ້ໃໝ່ໄດ້ຢ່າງສະດວກດີ.

**ການທູດແມ່ນ້ຳຂອງທີ່ດຳເນີນການຕົວຈິງແບບຫລາຍຝ່າຍໄດ້ຮັບໝາກຜົນໃນການຮ່ວມມືຢູ່ພາກພື້ນຢ່າງເດັ່ນຊັດ:**

ການເປັນປະເທດຂໍ້ຕໍ່, ເປັນສູນກາງທາງຜ່ານຂອງ GMS ແລະເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລພຽງປະເທດດຽວໃນອາຊີອາຄະເນນັ້ນ, ໄດ້ເຮັດໃຫ້ບົດບາດແລະທີ່ຕັ້ງທາງຍຸດທະສາດຂອງ ສປປລາວ ຢູ່ ໃນການຮ່ວມມືພາກພື້ນແມ່ນໄດ້ຮັບຄວາມສົນໃຈເປັນຢ່າງຍິ່ງເປັນຕົ້ນແມ່ນຢູ່ໃນການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳຂອງ (GMS) ທີ່ເລີ່ມດຳເນີນການແຕ່ເດືອນຕຸລາປີ 1992 ແລະ ການຮ່ວມມືເຂດການຄ້າເສລີຈີນ-ອາຊຽນ (AFTA) ທີ່ເລີ່ມດຳເນີນການແຕ່ເດືອນພະຈິກປີ 2002.

**ຜົນສຳເລັດການເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນໄດ້ຍົກສູງຖານະບົດບາດຂອງ ສປປ ລາວ ໃນເອທີສາກົນ, ໂດຍສະເພາະໃນອາຊີອາຄະເນ:**

ເດືອນພະຈິກປີ 2004 ເຖິງເດືອນຕຸລາປີ 2005, ຫາກໍ່ເຂົ້າອາຊຽນໄດ້ 7 ປີ, ສປປ ລາວໄດ້ຮັບຜຽນເປັນປະເທດປະທານຂອງກຸ່ມອາຊຽນ (ASEAN) ເປັນເທື່ອທຳອິດ, ທັງໄດ້ດຳເນີນກອງປະຊຸມລະດັບລັດຖະມົນຕີຕ່າງໆ ແລະ ກອງປະຊຸມສຸດຍອດຕ່າງໆຂອງອາຊຽນຢູ່ນະຄອນຫລວງວຽງຈັນ. ອາຊຽນກາຍເປັນເວທີທີ່ສຳຄັນໃຫ້ແກ່ ສປປ ລາວໃນການສະແດງບົດບາດຢູ່ໃນວຽກງານຂອງພາກພື້ນກໍຄືສາກົນ, ສປປ ລາວກາຍເປັນ "ປະເທດສະມາຊິກທີ່ມີລັກສະນະສ້າງສັນແລະສຳຄັນຫລາຍ" ຢູ່ໃນກຸ່ມອາຊຽນ.

**ປຸກລະດົມກຳລັງພົນທົ່ວປະເທດເພື່ອດຳເນີນກອງປະຊຸມສຸດຍອດຜູ້ນຳບັນດາປະເທດ GMS ຄັ້ງທີ 3 :**

ວັນທີ 30-31 ເດືອນມີນາປີ 2008, ກອງປະຊຸມຜູ້ນຳບັນດາປະເທດ GMS ຄັ້ງທີ 3 ໄດ້ດຳເນີນຢ່າງມີຜົນສຳເລັດຢູ່ນະຄອນຫລວງວຽງຈັນ. ລັດຖະບານແລະພາກສ່ວນກ່ຽວຂ້ອງຕ່າງໆໄດ້ເອົາໃຈໃສ່ເປັນຢ່າງສູງ, ຈັດວາງຢ່າງລະອຽດຮອບຄອບ, ກະກຽມຢ່າງຈິງຈັງ, ດຳເນີນວຽກງານຢ່າງຕັ້ງໜ້າ ແລະ ມີປະສິດທິພາບ; ນາຍົກລັດຖະມົນຕີບົວສອນ ບຸບຜາວັນໄດ້ອອກ "ແຈ້ງການ" ຮຽກຮ້ອງໃຫ້ປວງຊົນສະແດງ ໂສມໜ້າ ແລະ ຈິດໃຈອັນດີງາມທີ່ສຸດອອກມາເພື່ອຍົກສູງພາບພົດທາງສາກົນຂອງ ສປປ ລາວ, ທັງຮັບປະກັນການດຳເນີນກອງປະຊຸມໄດ້ຢ່າງສະດວກດີ; ສື່ມວນຊົນທີ່ສຳຄັນທຸກສີ່ກໍ່ທະຍອຍກັນອອກບົດຂຽນຕ່າງໆເຜີຍແຜ່ໂຄສະນາຄວາມໝາຍສຳຄັນຂອງການດຳເນີນກອງປະຊຸມສຸດຍອດຢູ່ ສປປ ລາວ , ປຸກລະດົມປວງຊົນໃຫ້ຂານຕອບຕໍ່ຄຳຮຽກຮ້ອງຂອງ

ລັດຖະບານ, ເພື່ອປະກອບສ່ວນໃນສິ່ງທີ່ຕົນຄວນປະກອບສ່ວນ. ໄດ້ຮັບ "ລາງວັນສັນຕິພາບໂລກ "ໃນວັນສັນຕິພາບໂລກກັນຍາປີ 2008, ຄະນະມົນຕີສັນຕິພາບໂລກປະດັບ "ຫຼຽນໄຊສັນຕິພາບໂລກ "ໃຫ້ປະເທດລາວເພື່ອຍ້ອງຍໍສັນລະເສີນປະເທດລາວໄດ້ປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບໂລກແລະຮັກສາປະເທດຊາດມີຄວາມສະຖຽນນະພາບແລະການພັດທະນາ, ທ່ານຈູມມະລີໄຊຍາສອນປະທານປະເທດຕາງໜ້າປະເທດລາວໄດ້ຮັບຫຼຽນລາງວັນ.

**ການເຕີບໂຕທາງເສດຖະກິດແນ່ນຢູ່ໃນແຖວໜ້າຂອງບັນດາປະເທດອາຊຽນ:**

ໃນເວລາທີ່ສືບຕໍ່ໄດ້ຮັບຜົນກະທົບຂອງວິກິດການການເງິນອາຊີອາຄະເນແຕ່ປີ 1997-1999, ຫລັງຈາກການລົງຄ້ອຍຂະໜາດໃຫຍ່ຂອງເສດຖະກິດໄດ້ຜ່ານໄປ, ນັບແຕ່ປີ 2000 ເປັນຕົ້ນມາໄດ້ປະກົດມີການເຕີບໂຕທີ່ມີລັກສະນະຟື້ນຟູຄືນ. ປີ 2001-2005, ການເພີ້ມຂື້ນສະເລັ່ຍຂອງ GDP ແມ່ນ 6.42%, ຢືນຢູ່ໃນອັນດັບນຳໜ້າຂອງປະເທດອາຊຽນ, ເຊິ່ງເປັນຮອງແຕ່ຫວຽດນາມເທົ່ານັ້ນ.

**ຂະແໜງທ່ອງທ່ຽວກາຍເປັນແຫລ່ງທີ່ມາສຳຄັນຂອງເງິນຕາຕ່າງປະເທດ:**

ຂະແໜງການທ່ອງທ່ຽວທີ່ຖືເອົາແຫລ່ງທ່ອງທ່ຽວເກືອບພັນແຫ່ງເປັນພື້ນຖານນັ້ນ, ໃນໄລຍະ 8 ປີນັບແຕ່ປີ 2000 ເປັນຕົ້ນມາ, ນັກທ່ອງທ່ຽວຕ່າງປະເທດບັນລຸເຖິງ 7.6 ລ້ານກວ່າເທື່ອຄົນ, ລາຍຮັບເງິນຕາຕ່າງປະເທດສະເລັ່ຍຕໍ່ປີແມ່ນ 136 ລ້ານໂດລາສະຫະລັດ. ໃນນັ້ນ, ໃນປີ 2007 ມີສູງເຖິງ 1,623,900ເທື່ອຄົນ, ມີລາຍຮັບ 233 ລ້ານໂດລາສະຫະລັດ, ສືບຕໍ່ຈາກປີ 2000 ພາຍຫລັງທີ່ທະລຸ 100 ລ້ານໂດລາສະຫະລັດສາມາດທະລຸ 200 ລ້ານໂດລາສະຫະລັດໄດ້ເປັນເທື່ອທຳອິດ. ໃນປີ 2005, ແຂວງຫລວງພະບາງໄດ້ຖືກຄັດເລືອກໃຫ້ເປັນຕົວເມືອງທ່ອງທ່ຽວທີ່ໄດ້ຮັບຄວາມສົນໃຈທີ່ສຸດ, ເຊິ່ງຄັດເລືອກດ້ວຍການປ່ອນບັດລົງຄະແນນທີ່ຈັດທຳໂດຍບໍລິສັດທ່ອງທ່ຽວຫລາຍກວ່າຮ້ອຍບໍລິສັດຂອງປະເທດອັງກິດ, ປີ 2006-2008 ສາມປີຊ້ອນໄດ້ຮັບຫລຽນຄຳເມືອງທ່ອງທ່ຽວທີ່ຍອດນິຍົມຂອງໂລກຈາກ "ວາລະສານທ່ອງທ່ຽວຂອງອັງກິດ".

**ປະກາດເປັນປະເທດລົບລ້າງການປູກຢາຝິ່ນ:**

ກ່ອນມື້ຄົບຮອບວັນຕໍ່ຕ້ານຢາເສບຕິດໂລກໃນປີ 2006, ສປປ ລາວໄດ້ປະກາດຫ້າມການປູກຢາຝິ່ນແລະການປຸງແຕ່ງຢາເສບຕິດໃນຂອບເຂດທົ່ວປະເທດທີ່ມີປະຫວັດສາດມາຫລາຍກວ່າ 150 ປີ. ອັນນີ້ບໍ່ພຽງແຕ່ແມ່ນສີລາຈາລຶກໃນຂະບວນວິວັດການພັດທະນາເສດຖະກິດສັງຄົມຂອງ ສປປ ລາວເທົ່ານັ້ນ, ແຕ່ຫາກຍັງຈະແມ່ນໜ້າໜຶ່ງທີ່ສະຫວ່າງແຈ້ງທີ່ຖືກປະໄວ້ຢູ່ໃນປະຫວັດສາດຂອງການຕໍ່ຕ້ານຢາເສບຕິດຂອງໂລກ. ວັນທີ 9 ມັງກອນປີ 2008, ກອງປະຊຸມວຽກງານຕໍ່ຕ້ານຢາເສບຕິດສາກົນໄດ້ຖືກຈັດຂື້ນຢູ່ ສປປ ລາວ.

**ທາງລົດໄຟຈາກບໍ່ມີໄດ້ປະກົດມີຂື້ນ, ໄດ້ປະສົບຜົນສຳເລັດໃນການທະລຸເປົ້າໝາຍ:**

ປີ 2007 ໄດ້ເລີ່ມປະຕິບັດງານ, ມາເຖິງເດືອນກໍລະກົດປີນີ້ໄດ້ເລີ່ມນຳໃຊ້ເສັ້ນທາງລົດໄຟໂດຍການເຊື່ອມຕໍ່ຢ່າງເປັນທາງການເສັ້ນທາງລົດໄຟທີ່ມີຄວາມກ້ວາງຂອງຮາງໜຶ່ງແມັດຍາວ 3,5ກິໂລແມັດແຕ່ທ່ານາແລ້ງ ສປປ ລາວ ຜ່ານຂົວມິດຕະພາບລາວ-ໄທໄປສູ່ຈັງຫວັດໜອງຄາຍຂອງປະເທດໄທ, ເຊິ່ງອັນນີ້ໄດ້ສິ້ນສຸດປະຫວັດສາດທີ່ວ່າ ສປປ ລາວໃນເມື່ອກ່ອນບໍ່ມີທາງລົດ



ນະຄອນຫຼວງວຽງຈັນ, ການຄ້າດອກໄມ້ສົດຈະເລີນຮຸ່ງເຮືອງ
老挝首都万象，鲜花市场生意兴隆 新华社 图

ໄຟຜ່ານປະເທດ. ພ້ອມດຽວກັນຍັງໄດ້ສຳເລັດຮ່າງການອອກແບບທາງລົດໄຟໄລຍະ 14 ກິໂລແມັດຈາກຂົວມິດຕະພາບລາວ-ໄທໄປເຖິງບ້ານຄຳສະຫວາດນະຄອນຫລວງວຽງຈັນ, ທັງໄດ້ເລີ່ມດຳເນີນງານກ່ຽວກັບການຄົ້ນຄ້ວາ ແລະ ສຳຫລວດຄວາມເປັນໄປໄດ້ໃນການສ້າງທາງລົດໄຟແຕ່ທ່າແຂກ--ກິ່ວກະຈຳ 137 ກິໂລແມັດ, ວຽງຈັນ--ຫລວງພະບາງ--ຊາຍແດນຈີນ, ວຽງຈັນ--ປາກເຊ, ປາກເຊ--ສາລະວັນ--ຊາຍແດນຫວຽດນາມ.

**ການຄ້າຂາເຂົ້າຂາອອກໄດ້ປຽບດູນການຄ້າເປັນເທື່ອທຳອິດ:**

ສົກປີ 2006-2007 ຍອດມູນຄ່າການຄ້າຂາອອກຂອງລາວມີ 925,56 ລ້ານໂດລາອະຫະລັດ, ເປັນເທື່ອທຳອິດທີ່ໄດ້ປຽບດູນການຄ້າ 9.2 ລ້ານໂດລາສະຫະລັດ. ທຽບໃສ່ກັບສົກປີກ່ອນເພີ່ມຂຶ້ນ 5.42%, ເຊິ່ງແມ່ນ 2,85 ເທົ່າຂອງປີ 2008. ໃນນັ້ນ, ພາຍຫລັງການສົ່ງອອກຜະລິດຕະພັນບໍ່ແຮ່ທະລຸ 400 ລ້ານໂດລາສະຫະລັດນັບແຕ່ປີກ່ອນນັ້ນມາ, ປີ 2007 ກໍທະລຸເປົ້າອີກເຖິງ 500 ລ້ານໂດລາສະຫະລັດ, ເຊິ່ງແມ່ນ 93,3 ເທົ່າຂອງປີ 2000, ຢູ່ໃນອັນດັບທີ 4 ຂອງສິນຄ້າແຖວໜ້າທີ່ສົ່ງອອກຕ່າງປະເທດ.

**ຂະແໜງການສື່ສານໂທລະຄົມຂະຫຍາຍຕົວຢ່າງໄວວາ:**

ໂທລະສັບຕັ້ງໂຕະ ແລະ ໂທລະສັບມືຖືຂະຫຍາຍຕົວຈາກຈຳນວນ 49,000ໜ່ວຍຂອງປີ 2000 ຂຶ້ນເປັນ 1,785 ລ້ານໜ່ວຍໃນປີ 2007, ໃນໄລຍະ 7 ປີ ເພີ່ມຂຶ້ນ 35,4ເທົ່າ. ຄ່າຂຶ້ນທະບຽນເຂົ້າສູ່ເຄືອຂ່າຍຂອງໂທລະສັບມືຖືຢູ່ນະຄອນວຽງຈັນໄດ້ຫລຸດລົງຈາກ 120 ໂດລາສະຫະລັດໃນ 5 ປີກ່ອນມາເປັນລາຄາມີແຕ່ 2 ໂດລາສະຫະລັດ. ການດຳເນີນໂຄງການບໍລິຫານລັດດ້ວຍເອເລັກໂທນິກ ( E-government ) ແມ່ນຈະຍົກສູງປະສິດທິພາບຂອງການປະຕິບັດວຽກງານຂອງລັດຖະບານລາວຢ່າງຫລວງຫລາຍນັບທັງດ້ານຣາດແວ ແລະ ຊອບແວ. ເດືອນມີນາປີ 2008, ໂຄງການໄລຍະທີໜຶ່ງຂອງເສັ້ນທາງດ່ວນທາງດ້ານສື່ສານຂອງ GMS ໄດ້ເປີດການນຳໃຊ້ຢ່າງເປັນທາງການແລ້ວ.

ເຊັ່ນດຽວກັນກັບຜູ້ຂຽນໄດ້ກ່າວໄວ້ຢູ່ໃນປຶ້ມ: "ຫຍັບເຂົ້າໃກ້ປະເທດລາວ "ທີ່ພິມອອກໃນປີ 2006 ນັ້ນວ່າ, "ປະເທດລາວພວມປ່ຽນແປງພັດທະນາ, ຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ປະເທດລາວຍັງບໍ່ທັນສິ້ນສຸດ "ເມື່ອກ້າວເດີນໄປຕາມກາລາເວລາ, ພວກເຮົາແມ່ນມີຄວາມຈຳເປັນຕ້ອງຮັບຮູ້ ແລະ ເຂົ້າໃຈປະເທດລາວໃຫ້ຮອບດ້ານກ່ວາເກົ່າ.

ຂໍຖືເອົາບົດຂຽນນີ້ອວຍພອນໃຫ້ແກ່ວັນສ້າງຕັ້ງສາທາລະນະລັດປະຊາທິປະໄຕປະຊາຊົນລາວຄົບຮອບ 33 ປີ!






ວັນທີ18ມີນາປີ2006, ຢູ່ເບື້ອງສອງຟາກທາງຂອງນະຄອນຫລວງວຽງຈັນໄດ້ປະດາລັນທຸງໂຄສະນາກອງປະຊຸມຜູ້ແທນຂອງພັກປະຊາຊົນປະຕິວັດລາວຄັ້ງທີ8
2006 年 3 月 18 日，在老挝首都万象，城市街道两边布置了宣传老挝人民革命党第八次代表大会的旗帜 新华社 图

# ສະຫວັນເມືອງຄົນ–ຫໍເຝີງລ້າຍເກົ໊

## 人间仙境——蓬莱阁

文、图 / 苏雯雯

蓬莱阁位于山东省蓬莱市西北临海的丹崖上，“ 蓬莱阁 ” 是占地 32800 平方米、建筑面积达 18960 平方米的庞大古建筑群，楼亭殿阁分布得宜，层楼重阁，掩映在苍松翠柏之间，海水浩淼，云雾变幻，素有 “ 人间仙境 ” 之称。加以秦始皇访仙求药的历史故事和八仙过海的神话传说，更使它蒙上了一层神秘的色彩，遂成为名扬四海的游览名区。1982 年国务院公布水城及蓬莱阁为国家重点文物保护单位。

ຫໍເຝີງລ້າຍເກົ໊ມີທີ່ຕັ້ງຢູ່ເທິງຈອມຜາທີ່ຕິດກັບທະເລພາກຕາເວັນຕົກສ່ຽງເໜືອຂອງນະຄອນເຝີງລ້າຍແຂວງຊານຕົ່ງ, "ຫໍເຝີງລ້າຍມີເນື້ອທີ່ 32.800 ຕາແມັດ, ເນື້ອທີ່ກໍ່ສ້າງມີເຖິງ 18.960 ຕາແມັດເປັນກຸ່ມສິ່ງປຸກສ້າງບູຮານອັນໃຫຍ່ໂຕມະໂຫລານ, ຫໍ, ໂຮງ, ວັງແລະສາລາຈັດວາງຢ່າງເໝາະເຈາະ, ແຕ່ລະຊັ້ນຂອງຫໍມີສາລາ, ປຸກສ້າງຂຶ້ນຢູ່ລະຫວ່າງຕົ້ນໄມ້ແປກທີ່ຂຽວອຸ່ມທຸ່ມປົກຄຸມໄວ້, ເບື້ອງໜ້າແມ່ນທະເລອັນກວ້າງໃຫຍ່ໄພສານ, ມີເມກໝອກປົ່ນປວນຢູ່ຕາມບໍລິເວນຢ່າງບໍ່ຂາດ, ແຕ່ໃດມາເຄີຍຖືກເອີ້ນວ່າ: "ສະຫວັນເມືອງຄົນ". ບວກໃສ່ມີນິທານປະຫວັດສາດເລື່ອງຊິນຊີຮວງເຕ້ມາຢາມເທວະດາຫາຢາສະໝຸນໄພ ແລະ ເທບນິຍາຍຊ່າລືກັນວ່າແມ່ນເທບວາດາທັງ 8 ຂ້າມທະເລ, ຍິ່ງເຮັດໃຫ້ມັນປົກຄຸມເຕັມໄປດ້ວຍສີສັນອັນເລິກລັບ. ກາຍເປັນແຫລ່ງທັດສະນາຈອນທີ່ຂຶ້ນຊື່ລືນາມໄປທົ່ວພາຍໃນ ແລະ ຕ່າງປະເທດ. ປີ 1982 ຄະນະລັດຖະບານຂອງຈີນໄດ້ເອົາເມືອງນ້ຳຊຸຍເຊິນແລະຫໍເຝີງລ້າຍເກົ໊ຈັດໄວ້ເປັນຫົວໜ່ວຍອະນຸລັກວັດຖຸບູຮານວັດທະນະທຳຈຸດສຸມຂອງຊາດ.

ຫໍເຝີງລ້າຍເກົ໊ສ້າງຂຶ້ນໃນລະຫວ່າງລາຊະການເຈ່ຍອີ້ວຂອງລາຊະວົງສົ້ງເໜືອຫ່າງໄກຈາກປະຈຸບັນປະມາ 900 ກວ່າປີແລ້ວ. ຕໍ່ມາ, ຜ່ານການຂະຫຍາຍການກໍ່ສ້າງໃນລາຊະວົງມິງ ແລະ ສ້ອມແປງຄືນໃນລາດຊະວົງຊິງ, ຫໍເຝີງລ້າຍເກົ໊ຈຶ່ງກາຍມາເປັນຂະໜາດຄືປະຈຸບັນ, ຈຸດໜັກປະກອບດ້ວຍບັນລັງລີ້ຈູຕຽນ, ຫໍ



ເຝີງລ້າຍເກີ້,ບັນລັງຊ່ານຊີງຕ້ຽນ,ວັງທຽນໂຫວ,ວັງໂລງວາງແລະ ວັດມີທໍ່ສີ້ລວມເຂົ້າເປັນກຸ່ມສິ່ງປຸກສ້າງທີ່ເກົ່າແກ່ບູຮານ. ສິ່ງປຸກສ້າງດັ່ງກ່າວຕ່ຳສູງສະຫລັບກັນຢ່າງສວຍງາມ,ເປັນອົງປະກອບດຽວກັນກັບຫໍເຝີງລ້າຍເກີ້ຢ່າງເໝາະເຈາະ,ເອີ້ນລວມວ່າ: "ຫໍເຝີງລ້າຍເກີ້". ແຕ່ລະສິ່ງປຸກສ້າງດ່ຽວຂອງຫໍເຝີງລ້າຍເກີ້ກໍປະກອບດ້ວຍຫໍ, ໂຮງ,ວັງ,ບັນລັງ ແລະ ສາລາທີ່ມີຫລາຍຮູບຊົງປະກອບເຂົ້າເປັນ,ປານໝູ່ດາວລ້ອມເດືອນ,ຢູ່ໃນຫໍມີຮອຍນ້ຳເມີກຂຽນດ້ວຍປັນຍາຊົນ ແລະ ຮອຍແກະສະຫຼັກເປັນກາບກອນຢ່າງນັບບໍ່ຖ້ວນ.

ສາລາຫລີກລົມຢູ່ກ້ຳຕາເວັນຕົກຂອງຫໍເຝີງລ້າຍເກີ້,ເຊີງ ໜ້າກັບທະເລ,ປະຕູແລະປ່ອງຢ້ຽມໄຂອອກຈ່າງປ່າງ, ຕາມ ການຊ່າລືວ່າໄຕ້ທຽນຢູ່ໃນສາລາເຖິງຈະແມ່ນລົມທະເລພັດແຮງປານໃດໄຟໄຕ້ຢູ່ທຽນກໍບໍ່ເໜັງບໍ່ຕີງ. ຢູ່ກ້ຳຕາເວັນອອກຂອງຫໍແມ່ນສາລາປ້າຍຫີນນອນ ແລະ ສານເຈົ້າຊູ່ກົ່ງ. ຢູ່ເທິງປ້າຍຫີນໄດ້ແກະສະຫຼັກໜັງສືບັນຈົງດ້ວຍກາບກອນທີ່ມີຊື່ວ່າ: "ຮາຍສີ້" ແລະ ກາບກອນດ້ວຍຕົວອັກສອນຂຽນວັດທີ່ມີຊື່ວ່າ: "ທີອູຕ້າວຈີ້ຊູໂຫວ",ຕາມການພິສູດໃຫ້ຮູ້ວ່າເປັນຮອຍຂຽນຂອງຊູຕົ່ງປໍ. ສານເຈົ້າແມ່ນສ້າງຂຶ້ນເພື່ອລະລຶກຊູຕົ່ງປໍ່ມາດຳລົງຕຳແໜ່ງເປັນເຈົ້າເມືອງຕືນໂຈວ, ຢູ່ໃນສານເຈົ້າໄດ້ຮັກສາໄວ້ຮູບແກະສະຫຼັກ ແລະ ຫີນ ແກະສະຫຼັກກາບກອນຕາມຝາສານເຈົ້າ. ຢູ່ກ້ຳຕາເວັນອອກຂອງ




ສານເຈົ້າມີອາຄານປິ່ນຢີ້ໂລວ,ຕາມການຊ່າລືວ່າສະໄໝນັ້ນຊູຕົ່ງປໍ່ໄດ້ມາກິນເຫລົ້າຢູ່ແຫ່ງນີ້ເພື່ອຊົມຕາເວັນອອກ. ຂົວຊ່ຽນເຢີນທີ່ຢູ່ກ້ອງຫໍເຝີງລ້າຍເກີ້ນັ້ນມີໂຄງປະກອບຢ່າງສວຍງາມ ແລະ ປາໜີດ, ຮູບແບບກໍ່ສ້າງແປກປະຫລາດຕ່າງໝູ່, ມີການຊ່າລືວ່າ: ເປັນບ່ອນທີ່ "ເທບທັງ 8" ຂ້າມທະເລ.

ຢູ່ກ້ອງຫໍເຝີງລ້າຍເກີ້ມີເມືອງນ້ຳເຝີງລ້າຍແຫ່ງໜຶ່ງ. ເມືອງນ້ຳແມ່ນສ້າງຂຶ້ນທາງທິດໃຕ້ຂອງຜາຊັນຕ້ານຢາ,ເປັນຫນຶ່ງໃນຖານທີ່ໝັ້ນກອງທັບເຮືອສະໄໝບູຮານຂອງຈີນທີ່ຍັງຈົ່ງເຫລືອໄວ້ຮອດປະຈຸບັນ,ມີອີກຊື່ໜຶ່ງເອີ້ນວ່າ:ເປີ້ຍວົວເຊີງ(ເມືອງກຽມປ້ອງກັນໂຈນສະລັດ), ແຕ່ກ່ອນແມ່ນສະຖານທີ່ເກົ່າແກ່ຂອງ "ຕ່ຽວຢູຍຈ້າຍ" ເປັນດ່ານປ້ອງກັນທາງທະເລຂອງສະໄໝລາຊະວົງສົ້ງ. ໄດ້ສ້າງກຳແພງເມືອງລຽບຕາມພູເມື່ອລາຊະການຫົງອູປີທີ່ 9 ຂອງລາດຊະວົງມິງ (ພ.ສ 1376),ນຳເອົານ້ຳທະເລເຂົ້າມາສູ່ພາຍໃນເພື່ອເປັນບ່ອນຈອດກຳປັ່ນແລະເປັນບ່ອນຝຶກທະຫານເຮືອ. ເມືອງນ້ຳເຝີງລ້າຍມີວົງຮອບຄວາມຍາວປະມານ 1.8 ກິໂລແມັດ,ເນື້ອທີ່ 25 ກິໂລແມັດມົນທົນ, ຄອງປ້ອງກັນກຳແພງທັງໝົດມີແຕ່ປະຕູທິດໃຕ້ກັບທິດເໜືອ,ປະຕູທິດເໜືອເອີ້ນວ່າປະຕູນ້ຳ,ຢູ່ເທິງປະຕູສ້າງປະຕູນ້ຳເພື່ອຄວບຄຸມການເຂົ້າ-ອອກຂອງເຮືອ;ທິດໃຕ້ຂອງປະຕູເອີ້ນວ່າ:ເຈີ້ນຢາງເມີນຕິດກັບທາງບົກເພື່ອໃຫ້ລົດມ້າ ແລະ ຄົນທຽວເຂົ້າອອກ. ປະຕູທິດເໜືອໄດ້ກໍ່ສ້າງປ້ອມປືນໃໝ່ 2 ບ່ອນຕ່າງກໍຈັດໄວ້ຢູ່ກ້ຳຕາເວັນອອກ ແລະກ້ຳຕາເວັນຕົກ,ເພື່ອຄວບຄຸມໜ້ານ້ຳທະເລຢູ່ບໍລິເວນໃກ້ຄຽງ. ເມືອງນ້ຳເວລາເຂົ້າບຸກໂຈນຕີສາມາດບຸກໄດ້,ເວລາຖອຍສາມາດປ້ອງກັນໄດ້, ເປັນລະບົບປ້ອງກັນຕົວທາງທະເລທີ່ແໜ້ນໜາແຫ່ງໜຶ່ງ,ໄດ້ມີຖານະສຳຄັນໃນປະຫວັດສ້າງທ່າເຮືອຂອງຈີນ,ມີຄຸນຄ່າດ້ານວັດຖຸບູຮານວັດທະນະທຳປະຫວັດສາດສູງທີ່ສຸດ.










ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່: ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(856.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ.



主要有：
首都万象市
世界文化遗产——
琅勃拉邦
占芭色瓦普寺
查尔平原（石缸平原）
宽帕盆大瀑布
里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*

## 红色旅游圣地—威信

文 / 禹正玉 吴绍明

云南省威信县森林覆盖率达 50%，地势雄奇，山高谷深，溪泉横流，深林茂盛，青山绿水，空气清新，是人们度假、休闲观光的好地方。

# ເວີຍຊິນ--ສະຖານທີ່ທ່ອງທ່ຽວສີແດງ



ທີ່ປະຊຸມຈາຊີ
扎西会议会址　新华社 图

ເມືອງເວີຍຊິນແຂວງຢູນນານ,ປ່າໄມ້ປົກຫຸ້ມກວມເຖິງ 50%,ສະພາບພູມີສາດມະຫັດສະຈັນ,ພູສູງເຫວເລິກ,ແມ່ນ້ຳຂວ້ຽວ,ອາກາດຊຸ່ມຊື່ນ;ເຊິ່ງເປັນບ່ອນທີ່ເໝາະສົມໃນການພັກຜ່ອນຢ່ອນອາລົມ ແລະ ການທ່ອງທ່ຽວ.ຕົວເມືອງຈາຊີມີເນື້ອທີ່ 10 ກິໂລແມັດມົນທົນຊຶ່ງເປັນທີ່ຕັ້ງຂອງອຳນາດການປົກຄອງຂອງເມືອງ,ທຸລະກິດການຄ້າແມ່ນສີວິໄລ.ກ່ອນປີ 1935 ກໍມີປະຊາຊົນແຂວງຈຽງຊີ,ແຂວງຫູນານ ແລະ ແຂວງກວາງຕຸງທີ່ມາການຄ້າຢູ່ທີ່ນີ້.ໄດ້ສ້າງຕັ້ງສະມາຄົມຈຽງຊີ,ສະມາຄົມກວາງຕຸງ ແລະ ສະມາຄົມຫູນານ.ຢູ່ໃນກາງເມືອງກໍໄດ້ສ້າງສະໜາມຫຼວງຂຶ້ນສອງແຫ່ງສາມາດບັນຈຸຄົນໄດ້ສິບປາຍກວ່າພັນຄົນຂຶ້ນໄປ.ນໍ່ໆກັບສະໜາມຫຼວງກໍຍັງໄດ້ສ້າງສວນສາທາລະນະກອງທັບແດງ,ຫໍພິພິທະພັນທີ່ລະນຶກໄວ້ສຳລັບໃນການເດີນທັບທາງໄກ,ສະຖານທີ່ກອງປະຊຸມຈາຊີທີ່ສວຍສົດງົດງາມ ແລະ ສຸຂຸມ,ເພື່ອເປັນການສະໜອງໃຫ້ແກ່ນັກທ່ອງທ່ຽວແລະ ຊາວບ້ານທີ່ເຂົ້າມາຢ້ຽມຊົມພັກຜ່ອນໂດຍບໍ່ເສຍຄ່າ.ຢືນຢູ່ໜ້າປະຕູຂອງຫໍພິພິທະພັນສາມາດເຫັນໄດ້ທົ່ວທັດທົ່ວຕົວເມືອງຄືແຜ່ນພາບທຳມະຊາດທີ່ມີພູ ແລະ ນ້ຳແຜ່ນໜຶ່ງພາໃຫ້ເຮົາປະທັບໃຈ.

1935 " ກອງປະຊຸມຈາຊີຊຶ່ງໄດ້ຕັດສິນກອງທັບແດງສູນກາງທີ່ຈະເອົາເປັນເອົາຕາຍ.ກໍຄືໄດ້ເປີດຢູ່ເມືອງຈາຊີທີ່ຂຶ້ນກັບເມືອງເວີຍຊິນ,ມະຕິ " ກອງປະຊຸມຈູນອີ " ຖືກຮັບຮອງເອົາຢູ່ທີ່ນີ້.ໄດ້ກຳນົດຢ່າງຈະແຈ້ງຂອງບຸກຄົນຄະນະກົມການເມືອງ.ທ່ານຈາງເຫວີນທຽນແທນທ່ານປົວກູ້,ທ່ານປົວກູໄດ້ມອບເອກະສານຕ່າງໆສູນກາງ ແລະ ກາຈ້ຳ,ຖານະການນຳພາຂອງທ່ານເໝົາເຈີຕຸງຢູ່ໃນພັກ ແລະ ກອງທັບໄດ້ຮັບການປັບປຸງຕື່ມອີກ.ປະຫວັດສາດເຄີຍ

ເວົ້າວ່າ: "ໄກ່ອັນສາມແຂວງ,ທ່ານວັງມິງມອບສິດອຳນາດອອກ".

ໄດ້ຜ່ານໄປ 37 ປີຍັງໄດ້ຮັບການຮັກສາໄວ້ບູລະນະສະຖານທີ່ກອງປະຊຸມແລະພາຍໃນຫ້ອງປະຊຸມຍັງມີໂຕະ,ຕັ່ງນັ່ງ,ຕຽງແລະທີ່ນັ່ງຂອງບັນດາຜູ້ນຳສູນກາງຄື:ທ່ານເໝົາເຈີຕຸງ,ທ່ານຈູເຕີ,ທ່ານໂຈວເອີນລາຍ,ທ່ານລິວຊາວຊີ,ທ່ານຈາງເຫວີນທຽນ ແລະ ຜູ້ນຳອື່ນໆ,ຍັງໄດ້ຮັກສາໄວ້ຫ້ອງພັກເຊົາຂອງທ່ານຈູເຕີ ແລະ ພັນລະຍາ,ຫ້ອງການຫ້ອງອາຫານ ແລະ ທີ່ພັກຂອງທ່ານຈາງເຫວີນທຽນ,ທ່ານເໝົາເຈີຕຸງ,ທ່ານໂຈວເອີນລາຍໃນສະໄໝນັ້ນ.ຢູ່ຕາມຫ້ອງພິພິທະພັນກໍໄດ້ວາງສະແດງທຸງກອງທັບ,ປືນກົນ,ຫອກຫຼາວເຄື່ອງສື່ສານ,ຫີບໄມ້ທີ່ນຳເອົາມາໃສ່ເອກະສານ ແລະ ກະສູນປືນເອກະສານຂອງສູນກາງ ແລະ ໃບປະກາດ,ເຄື່ອງມືທີ່ທ່ານຈູເຕີໃຊ້ຜະລິດເກີບຫຍ້າພ້ອມດ້ວຍການ້ຳ,ຖ້ວຍ,ບ້ວງ,ກະຕ່າທີ່ໃຊ້ໃນສະໄໝນັ້ນເປັນວັດຖຸບູຮານປະຫວັດສາດ.ປີດຽວນັ້ນທ່າເຮືອທີ່ທະຫານແດງໃຊ້ຂ້າມຜ່ານແມ່ນ້ຳຈືຊວຍສອງເທື່ອກໍຕັ້ງຢູ່ໃນເຂດແດນຂອງເມືອງເວີຍຊີນ,ກໍມີດ່ານຜາທຳມະຊາດເຄີຍລືຊາທີ່ວ່າ: "ຜູ້ໜຶ່ງຕັ້ງດ່ານໝື່ນຄົນຜ່ານບໍ່ໄດ້"ຊຶ່ງແມ່ນທະຫານແດງກໍໄດ້ຜ່ານຜ່ານມາແລ້ວ."

ປີ 1935 ຢູ່ບ່ອນພັກຜ່ອນແຫ່ງໜຶ່ງຂອງພູເຂົາຈາຊີ,ທ່ານເໝົາເຈີຕຸງໄດ້ເກັບເອົາຫີນກ້ອນໜຶ່ງປະໄວ້ຢູ່ບ່ອນນັ້ນແລ້ວເວົ້າວ່າ:ຕໍ່ໄປບ່ອນນີ້ໃສ່ຊື່ວ່າ "ເຂດແດນໄກ່ອັນສາມແຂວງຕໍ່ກັນ",ຫຼັງຈາກການປະຕິວັດໄດ້ຮັບໄຊຊະນະ,ພັກ ແລະ ລັດກໍໄດ້ຕັ້ງເຄື່ອງໝາຍຢູ່ບ່ອນໄວ້ກ້ອນຫີນນັ້ນໃສ່ຊື່ວ່າ: "ໄກ່ອັນສາມແຂວງ".

ຄົນເວີຍຊີນທີ່ຢູ່ໃນພູເຂົາອູມົງນັ້ນ,ເປັນຄົນສັດຊື່ສຸດຈະລິດຕໍ່ຜູ້ຄົນມີຄວາມອົບອຸ່ນ,ຄະນະພັກ ແລະ ອຳນາດການປົກຄອງເມືອງເວີຍຊີນໄດ້ລົງທຶນໃຫ້ແກ່ສະຖານທີ່ທ່ອງທ່ຽວສີແດງເກືອບ 1 ຮ້ອຍລ້ານ ຢວນຍັງມີການສືບຕໍ່ກໍ່ສ້າງໄດ້ຂະຫຍາຍຫໍພິພິທະພັນກອງປະຊຸມຈາຊີປະມານ 30 ກ່ວາລ້ານຢວນ.ສະຖານທີ່ກອງປະຊຸມຈາຊີຖືກກະຊວງໂຄສະນາຂອງສູນກາງພັກຈົດເຂົ້າເປັນໜຶ່ງໃນ 100 ແຫ່ງທີ່ເປັນເຂດທິວທັດຍອດຢ້ຽມສີແດງ.



ໃນທີ່ປະຊຸມຈູນຢີຫ້ອຍໄວ້ຮູບຖ່າຍຂອງກົມການເມືອງ8ທ່ານທີ່ໄດ້ເຂົ້າຮ່ວມກອງປະຊຸມຈູນຢີ,ມີທ່ານເໝົາເຈີຕຸງ,ໂຈວເອີນໄລ,ຈາງເວີນທຽນ,ປັ໋ວກູ,ເຊີນຢູນ,ລິວຊາວຊີ,ຈູເຕີ,ວາງເຈຍຊຽງ.
遵义会议会议室里并排悬挂着当年参加会议的 8 位政治局委员的照片，他们是：毛泽东、周恩来、洛甫（张闻天）、博古（秦邦宪）、陈云、刘少奇、朱德、王稼祥　新华社 图



ຮູບຊົງລວມເມືອງເວີນຊີນ
威信县城全貌　新华社 图

### 惠山泥人 江南水乡的精妙艺术

惠山是中国江南的风景圣地，位于江苏省无锡市太湖之滨。在惠山，几乎处处都可以看到色彩艳丽、形态生动的泥人，这便是著名的惠山泥人。惠山泥人是一门土生土长的民间艺术，它的原料就取自于惠山山脚下，那里的泥土细腻、柔软、滋润，可塑性极佳，非常适合捏塑。惠山泥人自清代以来就驰名中外，它积淀着江南水乡特有的神韵，散发着独特的艺术魅力。

# ຮູບປັ້ນຄົນດ້ວຍດິນຂອງຮູ້ຍຊ່ານ ສິລະປະທີ່ປານີດປາຕິຫານ

ຮູ້ຍຊ່ານເປັນດິນແດນທີ່ມີທິວທັດສວຍງາມລືຊື່ຢູ່ພາກໃຕ້ແມ່ນ້ຳຢາງຊີກຽງຂອງຈີນ, ມີທີ່ຕັ້ງຢູ່ແຄມໜອງທ້າຍຮູນະຄອນອູ້ຊີ້ແຂວງຈ່ຽງຊູ. ຢູ່ຮູ້ຍຊ່ານ, ເກືອບເວົ້າໄດ້ວ່າທຸກຫົນທຸກແຫ່ງລ້ວນແຕ່ສາມາດເຫັນໄດ້ຮູບປັ້ນຄົນຈຳລອງທີ່ປັ້ນດ້ວຍດິນດາກທີ່ມີສີສັນສວຍງາມ, ອາດຊົງມີຊີວິດຊີວານີ້ກໍຄືຮູບປັ້ນຄົນຈຳລອງປັ້ນດ້ວຍດິນດາກຂອງຮູ້ຍຊ່ານທີ່ຂຶ້ນຊື່ລືນາມ, ວິຈິດຕະກຳພື້ນເມືອງອັນລືຊື່ດັ່ງວກ່າວມີປະຫວັດຄວາມເປັນມາ 600 ກວ່າປີແລ້ວ.



ທ້າວອາຟູຮູບປັ້ນຄົນຫ້ວຍຊານເມືອງອູສີ
惠山泥人大阿福（男） CFP 图

ຮູບປັ້ນຄົນຈຳລອງທີ່ປັ້ນດ້ວຍດິນດາກຮູ້ຍຊ່ານເປັນສິລະປະພື້ນເມືອງຊະນິດໜຶ່ງທີ່ກຳເນີດເກີດຂຶ້ນຢູ່ພື້ນແຜ່ນດິນຕອນນີ້, ວັດຖຸດິບໃຊ້ມາປັ້ນຮູບຈຳລອງດັ່ງກ່າວແມ່ນໄດ້ມາຈາກຕີນພູພູຮູ້ຍຊ່ານ, ຢູ່ທີ່ນີ້ດິນດາກລະອຽດອ່ອນ, ຊຸ່ມຊ່ຳ, ມີລັກສະນະສາມາດປັ້ນໄດ້ດີທີ່ສຸດ, ເໝາະສົມກັບໃຊ້ມາປັ້ນເປັນຮູບຈຳລອງທີ່ສຸດ. ຮູບຄົນຈຳລອງປັ້ນດ້ວຍດິນດາກຮູ້ຍຊ່ານແຕ່ສະໄໝລາຊະວົງຊິງພຸ້ນກໍຂຶ້ນຊື່ລືນາມຢູ່ພາຍໃນ ແລະ ຕ່າງປະເທດ, ມັນໄດ້ໃຊ້ທ່ວງທ່າອາດຊົງສະເພາະຕົວຂອງບ້ານນ້ຳພາກໃຕ້ແມ່ນ້ຳຢາງຊີກຽງຝັງເລິກເຂົ້າກັບວິຈິດຕະປະຕິມາກຳດັ່ງກ່າວ, ແຜ່ກະຈາຍມີສະເໜ່ຫາທາງສິລະປະ ແລະ ອັນໂດດເດັ່ນ, ຮູບປັ້ນຄົນຈຳລອງຮູ້ຍຊ່ານໄດ້ແບ່ງເປັນ "ຂອງຫຍາບ" ແລະ ຂອງ "ລະອຽດ" ຫລືເອີ້ນວ່າ "ຂອງຫລິ້ນ" ແລະ "ຮູບຈຳລອງຕົວລະຄອນດ້ວຍມືປັ້ນ".

ຂອງຫຍາບສ່ວນຫລາຍແມ່ນເຄື່ອງຫລິ້ນຂອງເດັກນ້ອຍ

ນັກທ່ອງທ່ຽວທີ່ມາຈາກອາເມລິກາທົດລອງປັ້ນໂຕສັດນ້ອຍແລະເຄື່ອງໃຊ້ປະຈຳວັນໃນໂຮງງານຮູບປັ້ນຫ້ວຍຊານ
来自英国的游客，在惠山泥人厂饶有兴趣地学捏小动物及日常物品　新华社 图



ເຊັ່ນ: ຮູບສັດ, ຮູບຕຸກກະຕາ, ເຄື່ອງຫລິ້ນຂອງເດັກນ້ອຍມີປະຫວັດຄວາມເປັນມາອັນຍາວນານໃນຜະລິດຕະພັນຮູບປັ້ນຄົນຈຳລອງຮູ້ຍຊ່ານ, ເຄື່ອງຫລິ້ນດັ່ງກ່າວອອກແບບເປັນຮູບປັ້ນທີ່ອ້ວນດີພີງາມໜ້າຕາສົດໃສສີສັນແຈ່ມແຈ້ງ, ເນື້ອໃນໂດຍເອົາສິລິມຸງຄຸນເບີກບານມ່ວນຊື່ນເປັນເນື້ອໃນຫລັກ. ຮູບປັ້ນຕຸກກະຕາ "ຕ໋າອາຟູ້" ທີ່ລືຊື່ກໍແມ່ນຕົວແທນຂອງຜະລິດຕະພັນທີ່ມີຈຸດພິເສດທີ່ສຸດຂອງຮູບຈຳລອງດິນປັ້ນຮູ້ຍຊ່ານ, ຮູບຕຸກກະຕາດັ່ງກ່າວໜ້າຮັກດ້ວຍການຍິ້ມຫົວອັນມີສະເໜ່ອ້ວນອຸກປຸກໃບໜ້າຄ້າຍໆຄືກັບພະກະຈາຍເປັນສັນຍາລັກສິລິມຸງຄຸນ ແລະ ເປັນແບບຄົນມີຈິດໃຈເມດຕາປານີ. ຢູ່ທ້ອງຖິ່ນດັ່ງກ່າວມີນິທານເທບນິຍາຍເລື່ອງກ່ຽວກັບ "ອາຟູ້" ຢ່າງຫລວງຫລາຍ. ຕາມການຊ່າລືແຕ່ກີ້ແຕ່ກ່ອນຢູ່ ແຖບຮູ້ຍຊ່ານມີສັດປ່າເຂົ້າອອກຢ່າງຫລວງຫລາຍ, ສັດປ່າດັ່ງກ່າວແມ່ນສະເພາະເຈາະຈົ່ງມາກັດກິນແຕ່ເດັກນ້ອຍຂອງຊາວບ້ານ. ພາຍຫລັງມາຢູ່ເມືອງຟ້າໄດ້ສົ່ງເທວະດາ 2 ອົງເອີ້ນຊື່ວ່າ: "ຊ່າຮາຍເອີ້" ລົງມາເມືອງຄົນ, ເທວະດາ 2 ອົງນີ້ມີເດຊານຸພາບແຂງ

ແຮງບໍ່ມີໃຜສູ້ໄດ້, ສັດປ່າທີ່ຮ້າຍກາດທັງປວງຊໍແຕ່ພໍເຫັນໜ້າຍິ້ມຫົວຂອງເພິ່ນກໍກົ້ມຫົວມາຫາໃຫ້ເພິ່ນລູບຄຳເປັນສັດທີ່ຟັງຄວາມ ແລະ ເປັນສັດໜ້າຮັກ, ອ່ອນນ້ອມຕໍ່ຄົນ. ແຕ່ນັ້ນມາຄົນທັງຫລາຍຈຶ່ງໄດ້ຢູ່ເຢັນເປັນສຸກ. ເພື່ອສະແດງຄວາມຂອບອົກຂອບໃຈຕໍ່ເທວະດາສອງອົງດັ່ງກ່າວ, ຄົນທັງຫລາຍຈຶ່ງເອົາດິນດາກຢູ່ຕີນພູຮູ້ຍຊ່ານມາປັ້ນເປັນຮູບຈຳລອງແບບຮູບຊ່າຮາຍເອີ້ທີ່ອົງອາດກ້າຫານໄວ້ບູຊາຢູ່ໃນເຮືອນ. ຍ້ອນວ່າເພິ່ນໄດ້ນຳເອົາຄວາມສຸກ(ພາສາຈີນເອີ້ນວ່າ: "ສິນຟູ້")ມາສູ່ມະນຸດ, ດັ່ງນັ້ນຈຶ່ງໄດ້ໃສ່ຊື່ວ່າ "ອາຟູ້". ຈາກນັ້ນມາ, "ຕ໋າອາຟູ້"(ອາຟູ້ໃຫຍ່)ກໍເລີຍກາຍເປັນວັດຖຸມຸງຄຸນປາບຜີສາງມານຮ້າຍ ແລະໄດ້ສືບຕໍ່ກັນເປັນຫລາຍເຊັ່ນຄົນຕໍ່ໆກັນມາ.

ອັນທີ່ວ່າ: "ຂອງລະອຽດ" ຊຶ່ງເອົາ "ຮູບຈຳລອງຕົວລະຄອນດ້ວຍມືປັ້ນ" ເປັນຕົວແທນນັ້ນແມ່ນຜົນງານທາງດ້ານສິລະປະຮູບປັ້ນຈຳລອງດ້ວຍດິນດາກຮູ້ຍຊ່ານທີ່ເຮັດໃຫ້ຄົນສັນລະເສີນຢ່າງສຸດຊຶ້ງ, ເພາະວ່າ "ຮູບຈຳລອງຕົວລະຄອນດ້ວຍມືປັ້ນ" ມັນເປັນຜະລິດຕະພັນວິຈິດຕະກຳຂອງການປັ້ນຮູບຈຳລອງຕົວລະຄອນໃນເລື່ອງຂອງງິ້ວໂດຍສະເພາະ, ເລີ່ມຕົ້ນແມ່ນເອົາບຸກຄົນໃນລະຄອນມາເປັນຫົວຂໍ້ຂອງການປັ້ນຮູບຈຳລອງ, ມັກເອົາລະຄອນເລື່ອງໃດເລື່ອງໜຶ່ງທີ່ເປັນຕົວລະຄອນ 2-3 ຄົນນັ້ນຈັດເປັນຈຸແລ້ວປັ້ນເປັນຮູບຈຳລອງສະແດງອາການ ຫລື ອາດອົງຕົ້ນຕໍທີ່ສະແດງໃນເລື່ອງລະຄອນ. ຕໍ່ມາ "ຮູບຈຳລອງຕົວລະຄອນດ້ວຍມືປັ້ນ" ໄດ້ບຸກທະລຸຄວາມຈຳກັດຢູ່ແຕ່ເວທີຂອງເລື່ອງລະຄອນເທົ່ານັ້ນ, ໄດ້ເພີ່ມບຸກຄົນໃນເລື່ອງເທບນິຍາຍ, ບຸກຄົນໃນການຊ່າລື, ບຸກຄົນທີ່ມີຊື່ສຽງໃນປະຫວັດສາດ, ບຸກຄົນທີ່ມີຊື່ສຽງໃນວົງການສາສະໜາ ແລະ ຮູບສະແດງຮີດຄອງປະເພນີ ແລະ ອື່ນໆ.

ຮູບຈຳລອງຄົນປັ້ນດ້ວຍດິນດາກຮູ້ຍຊ່ານບໍ່ວ່າຈະແມ່ນ "ຂອງຫຍາບ" ຫລື "ຂອງລະອຽດ, ລ້ວນແຕ່ເປັນຜະລິດຕະພັນສິລະປະຫັດຖະກຳທີ່ປະດິດຂຶ້ນດ້ວຍດິນດາກ ແລະ ປະສົມສີອັນສົດໃສ. ຂັ້ນຕອນຂອງການຜະລິດຈຸດໜັກປະກອບດ້ວຍການເຮັດດິນ, ປັ້ນດິນ

ໃຫ້ອ່ອນນຸ່ມ,ທຸບໃຫ້ແຫລກ, ປັ້ນເປັນແບບເບົ້າ,ເອົາເຂົ້າແບບ, ພິມແບບ,ຕົບແຕ່ງ,ໃສ່ສີພື້ນ,ທາສີ ແລະ ທານ້ຳມັນ 10 ກວ່າກຳມະວິທີ.ຂອງຫລິ້ນປັ້ນດ້ວຍດິນດາກສ່ວນຫລາຍແມ່ນເຮັດດ້ວຍການເຂົ້າແບບ,ຄືເອົາຮູບທີ່ຈະປັ້ນນັ້ນເຮັດເປັນແບບກ່ອນແລ້ວຈຶ່ງເອົາດິນດາກຍັດເຂົ້າແບບຫລັງຈາກເອົາອອກຈາກແບບແລ້ວຈຶ່ງໃຊ້ພູ່ກັນຈຸບນ້ຳມາທາໃຫ້ລະອຽດຫລືໃຊ້ຜ້າປຽກມາເຊັດໃຫ້ເງົາງາມ ແລະ ຮຽບຮ້ອຍ,ເມື່ອເອົາຮູບປັ້ນຕາກແຫ້ງແລ້ວມີບາງຄົນທັງເອົາເຂົ້າເຕົາເຜົາເພື່ອເພີ່ມລະດັບຄວາມເງົາຂອງມັນ",ແລ້ວຈຶ່ງໃສ່ສີແຕ້ມຮູບໃສ່.ເວົ້າສຳລັບ"ຮູບຈຳລອງຕົວລະຄອນດ້ວຍດິນປັ້ນ"ນັ້ນແມ່ນປັ້ນແບບບໍ່ເບົ້າໂດຍແມ່ນນັກສິລະປະປັ້ນຂຶ້ນໂດຍກົງຕາມຈິນຕະນາການ,ການປັ້ນຮູບຈຳລອງດັ່ງກ່າວຕ້ອງການມີຄວາມຮູ້ຄວາມສາມາດໃນການປັ້ນຮູບສູງສົມຄວນ.

ການແຕ້ມສີໃສ່ຮູບຈຳລອງທີ່ປັ້ນດ້ວຍດິນດາກຮູ້ຍຊ່ານການແຕ້ມດ້ວຍສີໄມ້ລາຍມືອັນງົດງາມຂອງຜະລິດຕະພັນຮູບປັ້ນຄົນ



ຮູບປັ້ນຄົນດ້ວຍດິນຫ້ວຍຊານ
惠山泥人　CFP 图



《ກາຍຍະສິນ》 ບົດປະພັນຮູບປັ້ນຄົນດ້ວຍດິນ
惠山泥人作品《杂技》 新华社 图

ຈຳລອງຮູ້ຍຊ່ານນັ້ນ,ໄດ້ມີຄຳເວົ້າສະຫລຸບຫຍໍ້ໆ ວ່າ:"ປັ້ນ 3 ສ່ວນ ສີ 7 ສ່ວນ"ສີທີ່ມັກນຳມາໃຊ້ນັ້ນມີສີຟ້າ,ສີຂຽວ,ສີສົ້ມ,ສີແດງ,ສີເຫລືອງງາຊ້າງເປັນຕົ້ນທັງມີສີຄຳປົນໃສ່ບາງເລັກນ້ອຍພາຍຫລັງແຕ້ມສີໃສ່ສຳເລັດ,ແລ້ວຍັງໄດ້ເອົາສີດຳເຫມິກມາວາດໃສ່ບ່ອນແຕ້ມລະອຽດເພື່ອໃຫ້ມັນໂດດເດັ່ນຂຶ້ນກວ່າເກົ່າ.ການລົງມືປັ້ນ ແລະ ໃສ່ສີແຕ້ມສີຢ່າງລະອຽດເປັນປັດໄຈກ່ອນອື່ນຫມົດຂອງການສຳເລັດການຜະລິດຮູບປັ້ນຄົນຈຳລອງຮູ້ຍຊ່ານເຊັ່ນ:ການແຕ້ມຄິ້ວຂອງບຸກຄົນໃນຮູບປັ້ນຈຳລອງດັ່ງກ່າວກໍມີວິທີແຕ້ມຄິ້ວຮູບຄົນຈຳລອງດ້ວຍ 8 ວິທີທີ່ຕ່າງກັນ,ແບ່ງອອກເປັນຄິ້ວໃບຫາງຮອກ,ຄິ້ວໂຕນ້ອນນອນ,ຂົນຄິ້ວຊີ້ຟ້າເປັນຕົ້ນ.

ຮູບຄົນຈຳລອງປັ້ນດ້ວຍດິນດາກຮູ້ຍຊ່ານແມ່ນເປັນຮູບປັ້ນທີ່ມີຊີວິດ,ຊີວິດຂອງມັນຢູ່ບ່ອນວ່າມັນໄດ້ລວມສູນສະແດງອອກຈິດໃຈແລະໂສມຫນ້າສິລະປະພື້ນເມືອງພາກໃຕ້ແມ່ນ້ຳຢາງຊີກຽງ,ມັນເປັນຕົວພາຫະວັດທະນະທຳປະເພນີພື້ນເມືອງອັນຮຸ່ງເຮືອງເຫລືອງເຫລື້ອມຫລາຍຮ້ອຍປີທີ່ຜ່ານມາ.

# Can't we blend art and commerce?

- With your participation, PHOTOMEKONG will a most successful 'bridge' ! Please just press your shutter for the most wonderful moment and join us, to blend art and commerce!
- We are expecting your agreement to work with us as a photographer at PHOTOMEKONG!
- PHOTOMEKONG includes numerous photos representing the natural and humanistic attractions, ethnic cultures, socio-economic development and local resources of China's Yunan province, Myanmar, Thailand, Laos, Cambodia and Vietnam along the Mekong River. With its professional services, exhibition of photos by photographers from Yunnan of China and Southeast Asian countries, and a transaction platform, PHOTOMEKONG also provides state-of-the-art photo resources for the clients engaged in newspapers, periodicals, magazines, pictorials and other media.



PHOTOMEKONG
湄 公 河 图 片 库

http://www.photomekong.com Fax: +86 871 3103179 E-mail: service@photomekong.com
Address: Room 1512, Hongcheng Plaza, Youth Road, Kunming City 650021 Yunnan Province, China



ນາງສາວນ້ອຍເຜົ່າຊຸຍພວມຮໍ່າຮຽນທັກສະຕັກແສ່ວຂົນຫາງມ້າ
水族小女孩正在互相学习马尾绣技艺　CFP 图

## 中国少数民族——水族

水族，是中国少数民族之一，主要聚居在贵州省黔南布依族苗族自治州的三都水族自治县和荔波、都匀、独山以及黔东南苗族侗族自治州的凯里、黎平、榕江、从江等县，少数散居于广西壮族自治区的西部。

# ເຜົ່າຊຸຍ-ຊົນເຜົ່າສ່ວນ

ເຜົ່າຊຸຍແມ່ນໜຶ່ງໃນຊົນເຜົ່າສ່ວນໜ້ອຍຂອງຈີນ, ຈຸດໜັກແມ່ນເຕົ້າໂຮມກັນຢູ່ເມືອງປົກຄອງຕົນເອງເຜົ່າຊຸຍຊ່ານຕູ່ ແລະ ເມືອງລີປໍ່, ຕູຢຸນ, ຕູ້ຊ່ານຂອງກິ່ງແຂວງປົກຄອງຕົນເອງຊົນຕົງນ້ານເຜົ່າປູ້ອີ, ເຜົ່າມົ້ງ ແລະ ເມືອງຄາຍລີ, ລີ້ພິນ, ຢົງຈ່ຽງ, ສົ່ງຈ່ຽງຂອງກິ່ງແຂວງປົກຄອງຕົນເອງຊົນຕົງນ້ານເຜົ່າມົ້ງ, ເຜົ່າຕົ້ງເປັນຕົ້ນ, ມີສ່ວນໜ້ອຍກະຈາຍຢູ່ຕາມພາກຕາເວັນຕົກຂອງເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ. ທີ່ຢູ່ຂອງເຜົ່າຊຸຍມີທີ່ຕັ້ງຢູ່ທິດໃຕ້ຂອງສາຍພູມ້ຽວລິນຂອງພາກຕາເວັນອອກສ່ຽງໃຕ້ພູພຽງຢຸນກູ້ຍ, ລ້ອງເທິງຂອງແມ່ນ້ຳຕູລີວຈ່ຽງ ແລະ ໂລງ ຈ່ຽງ. ມີປ່າໄມ້ຢ່າງຕຶບໜາພູແລະນ້ຳສວຍງາມປານຮູບແຕ້ມ, ເໝາະສົມກັບການພັດທະນາກິດຈະກຳກະສິກຳ-ປ່າໄມ້, ເປັນອູ່ເຂົ້າອູ່ປາ ແລະ ທ້ອງຖິ່ນທີ່ມີດອກໄມ້ກັບໝາກໄມ້ຢ່າງຫລວງຫລາຍຂອງພູພຽງກູ້ຍໂຈວ.

ພາສາຂອງເຜົ່າຊຸຍຖືກຈັດໄວ້ຢູ່ໃນຕະກຸນພາສາຈີນ-ທິເບດ ສາຂາພາສາເຜົ່າຈ້ວງ, ເຜົ່າຕົ້ງ ແລະ ເປັນສາຂາຍ່ອຍຂອງພາສາເຜົ່າຊຸຍ. ບຸບພະຊົນຂອງຊົນເຜົ່າຊຸຍເຄີຍປະດິດຄິດສ້າງຕົວອັກສອນຂອງຕົນເອງ, ເອີ້ນວ່າ: "ຕົວໜັງສືຊຸຍ" ຮູບຊົງຂອງມັນຄ້າຍໆຄືກັນກັບຕົວໜັງສືກະດອງ ແລະ ຕົວໜັງສືຈີ່ນ. ຊົນເຜົ່າຊຸຍມີວິທີປະມວນປະຕິທິນຂອງຕົນເອງ, ປະຕິທິນຂອງຊົນເຜົ່າຊຸຍກັບປະຕິທິນຈັນທະລະຄະຕິຂອງຊົນເຜົ່າຮ້ານທາງດ້ານພື້ນຖານແລ້ວຄືກັນ, ແຕ່ຖືເອົາເດືອນ 8 ຂອງປະຕິທິນຊົນເຜົ່າຮ້ານເປັນທ້າຍປີ, ເດືອນ 9 ຂອງປະຕິທິເຜົ່າຮ້ານເປັນຕົ້ນປີໃໝ່ຂອງຊົນເຜົ່າຊຸຍ, ບຸນປີໃໝ່ຂອງຊົນເຜົ່າຊຸຍເອີ້ນວ່າ: "ເຈ້ຍຕວນ", ບຸນປີໃໝ່ດັ່ງກ່າວຄຶກຄື້ນເປັນພິເສດ. ສຽງຄ້ອງສຽງກອງສຽງເປົ່າປີ່ສີຊໍ່ ແລະ ສຽງແຄນຟົດສະນັ່ນຫວັ່ນໄຫວ, ຍັງມີການເຄື່ອນໄຫວແຂ່ງມ້າ, ການບັນເທີງຮ້ອງເພງ ແລະ ເຕັ້ນລຳ.

ນັບແຕ່ຊຸມປີ 1940 ຂອງສະຕະວັດທີ 20 ເປັນຕົ້ນມາເຄື່ອງ



ແມ່ຍິງເຜົ່າຊຸຍຈັບເອົາຫຍ້າຄາບູຊາໄຮ່ນາທີ່ແຄມນາພາວະນາປີໜ້າເກັບກ່ຽວອຸດົມສົມບູນ
水族妇女在田坎边手拿茅草祭稻田期望来年丰收　CFP 图

ນຸ່ງຜູ້ຊາຍຊົນເຜົ່າຊຸຍບໍ່ໄດ້ແຕກຕ່າງກັບເຄື່ອງນຸ່ງເພດຊາຍຂອງຊົນເຜົ່າຫານທີ່ຢູ່ອ້ອມຂ້າງຫລາຍປານໃດມີແຕ່ເສື້ອຜ້າອາພອນເພດຍິງຈີນເທົ່າປະຈຸບັນຍັງຮັກສາໄວ້ລັກສະນະພິເສດຂອງຊົນເຜົ່າຢ່າງຈະແຈ້ງ. "ຜ້າຊົນເຜົ່າຊຸຍ" (ຫລື ເອີ້ນວ່າ: ຜ້າຈິວຊ້ຽນຊົນປູ້) ທີ່ແມ່ນແມ່ຍິງເຜົ່າຊຸຍຕໍ່າອອກມານັ້ນເສັ້ນດ້າຍສະໝໍ່າສະເໝີກັນເນື້ອຜ້າລະອຽດ, ຍ້ອມດ້ວຍສີຂຽວ, ສີຟ້າ ແລະ ສີສີ້ວຜ້າທີ່ຕໍ່າອອກມາຈັບສີໄດ້ດີທົນກັບການຊັກຟອກ. ແຕ່100 ກວ່າປີກ່ອນພຸ້ນກໍຂຶ້ນຊື່ລືນາມແລ້ວ. ເຕັກນິກສິລະປະຊິບຍ້ອມ ແລະ ການແຕ້ມຮູບໂດຍນໍ້າເຕົາຫູ້ຊຶ່ງເປັນຫົວຄິດປະດິດສ້າງສະເພາະຕົວຂອງຊົນເຜົ່າຊຸຍນັ້ນ, ມີປະຫວັດຄວາມເປັນມາສືບທອດກັນມາໄດ້ 700 ກວ່າປີແລ້ວ, ຜະລິດຕະພັນການຍ້ອມ ແລະ ພິມເຄື່ອງປັ່ນທໍຂອງເຂົາເຈົ້າຍິ່ງໄດ້ຮັບຄວາມນິຍົມຊົມຊອບຢ່າງເລີກເຊິ່ງຈາກມວນຊົນ.

ເຄື່ອງນຸ່ງແມ່ຍິງຂອງຊົນເຜົ່າຊຸຍສ່ວນຫລາຍແມ່ນເອົາຜ້າຊົນເຜົ່າຊຸຍມາຕັດຫຍິບ, ເປັນເສື້ອກູຍເຣັ່ງຍາວສາມສ່ວນບໍ່ມີຄໍຫລືເສື້ອກູຍເຣັ່ງຍາວເປັນສ່ວນໃຫຍ່. ເສື້ອຍາວຂອງເຂົາເຈົ້າສ່ວນຫລາຍຍາວກາຍຫົວເຂົ່າ, ທົ່ວໄປແລ້ວບໍ່ແສ່ວດອກໄມ້ໃສ່ແຄມເສື້ອຜ້າ. ໂດຍທົ່ວໄປການນຸ່ງຖືຍາມບຸນ ແລະ ຍາມແຕ່ງງານກັບການນຸ່ງຖືມື້ທໍາມະດາແມ່ນບໍ່ຄືກັນ. ເຄື່ອງນຸ່ງໃຊ້ສໍາລັບພິທີແຕ່ງດອງຂອງເຈົ້າບ່າວຢູ່ວົງມົນເທິງບ່າໄຫລ່ ແລະ ປາກແຂນ, ບ່ອນຫົວເຂົ່າຂອງໂສ້ງລ້ວນແຕ່ໄດ້ແສ່ວເປັນສາຍດອກໄມ້, ຜ້າຫົ່ມ ຫົວກໍມີຮູບແຕ້ມເປັນຫຼາຍຮູບຫລາຍສີຢ່າງສວຍງາມ. ເທິງຫົວແມ່ນໃສ່ເຄື່ອງເອ້ເຮັດດ້ວຍເງິນຄ້າຍຄືມົງກຸດ, ຄໍໃສ່ປອກຄໍເງິນ, ແຂນຖືປອກແຂນເງິນ, ຢູ່ໜ້າເອິກໃສ່ສາຍສ້ອຍສາຍຄໍເງິນ ແລະ ຖືຕ່ອມຫູເງິນ, ຖືເກີບແສ່ວດ້ວຍດອກໄມ້. ສໍາລັບເຈົ້າສາວແລ້ວ ແຕ່ງຕົວຢ່າງສວຍງາມທີ່ສຸດ.



# ໜ້ອຍຂອງຈີນ

### 新兴的健身运动——越野行走

在晨曦初照的公园里，在城郊山区的小径上，在名山古刹间，我们会发现手持两支类似滑雪杖的手杖，正在健步行走或奋力攀登的人群。在锻炼身心体魄的同时，又同时享受着大自然赋予我们的阳光、空气和美景。这，就是越野行走。

# ການຍ່າງທາງໄກ-ກິລາ ເພື່ອສຸຂະພາບຈະເລີນໃໝ່

ຢູ່ສວນສາທາລະນະທີ່ແສງອາລຸນຫາກໍສ່ອງແສງລົງມາໃສ່, ຢູ່ທາງນ້ອຍຊານເມືອງ ຫລື ເຂດພູດອຍ, ຢູ່ລະຫວ່າງພູເຂົາທີ່ມີຊື່ສຽງຫລືບໍລິເວນຂອງວັດວາອາຮາມ, ພວກເຮົາຈະພົບເຫັນຜູ້ທີ່ມີຈັບ 2 ໄມ້ຄ້ອນເທົ້າຄ້າຍໆຄືກັນກັບໄມ້ຢັນສະກີທີ່ມະພວມຍ່າງໄປດ້ວຍບາດກ້າວອັນເຂັ້ມແຂງ ຫລື ເກາະປີນຢ່າງມີກຳລັງອັນແຂງແຮງ. ໃນຂະນະຝຶກຫັດຮ່າງກາຍ ແລະ ໃຈນັ້ນ, ຍັງສາມາດໄດ້ຮັບແສງແດດ, ອາກາດ ແລະ ທິວທັດອັນສວຍງາມຂອງມະຫາທຳມະຊາດໃຫ້ແກ່ພວກເຮົາ. ນີ້ກໍຄືການຍ່າງທາງໄກ.



CFP 图

ການຍ່າງທາງໄກ (Nordic Walking) ຕົ້ນກຳເນີດຂອງມັນແມ່ນກິລາສະກີທີ່ມະຫາງໄກ. ນັກກິລາສະກີທີ່ມະເວລາຝຶກແອບໃນລະດູຮ້ອນ, 2ມືຖືໄມ້ຢັນສະກີທີ່ມະນັ້ນເປັນໄມ້ຄ້ອນເທົ້າມາຍ່າງນຳເປັນວິທີຂອງການຝຶກຫັດ. ຕໍ່ມາໄດ້ທຳການດັດແປງມືຈັບ ແລະ ເຄື່ອງຫຸ້ມຫົວມືຈັບໄມ້ຢັນສະກີ, ເຮັດໃຫ້ມັນຍິ່ງເໝາະສົມກັບການຍ່າງດ້ວຍຄວາມໄວ ແລະ ເໝາະສົມກັບການປີນພູເຂົາ, ເລີຍຄ່ອຍໆກາຍເປັນວິທີຝຶກຫັດສຸຂະພາບແບບມະຫາຊົນນິຍົມຊົມຊອບທີ່ດີຊະນິດໜຶ່ງ. ປະຈຸບັນ, ຈຸດໜັກແມ່ນປະເທດເອີຣົບເໜືອປະມານເກືອບ 20 ປະເທດໄດ້ດຳເນີນການຍ່າງດ້ວຍທາງໄກ, ບົນພື້ນຖານດັ່ງກ່າວໄດ້ຈັດຕັ້ງສະຫະພັນເດີນໄກສາກົນຂຶ້ນ.

ຈຸດພິເສດຂອງການຍ່າງທາງໄກກໍຄືໃຊ້ໄມ້ຄ້ອນເທົ້າເດີນທາງໄກ 2 ອັນພ້ອມກັນ. ຍ່າງໃນພື້ນທາງຮາບພຽງ, ສາມາດເຮັດໃຫ້ບາດກ້າວຂອງການຍ່າງນັ້ນກວ້າງອອກ, ຄວາມໄວເພີ່ມຂຶ້ນ, ແຂນ ແລະ ແຄ່ງຂາໄດ້ຮັບການຝຶກແອບພ້ອມກັນ. ເວລາໄຕ່ພູເຂົາໃຊ້ໄມ້ຄ້ອນເທົ້າຍ່າງທາງໄກມາປີນພູເຂົາ, ສາມາດຫລຸດຜ່ອນຄວາມກົດດັນຕໍ່ແຄ່ງຂາ, ປະຫຍັດກຳລັງກາຍ, ເພີ່ມຄວາມໄວຂອງການໄຕ່ພູເຂົາ. ສຳຄັນກວ່າໝູ່ຄືມັນສາມາດປົກປ້ອງຂໍ່ກະດູກຫົວເຂົ່າ, ຫລຸດຜ່ອນການຮຸກຖູຂອງຂໍ່ກະດູກຫົວເຂົ່າ, ກິດຈະກຳນີ້ໄດ້ເຮັດໃຫ້ຄົນນັບມື້ນັບຫລາຍເຂົ້າຮ່ວມກິລາປີນພູເຂົາ.

ການຍ່າງທາງໄກສາມາດເພີ່ມກຳລັງທາບແບກຂອງກິລາ, ຍົກສູງສະມັດຖະພາບຂອງຫົວໃຈ ແລະ ປອດຂອງຜູ້ຝຶກຫັດ. ຖ້າສົມທຽບກັບການຍ່າງແບບທຳມະດາ, ຈັງຫວະການເຕັ້ນຂອງຫົວໃຈຢ່າງຕ່ຳເພີ່ມ 13% , ອີງຕາມລະດັບໄວ ແລະ ຊ້າຂອງການຍ່າງ, ສາມາດເພີ່ມການສິ້ນເປືອງກາໂລຣີ 20-46%. ສາມາດເຮັດໃຫ້ພາກສ່ວນຄໍ, ພາກສ່ວນບ່າໄຫລ່ໄດ້ຜ່ອນຄາຍລົງເພີ່ມກຳລັງໃຫ້ແກ່ກ້າມຊີ້ນຂອງແຂນ, ໜ້າເອິກ ແລະ ຫລັງ, ເຜົາໄໝ້ໄຂມັນສ່ວນເກີນຂອງແອວ, ໜັງທ້ອງ ແລະ ພາກສ່ວນກະໂພກໄດ້ຢ່າງມີປະສິດທິຜົນ, ໄດ້ປ້ອງກັນ ແລະ ປິ່ນປົວບ່າໄຫລ່ອັກເສບຢ່າງມີປະສິດທິຜົນ.










ບໍລິການນຳທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກົ໋ງ ລົດຈີບຖ0. ລົດຕູ້12,15ບ່ອນນັ່ງ ລົດບັດ25,35,45 ບ່ອນນັ່ງ

ບໍລິການແລ່ນວີຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄຳຫລ້າຈຳກັດ

042/3 ຖະໜົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

**Inbound Tour**

We provide:

- Tour in Vientiane
- Tour in VangViene
- Tour in Luangprabang
- Tour in Pakze
- Tour in Northern Laos
- Tour in Southern Laos

**Outbound Tour**

We provide:

- Tour to China
- Tour to Malaysia
- Tour to VietNam
- Tour to Cambodia
- Tour to Thailand
- Tour to asia

# ຊົມໃບສີແດງຢູ່ໃນສວນພຶກສາຊາດ

zhí wù yuán li shǎng fēng yè
**植物园里赏枫叶**

yī qíng jǐng duì huà
## 一、情景对话

文/陆 蕊

ສະຖານະພາບຂອງການສົນທະນາ:

nǐ qù guò kūn míng zhí wù yuán ma
A：你去过昆明植物园吗？
ທ່ານເຄີຍໄປທ່ອງສວນພຶກສາຊາດທີ່ຄຸນໝິງນັ້ນຫຼືບໍ່?

xià tiān qù guò kě měi le chù chù shì lǜ sè qiū tiān qù zhí wù yuán yǒu shén me hǎ wán de
B：夏天去过，可美了，处处是绿色。秋天去植物园有什么好玩的？
ເຄີຍໄປຢູ່ໃນລະດູຮ້ອນ,ງາມຫຼາຍ,ທຸກໆບ່ອນກໍເປັນສີຂຽວ. ໄປທ່ຽວສວນພຶກສາຊາດຢູ່ໃນລະດູໃບໄມ້ຫຼົ່ນມີອັນໃດໜ້າໄປຫຼິ້ນ ແດ່?

nǐ xiǎng kàn kan qiū tiān de fēng yè ma
A：你想看看秋天的枫叶吗?
ທ່ານຢາກຊົມເບິ່ງໃບສີແດງທີ່ລະດູໃບໄມ້ຫຼົ່ນບໍ່?

yào dà lǎo yuǎn pǎo dào běi jīng xiāng shān qù ya
B：要大老远跑到北京香山去呀!
ຕ້ອງການໄປໄກຊົມເບິ່ງຢູ່ໃນພູຊຽງຊານປັກກິ່ງບໍ່?

bú yòng kūn míng zhí wù yuán jiù kě yǐ ràng nǐ bǎo yǎn fú lā
A：不用，昆明植物园就可以让你饱眼福啦!
ບໍ່ຕ້ອງ,ສວນພຶກສາຊາດທີ່ຄຸນໝິງກໍໄດ້ໃຫ້ທ່ານຊົມເບິ່ງພໍ ແລ້ວ.

shì ma kuài gēn wǒ shuō shuō
B：是吗？快跟我说说。
ແມ່ນບໍ່?ເຊີນຣີບບອກໃຫ້ຂ້ອຍແດ່.

dào běi zhàn chéng zuò lù gōng jiāo
A：到北站乘坐9路公交



chē dào kūn míng zhí wù yuán zhàn xià
车到 昆 明 植 物 园 站 下

chē jiù néng guān shǎng hóng tóng tóng
车，就 能 观 赏 红 彤 彤

de fēng yè le
的 枫 叶 了。

ອີ່ລົດເມສາຍ 9 ຢູ່ໃນສະຖານີເຫນືອແລ້ວລົງລົດຢູ່ຄືວລົດສວນພືກ
ສາຊາດທີ່ຄຸນຫມິງກໍໄດ້ຊົມເບິ່ງໃບສີແດງແລ້ວ.

xiǎng bu dào qiū tiān de kūn míng yě
B：想 不 到 秋 天 的 昆 明 也

zhè me měi
这 么 美！

ບໍ່ຮູ້ເມືອງຄຸນຫມີງລະດູໃບໄມ້ຫຼົ່ນງາມຄືແນວນີ້ແດ່?

dāng rán lā kūn míng shì yí gè kě ài de
A：当 然 啦！昆 明 是 一 个 可 爱 的

chéng shì
城 市。

ແນ່ນອນ!ຄຸນຫມີງກໍແມ່ນຕົວເມືອງຫນຶ່ງທີ່ຫນ້າຮັກ.

zhōu mò zán men jiù qù wǒ yào shí jǐ
B：周 末 咱 们 就 去，我 要 拾 几

piàn kūn míng de fēng yè zuò chéng
片 昆 明 的 枫 叶 做 成

biāo běn jì gěi yuǎn fāng de péng yǒu
标 本 寄 给 远 方 的 朋 友。

ວັນອາທິດພວກເຮົາກໍໄປ,ຂ້ອຍຈະເກັບໃບສີແດງ ເຮັດເປັນ
ຮູບແບບຢ່າງແລ້ວຝາກໃຫ້ເພື່ອນທາງໄກ.

bié wàng le dài shàng zhào xiàng jī yō
A：别 忘 了 带 上 照 相 机 哟！

ຢ່າລືມເອົາກອງຖ່າຍຮູບໄປນຳ.

wàng bù liǎo zhōu mò jiàn
B：忘 不 了！ 周 末 见。

ລືມບໍ່ໄດ້,ພົບກັນໃຫມ່ວັນອາທິດ.

## èr jiāo nǐ dú gǔ shī
## 二：教 你 读 古 诗

编/陆 蕊 绘图/刘金昆

ສອນໃຫ້ທ່ານອ່ານກາບກອນບູຮານ

### fú róng lóu sòng xīn jiàn
### **芙 蓉 楼 送 辛 渐**

hán yǔ lián jiāng yè rù wú
寒 雨 连 江 夜 入 吴，

pín míng sòng kè chǔ shān gū
平 明 送 客 楚 山 孤。

luò yáng qīn yǒu rú xiāng wèn
洛 阳 亲 友 如 相 问，

yí piàn bīng xīn zài yù hú
一 片 冰 心 在 玉 壶。

dà yì
大 意：

lěng yǔ sǎ mǎn jiāng tiān de yè wǎn
冷 雨 洒 满 江 天 的 夜 晚

lái dào rùn zhōu tiān míng sòng zǒu hǎo
来 到 润 州， 天 明 送 走 好

yǒu zhī liú xià chǔ shān gū yǐng luò
友 只 留 下 楚 山 孤 影；洛

yáng de qīn péng hǎo yǒu ruò wèn qǐ wǒ
阳 的 亲 朋 好 友 若 问 起 我

de jìn kuàng jiù shuō wǒ rú yù hú zhōng
的 近 况 ， 就 说 我 如 玉 壶 中

de bīng yí yàng jīng yíng
的 冰 一 样 晶 莹 。



ຄວາມຫມາຍະ

ຍາມກາງຄືນທີ່ຟ້າຝົນຢາດຢາຍເນລະນາດຈຽງຖຽນມາເຖິງ ຢືນໂຈວ,ເມື່ອຟ້າແຈ້ງສົ່ງເພື່ອນໄປແລ້ວມີແຕ່ຈິ່ງໄວ້ເງົາຮູບພູຊູຊານ,ຖ້າວ່າຍາດມິດຢູ່ລົກຢາງຖາມສະພາບການຂອງຂ້ອຍ,ກໍບອກໃຫ້ວ່າຂ້ອຍແຈ້ງຄືນ້ຳກ້ອນຢູ່ໃນຫມໍ້ກາ.

绘图 / 刘金昆

# 开卷有益 ເປີດຕຳລາມີຜົນປະໂຫຍດ

ຕົ້ນລາດສະວົງຊົ່ງ, ເຈົ້າຊີວິດຈາວກວາງອີໄດ້ອອກຄຳສັ່ງໃຫ້ລີຟັງເຊິ່ງເປັນເສນາອາມາດຮຽບຮຽງສາລະນຸກົມເຫຼັ້ມໜຶ່ງຊຶ່ງປະກອບມີເນື້ອໃນຫຼາກຫຼາຍ ແລະ ແບ່ງປະເພດເອີ້ນວ່າ-- 《ປະມວນລວມທາຍຜິງ》.

ໃນປຶ້ມສະໝຸດເຫຼັ້ມນີ້ໄດ້ບັນທຶກເນື້ອໃນທີ່ສຳຄັນຂອງປຶ້ມບູຮານມານັບ 1600 ກ່ວາຊະນິດ. ໃນນີ້ໄດ້ແບ່ງອອກເປັນ 55 ປະເພດ. ແລະລວມທັງໝົດເຖິງ 1000 ຫົວ. ຊຶ່ງມັນເປັນປຶ້ມສະໝຸດອັນລ້ຳເລີດແລະມີຄຸນຄ່າທີ່ສຳຄັນ.

ສະໝຸດດັ່ງກ່າວຊຶ່ງແມ່ນເຈົ້າຊີວິດຊົ່ງທາຍຜິງໃນຕົ້ນໄລຍະການສ້າງຕັ້ງລາດສະວົງຊົ່ງແຕ່ງຂຶ້ນ. ດັ່ງນັ້ນສະໝຸດເຫຼັ້ມນີ້ຈຶ່ງໄດ້ໃສ່ຊື່ເລື່ອງວ່າ: 《ປະມວນລວມທາຍຜິງ》 ສຳລັບສະໝຸດເຫຼັ້ມໃຫຍ່ເຫຼັ້ມນີ້, ຢ່າງໜ້ອຍເຈົ້າຊີວິດຊົ່ງທາຍຈຸງຕ້ອງໄດ້ອ່ານ 2-3 ຫົວໃນແຕ່ລະວັນ, ເຊິ່ງໃນປີໜຶ່ງທ່ານໄດ້ອ່ານຈົບໝົດ. ຫຼັງຈາກນັ້ນຕໍ່ມາຈຶ່ງໃສ່ຊື່ໃໝ່ຂອງສະໝຸດດັ່ງກ່າວນີ້ວ່າ: 《ເຈົ້າຊີວິດທາຍຜິງພະທີ່ອ່ານ》 ໃນວາລະຊົ່ງທາຍຈຸງທີ່ໄດ້ຕັດສິນໃຈໃຊ້ເວລາກັບການອ່ານສະໝຸດດັ່ງກ່າວນັ້ນກໍມີຄົນເຫັນວ່າເຈົ້າຊີວິດຕ້ອງໄດ້ໃຊ້ເວລາມາແກ້ໄຂວຽກບ້ານການເມືອງຢ່າງມະຫາສານພ້ອມໆກັບການອ່ານປຶ້ມສະໝຸດນີ້ອີກ, ເຫັນວ່າຄົງອິດເມື່ອຍລຳບາກຫຼາຍ, ກໍເລີຍຕັດສິນໃຈໄປຕັກບອກກັບທ່ານໃຫ້ຫຼຸດຜ່ອນການອ່ານໜັງສື, ເພື່ອຫຼຸດຜ່ອນຄາຍຄວາມອິດເມື່ອຍເກີນຄວນ, ກໍບໍ່ແມ່ນວ່າຈະອ່ານໃນແຕ່ລະວັນກໍໄດ້.

ແຕ່ວ່າຊົ່ງທາຍຈຸງກໍໄດ້ຕອບຄືນໄປວ່າ: ພະອົງເປັນຄົນມັກອ່ານໜັງສື, ໃນການອ່ານປຶ້ມສະໝຸດຈະສາມາດຊອກເຫັນໄດ້ເຖິງຄວາມສະໜຸກສະໜານເປັນປະຈຳ, ໃນການອ່ານໜັງສືຫຼາຍໆນັ້ນ, ມັນຕ້ອງໃຫ້ຄວາມຮູ້ແລະຜົນປະໂຫຍດ, ເວົ້າແທ້ພະອົງກໍບໍ່ຮູ້ສຶກວ່າອິດເມື່ອຍກັບມັນດ້ວຍຊ້ຳ.

ດັ່ງນັ້ນ, ພະອົງຍັງໄດ້ສືບຕໍ່ອ່ານປຶ້ມນີ້ລະສາມຫົວ. ບາງຄັ້ງທ່ານໄດ້ລືມອ່ານມັນເພາະວ່າວຽກງານຂອງປະເທດຊາດຫຼາຍ, ຈຳເປັນທ່ານກໍຕ້ອງຊອກຫາເວລາອ່ານເພີ່ມຕື່ມອີກເພື່ອທົດແທນຄືນ, ແລະເພິ່ນກໍຍັງໄດ້ເວົ້າກັບບັນດາຜູ້ຄົນອ້ອມຂ້າງເລີຍໆວ່າ: "ຖ້າຫາກວ່າໄດ້ເປີດສະໝຸດຍາມໃດມັນຕ້ອງມີຜົນປະໂຫຍດ."

ຍ້ອນວ່າພະອົງຊົ່ງທາຍຈຸງເພິ່ນໄດ້ອ່ານສະໝຸດ 《ເຈົ້າຊີວິດທາຍຜິງພະທີ່ອ່ານ》 ວັນລະສາມຫົວ, ຈະມີຄວາມຮູ້ກວ້າງຂວາງ, ມັນກໍສາມາດຊ່ວຍໃຫ້ທ່ານໄດ້ແກ້ໄຂວຽກບ້ານການເມືອງຢ່າງສະດວກສະບາຍ. ໃນສະໄໝນັ້ນບັນດາເສນາອາມາດຕ່າງໆເຫັນເຈົ້າຊີວິດຂອງຕົນດຸໝັ້ນໃນການອ່ານໜັງສື, ກໍໄດ້ພາກັນເອົາໃຈໃສ່ໃນການອ່ານໜັງສື, ເຊິ່ງມັນເປັນຈຸດເລີ່ມຕົ້ນຂອງການອ່ານໜັງສືຂອງຄົນໃນສະໄໝນັ້ນ. ສົມເດັດຈາວພູເຊິ່ງແມ່ນຄົນໜຶ່ງທີ່ບໍ່ມັກການອ່ານໜັງສືແຕ່ກໍໄດ້ອ່ານສະໝຸດ 《ລຸນອີ》 ຢ່າງຕັ້ງໃຈໂດຍທີ່ທ່ານນັ້ນບໍ່ຮູ້ອິດບໍ່ຮູ້ເມື່ອຍ, ຈົນກະທັ້ງມີຄຳຊ່າລືວ່າ: 《ປຶ້ມລຸນອີ》 ເຄິ່ງເຫຼັ້ມສາມາດປົກຄອງບ້ານເມືອງໄດ້, ຕໍ່ມາ "ເປີດສະໝຸດມີຜົນປະ ໂຫຍດ" ເຊິ່ງມັນໄດ້ກາຍເປັນສຸພາສິດຂອງພາສາຈີນທີ່ອຸປະມາວ່າເປີດສະໝຸດອ່ານໜັງສືຕ້ອງມີຜົນປະໂຫຍດ.





ຮູບຄົນຫີນກາສີລາວ

老挝卡西石人 摄影 杨 云


Welcome to Laos... Land of Timeless Beauty
Lao Airlines
ການບິນລາວ
Lao Airlines
The Beauty of Lao Hospitality